**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

***********************

# ບົດລາຍງານສະຫລູບປິດໂຄງການຍ່ອຍ



**ກະກຽມໂດຍໂຄງການຍ່ອຍ:** ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນປ່າໄມ້ ໃນ ປ່າປ້ອງກັນຂອງແຂວງ ນ້ຳອິນ - ພູຫີນເຫຼັກໄຟ ແບບມີສ່ວນຮ່ວມຂອງຊຸມຊົນ.

**ທົບທວນ-ກວດກາໂດຍ ວິຊາການຕິດຕາມ ແລະ ປະເມີນຜົນ:** ກອງທຶນປົກປັກຮັກສາສິ່ງແວດລ້ອມ

ວັນທີສົ່ງ:................................................

ວັນທີທົບທວນ:.......................................

ວັນທີສົ່ງບົດລາຍງານສຸດທ້າຍ ສະບັບເຊັນ:..................................................

## I. ຂໍ້ມູນທົ່ວໄປກ່ຽວກັບໂຄງການຍ່ອຍ

ເລກທີໂຄງການ : CBI-LENS2-016.

ຊື່ໂຄງການ: ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນປ່າໄມ້ ໃນ ປ່າປ້ອງກັນຂອງແຂວງ ນໍ້າອີນ - ພູຫີນເຫຼັກໄຟ ແບບມີສ່ວນຮ່ວມຂອງຊຸມຊົນ.

ທີ່ຕັ້ງໂຄງການ:ປ່າປ້ອງກັນ ນໍ້າອີນ-ພູຫີນເຫຼັກໄຟ.
ອົງການຈັດຕັ້ງປະຕິບັດ: ພະແນກກະສິກຳ ແລະ ປ່າໄມ້ (ພກປ) ແຂວງຄຳມ່ວນ.
ຖະໜົນ ....., ບ້ານ ຈອມເພັດ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ.

ໂທລະສັບ: 051 212042, ແຟັກ: 051 212391.
ຊື່ຫົວໜ້າໂຄງການ ແລະ ຂໍ້ມູນຕິດຕໍ່ ເບີໂທ ແລະ ອີເມວ:ທ້າວ ຟອງສະມຸດ ອິນຕະນາມ ວິຊາການກອງຄຸ້ມຄອງປ່າສະຫງວນ ແຂວງ.
Email : mouth_00@hotmail.com

ມືຖື: 020 23441558, ໂທລະສັບ: 051 212042, ແຟັກ: 051 212391.

---

ວັນທີເຊັນສັນຍາ : 23 ກຸມພາ 2018

| | | |
|---|---|---|
| ໄລຍະເວລາໂຄງການຕາມແຜນ: | ແຕ່ 01 ມັງກອນ 2018 | ຮອດ 31 ທັນວາ 2020 |
| ໄລຍະເວລາຈັດຕັ້ງປະຕິບັດຕົວຈິງ: | ແຕ່ 01 ມັງກອນ 2018 | ຮອດ 31 ມີນາ 2021 |
| ການຕໍ່ສັນຍາໂຄງການຄັ້ງຫລັງສຸດ: | ແຕ່ 01 ມັງກອນ 2021 | ຮອດ 31 ມີນາ 2021 |

ຈຳນວນຄັ້ງທີ່ຂໍຕໍ່ອາຍຸໂຄງການຍ່ອຍ: 03 ຄັ້ງ

ງົບປະມານທັງໝົດທີ່ອະນຸມັດ : 529,705 $

ງົບປະມານຕົວຈິງທັງໝົດທີ່ໄດ້ຮັບຈາກ ຄສລ2: 529,705 $

ລາຍຈ່າຍຕົວຈິງທັງໝົດ: 529,705 $
ຍອດຄົງເຫລືອງົບປະມານ (ເປັນເງິນໂດລາ): 0 $

ໂຄງການຍ່ອຍ ຈະເຮັດຫຍັງກັບທຶນທີ່ເຫລືອ: (ໝາຍ ☑ ເອົາ 1 ທາງເລືອກ ລຸ່ມນີ້)

☑ ສົ່ງທຶນທີ່ເຫລືອຄືນໃຫ້ໂຄງການແມ່ ຄສລ2

☐ ນຳໃຊ້ເພື່ອຈຸດປະສົ່ງອື່ນໆ, ໃຫ້ລະບຸ______________________________________________

## II. ຜົນການຈັດຕັ້ງປະຕິບັດໂຄງການຍ່ອຍ

2.1. ວິເຄາະຈຸດປະສົງຂອງໂຄງການຍ່ອຍ ແລະ ສະຖານະຜົນສຳເລັດຂອງການຈັດຕັ້ງປະຕິບັດ.

ໃສ່ລາຍການ ຈຸດປະສົງ ຊຶ່ງກຳນົດໃນບົດສະເໜີໂຄງການທີ່ອະນຸມັດ ແລະສະຖານະຜົນສຳເລັດ:

| ຈຸດປະສົງຂອງໂຄງການຍ່ອຍ | ຄວາມຄືບໜ້າຕົວຈິງ ທີ່ບັນລຸໄດ້ ໃນຕອນທ້າຍຂອງໂຄງການຍ່ອຍ | ເຫດຜົນທີ່ບໍ່ສາມາດບັນລຸໄດ້ຕາມຈຸດປະສົງ |
|---|---|---|
| 1.ເພື່ອສ້າງຄວາມເຂັ້ມແຂງແກ່ພະນັງງານວິຊາການຂັ້ນແຂວງ,ເມືອແລະຊຸມຊົນໃນການຄຸ້ມຄອງປ່າປ້ອງກັນນ້ຳອືນ-ພູຫີນເຫຼັກໄຟໃຫ້ມີປະສິດທິພາບສູງ ແລະ ຮັບປະກັນທາງດ້ານຊີວິດການເປັນຢູ່ຂອງຊຸມຊົນທີ່ຢູ່ອ້ອມຂ້າງປ່າປ້ອງກັນໃຫ້ດີຂື້ນຢ່າງຕໍ່ເນື່ອງ ແລະ ມີຄວາມຍືນຍົງ. | - ຜ່ານການຈັດຕັ້ງປະຕິບັດໂຄງການ ຕັ້ງແຕ່ເລີ່ມຕົ້ນມາຮອດໄລຍະທ້າຍຂອງໂຄງການ ສາມາດບັນລຸຈຸດປະສົງທີ່ວາງໄວ້ຄື: ພະນັກງານຂັ້ນແຂວງ, ເມືອງ ແລະ ຄູ່ຮ່ວມງານໄດ້ຮັບການຝຶກອົບຮົມໄລຍະສັ້ນ ແລະ ໄປທັດສະນະສຶກສາຖອດຖອນບົດຮຽນດ້ານວິຊາການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ຢູ່ທາງພາຍໃນ ແລະ ຕ່າງ ປະເທດ ຈຳນວນທັງໝົດ 18 ຄັ້ງ 141 ເທື່ອຄົນ. ເຮັດໃຫ້ພະນັກ ງານມີຄວາມອາດສາມາດໃນການປະສານງານ ແລະ ການຄຸ້ມຄອງປ່າສະຫງວນດີຂື້ນ. ໂດຍສະເພາະການຈັດສັນເຂດປ່າປ້ອງກັນ ເຂດຫວງຫ້າມ, ເຂດຄຸ້ມຄອງນຳໃຊ້ ແລະ ປັກຫຼັກໝາຍຢ່າງຈະແຈ້ງ, ການກວດກາລາດຕະເວນໂດຍໃຊ້ໂປແກມສະມາດໃນການເກັບກຳຂໍ້ມູນ ແລະ ໂຄສະນາເຜີຍແຜ່ປູກຈິດສຳນຶກດ້ານການອະນຸລັກ.<br>- ປະຊາຊົນໃນ 2 ເມືອງ 19 ບ້ານອ້ອມຂ້າງປ່າປ້ອງກັນ ໄດ້ຮັບຮູ້ຂອບເຂດປ່າປ້ອງກັນ ແລະ ຄວາມສຳຄັນຂອງປ່າໄມ້, ສັດນ້ຳ ແລະ ສັດປ່າເນື່ອງຈາກການໂຄສະນາເຜີຍແຜ່ປູກຈິດສຳນຶກດ້ວຍຫຼາຍຮູບແບບ ແລະ ໄດ້ຮັບທຶນສະໜັບສະໜູນກິດຈະກຳພັດທະນາຊີວິດການເປັນຢູ່ຕິດພັນກັບຂໍ້ຕົກລົງວ່າດ້ວຍການອະນຸລັກ ຊຸມຊົນໄດ້ມີສ່ວນຮ່ວມໃນການປະຊຸມປຶກສາຫາລື, ການວາງແຜນ, ການກວດກາລາດຕະເວນ ແລະ ການລາຍງານ ເຮັດໃຫ້ຫຼາຍຄອບຄົວໄດ້ມີວຽກເຮັດງານທຳ, ມີລາຍຮັບເພີ່ມຂື້ນ ໂດຍສະເພາະແມ່ນຄອບ ຄົວທີ່ມີລາຍຮັບໜ້ອຍທີ່ອາໃສປ່າໄມ້ ໄດ້ຫຼຸດຜ່ອນການໄປຊົມໃຊ້ຊັບພະຍາ ກອນປ່າໄມ້ ບັນຫາໄພຂົ່ມຂູ່ຕໍ່ປ່າໄມ້ໃນເຂດປ່າປ້ອງກັນ ແລະການຄ້າຂາຍສັດປ່າແມ່ນຫຼຸດລົງ. | |
| 2. | | |

2.2. ວິເຄາະຜົນໄດ້ຮັບຫຼັກ ຂອງໂຄງການຍ່ອຍ ແລະ ສະພາບຜົນສຳເລັດ.

ໃສ່ລາຍການ ຜົນໄດ້ຮັບຫຼັກ ຊຶ່ງກຳນົດໃນບົດສະເໜີໂຄງການທີ່ອະນຸມັດ ແລະສະຖານະຜົນສຳເລັດ:

| ຜົນໄດ້ຮັບຫຼັກຂອງໂຄງການຍ່ອຍ | ຕົວຊີ້ວັດຜົນໄດ້ຮັບຫຼັກ ທີ່ບັນລຸໄດ້ ໃນຕອນທ້າຍຂອງໂຄງການຍ່ອຍ | ເຫດຜົນທີ່ບໍ່ສາມາດບັນລຸໄດ້ ຜົນໄດ້ຮັບ ທີ່ກຳນົດ |
|---|---|---|
| 1. ພື້ນທີ່ໃນເຂດປ່າປ້ອງກັນ ນ້ຳອືນ - ພູຫີນເຫຼັກໄຟ ໄດ້ຮັບການປັບປຸງການປົກປັກຮັກສາດ້ານຊີວະນາໆພັນ ວັດແທກໂດຍ ຄະແນນຂອງປະສິດທິຜົນ | ຈາກຜົນກອງປະຊຸມປະເມີນການຄຸ້ມຄອງປ່າປ້ອງກັນນ້ຳອືນ-ພູຫີນເຫຼັກໄຟ ວັດດ້ວຍເຄື່ອງມືທີ່ມີປະສິດທິພາບ(METT) ມີພາກສ່ວນທີ່ກ່ຽວຂ້ອງເຂົ້າ ໃນວັນທີ 15 ກຸມພາ 2021 ໄລຍະທ້າຍຂອງ | |

| | | |
|---|---|---|
| ການຄຸ້ມຄອງ (ຄະແນນ ) ຈະເພີ່ມຂຶ້ນຫຼາຍກ່ວາ 10 | ໂຄງການ ໄດ້ໃຫ້ຄະແນນຕາມແບບຟອມ 30 ຂໍ້ ມີຄະແນນທັງໝົດໄດ້ 40 ເຫັນວ່າການຄຸ້ມຄອງປ່າປ້ອງກັນ ດັ່ງກ່າວມີຄະແນນເພີ່ມຂຶ້ນ 32 ຄະແນນ ຈາກ 8 ຄະແນນໃນຂໍ້ມູນພື້ນຖານ ຫົວຂໍ້ທີ່ຄະແນນເພີ່ມຂຶ້ນມີຂໍ້ 1,2,3,4,6,7,8,10,12,21,24,26,27 ແລະ 30ເຫັນວ່າມີການຄຸ້ມຄອງໄດ້ດີຂຶ້ນສາມາດບັນລຸຕາມຄາດໝາຍເນື່ອງຈາກວ່າມີລະບຽບການຄຸ້ມຄອງ ແລະ ປະຕິບັດລະບຽບການ, ການໂຄສະນາເຜີຍແຜ່ແຕ່ການຄຸ້ມຄອງດັ່ງກ່າວຍັງມີຄວາມຈຳກັດດ້ານອຸປະກອນຮັບໃຊ້,ງົບປະມານທີ່ບໍ່ຍືນຍົງ ແລະ ການມີສ່ວນຮ່ວມປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຊຸມຊົນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ.ໃນຕໍ່ໜ້າແມ່ນສ້າງກົນໄກການເງິນແບບຍືນຍົງ, ພັດທະນາແຫຼ່ງທ່ອງທ່ຽວແບບອະນຸລັກ, ຫາແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອຄຸ້ມຄອງຕາມແຜນທີ່ວາງໄວ້. | |
| 2.ຄະແນນຄວາມສາມາດໃນການເຄື່ອນ ໄຫວຂອງທີມງານ ຄຸ້ມຄອງປ່າປ້ອງກັນ ນໍ້າອີນ-ພູທີນເຫຼັກໄຟ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ(ສະສົມ) ເພີ່ມຂຶ້ນຢ່າງໜ້ອຍ | ໃນຄັ້ງວັນທີ່ 16 ກຸມພາ 2021 ຈັດກອງປະຊຸມປະເມີນດັດສະນີສະສົມຄວາມສາມາດຂອງພະນັກງານກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ໃນການຄຸ້ມຄອງປ່າສະຫງວນ ຢູ່ພະແນກກະສິກຳ ແລະ ປ່າໄມ້ແຂວງຄໍາມ່ວນ ມີພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ ຜ່ານການປະເມີນດັດສະນີຄວາມສາມາດຂອງພະນັກງານ ເຫັນວາມີຄະ ແນນເພີ່ມຂຶ້ນຈາກ 14 ໂດຍພື້ນຖານ ເປັນ 40 ໃນໄລຍະທ້າຍຂອງໂຄງການສາມາດບັນລຸຕາມຄາດໝາຍຄື: ບັນລຸ ຕາມແຜນທີ່ວາງໄວ້ 38 ເປີເຊັນ ເຊິ່ງມັນສະແດງໃຫ້ເຫັນດັ່ງນີ້ : 1.)ພະແນກກະສິກຳ ແລະ ປ່າໄມ້ ມີພະນັກງານດີພໍຄວນ (25) ທີ່ໄດ້ຮັບການຝຶກອົບຮົມດີ ທັງສາມາດຝຶກອົບຮົມໄດ້, 2.) ມີຄະນະກຳມະການປ່າສະຫງວນ ແລະ ການຈັດຕັ້ງການຄຸ້ມຄອງປ່າສະຫງວນ (ສຳລັບ 1 ແຫ່ງ)ທີ່ມີການດຳເນີນດີພໍຄວນ,ພິວພັນຄະນະກຳມະ ການສິ່ງແວດລ້ອມຂັ້ນແຂວງໄດ້ເປີດກອງປະຊຸມປຶກສາຫາລືຮ່ວມກັນບາງຄັ້ງທີ່ກ່ຽວພັນກັບປ່າສະຫງວນ ໂດຍມີການ ຈັດຕັ້ງການຄຸ້ມຄອງປ່າສະຫງວນ, 3.) ມີຂັ້ນຕອນການປະສານງານ ສຳລັບລະດັບຂັ້ນຕ່າງໆ ແລະ ຜູ້ປະຕິບັດງານຮ່ວມ ກັບລະບຽບແບບແຜນລາຍເປັນຈຳນວນຫນຶ່ງ, ແຕ່ຍັງບໍ່ມີຖານຂໍ້ມູນ ແລະ ຕານ່າງການເຮັດວຽກເທື່ອ,4.) ມີບຸກຄະລາກອນພຽງພໍ, ລວມທັງການເງິນ ແລະ ເຄື່ອງມືຮັບໃຊ້ຕ່າງໆ ແລະ | |

| | | |
|---|---|---|
| | ມີພະນັກງານວິຊາການທີ່ອຸທິດໃຫ້ແກ່ການອະນຸລັກ ໂດຍຜ່ານການຄຸ້ມຄອງປ່າະຫງວນ ດ້ອຍງົບປະຕິບັດງານແລະການລົງທຶນຈໍານວນນ້ອຍ. ໃນສາມຂອງເຂດພື້ນທີ່ອະນຸລັກໄດ້ຮັບທຶນ ແຕ່ວ່າສຸດແລ້ວແຕ່ຜູ້ໃຫ້ທຶນ,5.) ມີກອບກົດໝາຍ, ມີລະບຽບການຕ່າງໆເພື່ອປ້ອງກັນປ່າໄມ້ ແລະ ສັດປ່າແລ້ວ, ແຕ່ຢ່າງໃດກໍຕາມຍັງມີບາງປັດໃຈທີ່ຍັງກີດຂວາງຢູ່ ຊຶ່ງເຮັດໃຫ້ການບັງຄັບໃຊ້ກົດໝາຍ ຊຶ່ງເຮັດໃຫ້ການບັງຄັບໃຊ້ກົດໝາຍຍັງບໍ່ມີປະສິດທິຜົນດີພໍ. ມີສິດ ແລະ ພາລະບົດບາດທີ່ຈະແຈ້ງຕາມລະບຽບ-ກົດໝາຍ ແຕ່ຍັງມີບັນຫາໃນການຈັດຕັ້ງປະຕິບັດຕົວຈີງ, 6.) ມີແຜນຍຸດທະສາດ ແລະ ແຜນຈັດຕັ້ງປະຕິບັດ ພ້ອມແຜນວຽກປະຈໍາປີ ແລະ ຂັ້ນຕອນການຈັດຕັ້ງປະ ຕິບັດ ແຕ່ວ່າມັນຍັງບໍ່ທັນປະສົມປະສານແຜນການຂອງພາກສ່ວນອື່ນ, 7.)ມີການຊີ້ນໍາຢ່າງດີດ້ານວຽກງານອະນຸລັກຈາກອົງການຈັດຕັ້ງລະດັບແຂວງ, ຄະນະກໍາມະການສິ່ງແວດລ້ອມຂັ້ນແຂວງໄດ້ພິຈາລະນາເປັນວາລະຂອງໜ້າວຽກທີ່ສໍາຄັນ ແລະ ຕ້ອງໄດ້ລະດົມທຶນເພື່ອສະໜັບສະໜູນໃນວຽກນີ້, 8.) ຂັ້ນຕອນການປະຕິບັດດ້ານວິຊາການສ່ວນຫຼາຍໄດ້ຖືກກໍານົດ ແລະ ເປັນບູລິມະສິດ, ຄູ່ມືໄດ້ຖືກກະກຽມໃນລະດັບຊາດ ເຊັ່ນ: ກົມປ່າໄມ້. | |
| 3. ພະນັກງານ ກຄປປ ແຂວງຄໍາມ່ວນ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງທີ່ໄດ້ຮັບການຝຶກອົບຮົມ ຫລັກສູດສາມັນ ໄລຍະສັ້ນ ຫຼື ເຂົ້າຮ່ວມໃນການທັດສະນະສຶກສາ (ໃນນັ້ນມີເພດຍິງ 20 ) | ພະນັກງານ ກຄປປ ແລະ ຄູ່ຮ່ວມງານໄດ້ຝຶກອົບຮົມໄລຍະສັ້ນ ແລະ ໄປທັດສະນະສຶກສາທັງພາຍໃນ ແລະ ຕ່າງປະເທດຄື: ຝຶກອົບຮົມ ປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ 10 ຄົນ,ຝຶກອົບຮົມຄຸ້ມຄອງໂຄງການ 12 ຄົນ, ຝຶກອົບຮົມລາດຕະເວນ ແລະ ນໍາໃຊ້ສະມາດ 08 ຄົນ, ຝຶກອົບຮົມວຽກພັດທະນາຊີວິດການເປັນຢູ່ຂອງຊຸມຊົນ 4 ຄົນ, ຝຶກອົບຮົມການນໍາໃຊ້ທີ່ດິນ ແລະ ປ່າໄມ້ 11 ຄົນ, ຝຶກອົບຮົມໂຄສະນາ ແລະ ປູກຈິດສໍານຶກ 18 ຄົນ,ຝຶກອົບຮົມການປະເມີນເຄື່ອງມືທີ່ມີປະສິດທິຜົນ (METT) 5 ຄົນ, ທັດສະນະສຶກສາ ພາຍໃນ ແລະ ຕ່າງປະເທດ 51 ຄົນ, ຝຶກອົບຮົມສ້າງຄວາມເຂັ້ມ ແຂງດ້ານການວາງແຜນ,ການຕິດຕາມ ແລະ ປະເມີນຜົນ 22 ຄົນ, , ລວມທັງໝົດ 141 ຄົນ,ມີເພດຍິງ 35 ຄົນ,ເທົ່າກັບ 25 ແລະ ໄດ້ໃຊ້ຄວາມຮູ້ບົດຮຽນຈາກການຝຶກອົບຮົມເຂົ້າໃນການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ໄດ້ໃນລະດັບດີຂຶ້ນ. | |

| | | |
|---|---|---|
| 4. ແຜນການຄຸ້ມຄອງປ່າປ້ອງກັນ ນ້ຳອີນ-ພູຫີນເຫຼັກໄຟເຊິ່ງຈະໄດ້ຮັບການພັດທະນາຂື້ນໂດຍ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ຮ່ວມກັບຜູ້ມີສ່ວນຮ່ວມ ແລະ ມີກອງປະຊຸມ ແລະການປຶກສາຫາລື ຢູ່ຂັ້ນເມືອງ ແລະ ບ້ານ ໂດຍຜ່ານວິທີການແບບມີສ່ວນຮ່ວມ. | ໄດ້ປຶກສາຫາລືເພື່ອຄວາມເປັນເອກະພາບຮ່ວມກັບກົມປ່າໄມ້ ໃນການປັບປຸງຮ່າງແຜນຄຸ້ມຄອງປ່າປ້ອງກັນນ້ຳອີນ-ພູຫີນເຫຼັກໄຟ ໄລຍະ 5 ປີ 2021-2025 ຢູ່ທີ່ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ເຊິ່ງມີຫົວໜ້າພະແນກ,ຊ່ຽວຊານທີ່ປຶກສາ,ຫົວໜ້າກອງ,ສ່ວນທີ່ກ່ຽວຂ້ອງ,ວິຊາການ ຈາກກົມປ່າໄມ້ ແລະ ແຂວງເຂົ້າຮ່ວມ ແລະ ໄດ້ຈັດກອງປະຊຸມຜ່ານແຜນໃນລະດັບແຂວງ ວັນທີ 12 ກຸມພາ 2021 ເຊິ່ງມີຜູ້ເຂົ້າຮ່ວມ 36 ຄົນ ຍິງ 5 ຄົນ ,ປະຈຸບັນແມ່ນໄດ້ຖືກຮັບຮອງ ຈາກທ່ານເຈົ້າແຂວງຕາມຂໍ້ຕົກລົງສະບັບເລກທີ 684/ຈຂ,ລົງວັນທີ 14 ມິຖຸນາ 2021. | |
| 5.ຈຳນວນບ້ານຢູ່ພາຍໃນ ຫຼື ຢູ່ອ້ອມຂ້າງ ປ່າປ້ອງກັນນ້ຳອີນ-ພູຫີນເຫຼັກໄຟ ຊຶ່ງເປັນຜູ້ໄດ້ຮັບຜົນປະໂຫຍດໂດຍກົງ ໃນການປັບປຸງຊີວິດການເປັນຢູ່ ຫຼື ທຶນຊ່ວຍເຫລືອສຳລັບການອະນຸລັກ ໄດ້ປະຕິບັດຕາມແຜນ ແລະ ຂໍ້ຕົກລົງອະນຸລັກ (ປະຈຳປີສຸດທ້າຍ ) | ໄດ້ສຳເລັດສ້າງແຜນພັດທະນາບ້ານ ແລະ ສະໜັບສະໜູນທຶນກິດຈະກຳພັດທະນາຊີວິດການເປັນຢູໃຫ້ບ້ານ 08 ບ້ານ. ມູນຄ່າທັງໝົດປະມານ 992,000,000 ກີບ ເພື່ອພັດທະນາກິດຈະກຳສ້າງນ້ຳປາປາຊຸມຊົນ 2 ແຫ່ງ,ກິດຈະກຳລ້ຽງງົວ 120 ຄອບຄົວ,ກິດຈະກຳກອງທຶນແມ່ຍິງ 150 ຄອບຄົວ, ກິດຈະກຳແນວພັນເຂົ້າ 506 ຄອບຄົວ,ກິດຈະກຳລ້ຽງແບ້ 31 ຄອບຄົວ,ຄົມມະນາຄົມນັກຮຽນ (ເຮືອພ້ອມຈັກ 2 ລຳ ),ກິດຈະກຳນ້ຳປາປາຊຸມຊົນ 2 ບໍ່, ກິດຈະກຳຕອບໂຕໄພພິບັດ 2 ຫຼັງ ແລະ ປັບປຸງວັງສະຫງວນ 7 ແຫ່ງ,ເຊິ່ງສາມາດສົ່ງເສີມ ຄອບຄົວທຸກຍາກ, ກຸ່ມບຸກລຸກປ່າໄມ້ ໃຫ້ຊຸມຊົນມີລາຍຮັບໃຫ້ດີຂຶ້ນ ແລະ ຫຼຸດຜ່ອນການທຳລາຍປ່າໄມ້ ຕາມສັນຍາອະນຸລັກ ບາດກ້າວຕໍ່ໄປ ແມ່ນສືບຕໍ່ຕິດຕາມຊຸກຍູ້ ແລະ ປະເມີນຜົນ ຄຸ້ມຄອງໃຫ້ດີຂຶ້ນປະຊາຊົນໄດ້ມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ຫຼາຍຂຶ້ນ ໂດຍສະເພາະ ຫຼຸດຜ່ອນການເຂົ້າໄປຕັດໄມ້, ການລ່າສັດ, ການເກັບກູ້ເຄື່ອງປ່າຂອງດົງ ແລະ ບັນຫາໄຟໄໝ້ປ່າຫຼຸດໜ້ອຍລົງ. | |
| 6 : ແມ່ຍິງມີສ່ວນຮ່ວມໃນການຄຸ້ມຄອງກອງທຶນພັດທະນາປັບປຸງຊີວິດການເປັນຢູ່ຂອງບ້ານ 8 ບ້ານເປົ້າໝາຍຈຳນວນ 40 ເປີເຊັນ | ໄດ້ມີການຄັດເລືອກ ແລະ ແຕ່ງຕັ້ງຄະນະກຳມະການຄຸ້ມຄອງກອງທຶນພັດທະນາບ້ານ ຈຳນວນ 8 ບ້ານ ເຊິ່ງມີຄະນະກຳມະການຄຸ້ມຄອງກອງທຶນບ້ານລະ 12 ຄົນ ໂດຍເຮັດຂໍ້ຕົກລົງຂອງທ່ານເຈົ້າເມືອງໆ ຍົມມະລາດ ແລະ ເມືອງບົວລະພາ ເຊິ່ງມີແມ່ຍິງເຂົ້າຮ່ວມເປັນຄະນະກຳມະການ 40 ເປັນເຊັນ. | |
| 7. ພື້ນທີ່ພາຍໃນປ່າປ້ອງກັນ ນ້ຳອີນ - ພູຫີນເຫຼັກໄຟ ເຊິ່ງມີການປະເມີນສະຖານະພາບຂອງປະຊາກອນ | ການກວດກາລາດຕະເວນໃນເຂດປ່າປ້ອງກັນແຂວງນ້ຳອີນ-ພູຫີນເຫຼັກໄຟ ໃນພື້ນທີ່ 16.000 ຮຕ ເພື່ອສະກັດກັ້ນໄພຂົ່ມຂູ່ທີ່ມີຕໍ່ຊີວະນາໆພັນ ແລະ | |

| | | |
|---|---|---|
| ປະເພດສັດປ່າ ແລະ ໄພຂົ່ມຂູ່ ຈາກການກວດກາລາດຕະເວນ | ເກັບກຳຂໍ້ມູນຕ່າງໆທີ່ພົບເຫັນໂດຍການນຳໃຊ້ແບບຟອມບັນທຶກຂໍ້ມູນ SMART ພ້ອມອຸປະກອນຮັບໃຊ້ທາງວິຊາການ,ການລາດຕະເວນຕົວຈິງແມ່ນໄດ້ພົບເຫັນ 143 ຈຸດ ໃນນັ້ນປະກອບມີ : ຕັດໄມ້ 7 ຈຸດ,ຈູດໄມ້ 6 ຈຸດ,ໄມ້ຫັກ 2 ຈຸດເຕົາໄຟເກົ່າ 8 ຈຸດ,ແຄມເກົ່າ 8 ຈຸດ,ແຮ້ວ 84 ຈຸດ ແລະ ຮອຍຮ້ອຍສັດ 28 ຈຸດ ເຊິ່ງມີ ຮ້ອຍສັດ,ຍິນສຽງ (ຟານ,ໄກ່ປ່າ,ເຫັງນ,ລີນ,ລີງ,ນົກເປົ້າ,ເຕົ່າ ) | |
| 8. ພື້ນທີ່ພາຍໃນປ່າປ້ອງກັນ ນ້ຳອີນ - ພູຫີນເຫຼັກໄຟ ສະຖານະພາບຂອງພື້ນທີ່ປ່າໄມ້ຖືກສູນເສຍ ໄດ້ຮັບການສຳຫຼວດກວດກາ. | ຜົນໄດ້ຮັບຈາກການປະເມີນການນຳໃຊ້ທີ່ດິນ (2015-2020) ມີ 9 ປະເພດ ທີ່ດິນ ແລະ ປ່າໄມ້ (ໂດຍການປະເມີນຈາກກົມປ່າໄມ້).<br>1) ໃນປີ 2015, ເນື້ອທີ່ທັງໝົດຂອງປ່າປະສົມມີຈຳນວນ 7.858,92 ເຮັກຕາ, ໃນນັ້ນ ປີ 2020 ໄດ້ຖືກຫັນປ່ຽນເປັນ ປ່າໂຄກພຽງແຕ່ 0,01 ຮຕ. ການຄາດຄະເນການປ່ຽນແປງຂອງ ປະເພດປ່າດັ່ງກ່າວ ກໍຄື ເນື້ອທີ່ຄວາມປົກຫຸ້ມຂອງປ່າປະສົມ ແມ່ນສາມາດຮັກສາໄດ້ ຫລື ບໍ່ມີການປ່ຽນແປງ.<br>2) ເນື້ອທີ່ທັງໝົດຂອງປ່າໂຄກ ມີຈຳນວນ 3.78 ຮຕ ໃນປີ 2015 ຊຶ່ງເຫັນວ່າມີການເພີ່ມຂຶ້ນຈຳນວນໜຶ່ງ0,5 ເຮັກຕາ; ໂດຍລວມ ເນື້ອທີ່ປະເພດປ່າດັ່ງກ່າວໄດ້ເພີ່ມຂຶ້ນຈາກການປ່ຽນແປງຂອງປ່າຕໍ່າ ແລະ ພື້ນທີ່ກະສິກຳອື່ນໆ. ຕາມການຄາດຄະເນວ່າໃນເມື່ອກ່ອນ ການປະເມີນຄວາມປົກຫຸ້ມປ່າໄມ້ (2015-2020) ແມ່ນໄດ້ເພີ່ມຂຶ້ນ ຍ້ອນການສູນເສຍຫລືການປ່ຽນແປງຂອງປະເພດປ່າອື່ນ ໂດຍສະເພາະ ປ່າຕໍ່າ ແລະ ເຂດກະສິກຳ.<br>3) ເນື້ອທີ່ທັງໝົດຂອງ "ປ່າໄມ້ຕໍ່າ,ປ່າຟຸມເຂດຝາຫີນ" ເຫັນວ່າ ບໍ່ມີການປ່ຽນແປງຈາກ 4.192,56 ເຮັກຕາ ໃນປີ 2015 ຮອດປີ 2020.<br>4) ເນື້ອທີ່ທັງໝົດຂອງ ດິນກະສິກຳ ມີ ປະມານ 0.44 ເຮັກຕາ ໃນປີ 2015 ເຊິ່ງເນື້ອທີ່ຈຳນວນນີ້ແມ່ນຫລຸດລົງ ກວມ 0 ເປີເຊັນໃນປີ 2020 ເຊິ່ງພື້ນທີ່ດັ່ງກ່າວໄດ້ຫັນປ່ຽນເປັນ ປ່າຕໍ່າ.<br>ໂດຍລວມ ການປ່ຽນແປງຄວາມປົກຫຸ້ມປ່າໄມ້ ໃນໄລຍະ 2015 ຫາ 2020 ແມ່ນມີຈຳນວນ 2.44 ເຮັກຕາ ປະມານ 71,34 ເປີເຊັນຂອງເນື້ອທີ່ປ່າໄມ້ທັງໝົດ ແລະ ເນື້ອທີ່ປ່າປົກຫຸ້ມ ເພີ່ມຂຶ້ນເປັນ 12.057,7 ເຮັກຕາ ຊຶ່ງເພີ່ມຂຶ້ນເປັນ 71.36 ເປີເຊັນ; ຂໍ້ມູນອັນສຳຄັນນີ້ມີຄວາມສຳຄັນຕໍ່ການຕັດສິນໃຈໃນ ການວາງແຜນຄຸ້ມຄອງ ໂດຍສະເພາະ | |

| | | |
|---|---|---|
| | ການຈັດອັນດັບຄວາມສຳຄັນ ເພື່ອກະກຽມ ຫຼື ປະເມີນຜົນໄດ້ຮັບ ຂອງ ໂຄງການຍ່ອຍ LENS2 ແລະ ກ້າວໄປສູ່ການຄຸ້ມຄອງປ່າສະຫງວນແຫ່ງຊາດ ແບບຍືນຍົງ. | |
| 9 : ກໍລະນີສິ່ງທີ່ເປັນໄພຄຸກຄາມຕໍ່ສັດປ່າ ໄດ້ກວດກາພົບເຫັນໂດຍທີມງານກວດກາລາດຕະເວນ, ໜ່ວຍງານປ່າປ້ອງກັນນ້ຳອີນ-ພູຫີນເຫຼັກໄຟ | ທີມງານລາດຕະເວນ ໄດ້ເຄື່ອນໄຫວກວດກາລາດຕະເວນພາຍໃນພື້ນທີ່ ປ່າປ້ອງກັນນ້ຳອີນ-ພູຫີນເຫຼັກໄຟ ເຊິ່ງມີການປະເມີນສະຖານະພາບຂອງສັດປ່າ ແລະ ໄພຄຸກຄາມ ໃນ ເນື້ອທີ່ 16,800 ເຮັກຕາ. ພົບເຫັນໄພຄຸກຄາມຕໍ່ປ່າໄມ້ ແລະ ສັດປ່າ 115 ກໍລະນີ ຄື: ຕັດໄມ້ ເກັບກູ້ເຄື່ອງປ່າຂອງດົງ , ລ່າສັດປ່າ(ແຮ້ວດັກສັດ, ແຄ່ມລ່າສັດ) ແລະ ໄຟໄໝ້ປ່າ ຜ່ານການຈັດຕັ້ງປະຕິບັດສາມາດບັນລຸຄາດໝາຍຕາມແຜນ ເຫັນວ່າເຮັດໃຫ້ກໍລະນີໄພຄຸກຄາມຕໍ່ສັດປ່າ ແລະ ປ່າໄມ້ຫຼຸດລົງ ເນື່ອງຈາກວ່າການລາດຕະເວນເປັນປົກກະຕິ, ມີການໂຄສະນາເຜີຍແຜ່ປູກຈິດສຳນຶກຢ່າງທົ່ວເຖິງ, ຊາວບ້ານມີສ່ວນຮ່ວມໃນການປົກປັກຮັກສາປ່າໄມ້ ເຮັດໃຫ້ກໍລະນີໄພຄຸກຄາມສັດປ່າຫຼຸດລົງໃນແຕ່ລະປີ. | |

## 2.3. ວິເຄາະຜົນໄດ້ຮັບຍ່ອຍ ຂອງໂຄງການຍ່ອຍ ແລະ ສະພາບຜົນສຳເລັດ.

**ໃສ່ລາຍການ ຜົນໄດ້ຮັບຍ່ອຍ ຊຶ່ງກຳນົດໃນບົດສະເໜີໂຄງການທີ່ອະນຸມັດ ແລະສະຖານະຜົນສຳເລັດ:**

| ຜົນໄດ້ຮັບຍ່ອຍຂອງໂຄງການຍ່ອຍ | ຕົວຊີ້ວັດຜົນໄດ້ຮັບຍ່ອຍ ທີ່ບັນລຸໄດ້ ໃນຕອນທ້າຍຂອງໂຄງການຍ່ອຍ | ເຫດຜົນທີ່ບໍ່ສາມາດບັນລຸໄດ້ ຕາມຜົນໄດ້ຮັບຍ່ອຍທີ່ກຳນົດ |
|---|---|---|
| **ອົງປະກອບທີ I. ສ້າງຄວາມສາມາດໃນການວາງແຜນຄຸ້ມຄອງ ປ່າປ້ອງກັນ Nam-In Phouhinleckfai** | | |
| 1.1: ສ້າງໜ່ວຍງານຄຸ້ມຄອງປ່າປ້ອງກັນນ້ຳອີນ - ພູຫີນເຫຼັກໄຟ ໂດຍນຳໃຊ້ພະນັກງານລັດ ແລະ ອາສາສະໝັກບ້ານໃຫ້ເປັນໜ່ວຍງານສະເພາະ ເພື່ອບໍລິຫານຈັດການໃຫ້ມີປະສິດຖິພາບ. | ສ້າງໜ່ວຍງານຄຸ້ມຄອງປ່າປ້ອງກັນນ້ຳອີນ - ພູຫີນເຫຼັກໄຟ ໂດຍນຳໃຊ້ພະນັກງານລັດ ແລະ ອາສາສະໝັກໃຫ້ເປັນໜ່ວຍງານສະເພາະ ເພື່ອບໍລິຫານຈັດການໃຫ້ມີປະສິດຖິພາບ.<br>- ເປົ້າໝາຍທີ່ຕັ້ງໄວ້ປະຈຳປີ: 1 ຄັ້ງ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 1 ຄັ້ງ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍ: ບັນລຸຕາມເປົ້າໝາຍ ເຊິ່ງໄດ້ມີການແຕ່ງຕັ້ງທີມງານລາດຕະເວນຂັ້ນແຂວງ,ເມືອງ ແລະ ບ້ານ ໄດ້ຮັບການສະໜັບສະໜູນທາງດ້ານຄູ່ ແລະ ງົບປະມານຈາກກົມປ່າໄມ້ 3 ຄັ້ງ (6 ຄົນ) ຝຶກສະເພາະການນຳໃຊ້ smart patrol,ຝຶກອົບຮົມລາດຕະເວນ ( 02 ຄົນ ນຳ ICBF),ແລະ ກໍ່ໄດ້ລົງສ້າງຕັ້ງໜ່ວຍທີມງານ | |

| | | |
|---|---|---|
| | ລາດຕະເວນຂັ້ນບ້ານອ້ອມປ່າປ້ອງກັນນ້ຳອິນ-ພູຫີນເຫຼັກໄຟ ຈຳນວນ 06 ຄົນ/ບ້ານ ທັງ ໝົດ 19 ບ້ານ ມີ 114 ຄົນ ຫຼັງຈາກນັ້ນກໍລົງເກັບກຳຂໍ້ມູນລາດຕະເວນເຂດພື້ນທີ່ເປົ້າໝາຍຂອງຕົນໄດ້ດີພໍສົມຄວນ. | |
| 1.2: ພະນັກງານປະຊາສຳພັນ ແລະ ຄູ່ຮ່ວມງານຂັ້ນເມືອງ ໄດ້ຮັບການຝຶກອົບຮົມວຽກງານການປະຊາສຳພັນຊຸມຊົນ | ຝຶກອົບຮົມໃນການໂຄສະນາເຜີຍແຜ່,ປູກຈິດສຳນຶກວຽກງານອະນຸລັກ ຊັບພະຍາກອນປ່າໄມ້.<br>- ເປົ້າໝາຍທີ່ຕັ້ງໄວ້ : 2 ຄັ້ງ ( 25 ຄົນ)<br>- ຂໍ້ມູນພື້ນຖານ : ບໍ່ທັນໄດ້ຝຶກ.<br>- ຜົນທີ່ໄດ້ຮັບຕົວຈິງ: 2 ຄັ້ງ ( 37ຄົນ)<br>ຕົວຊີ້ວັດຜົນໄດ້ຮັບດັ່ງກ່າວສາມາດບັນລຸລື່ນເປົ້າໝາຍທີ່ວາງໄວ້ຄື:ໄດ້ຮັບ ການສະໜັບສະໜູນທາງດ້ານຄູຝຶກຈາກກົມປ່າໄມ້ ເຊິ່ງພະນັກງານຂັ້ນແຂວງ ແລະ ເມືອງ ສາມາດນຳເອົາບົດຮຽນລົງໂຄສະນາເຜີຍແຜ່ຢູ່ໃນຊຸມຊົນ, ຕະຫຼາດ ແລະ ໂຮງຮຽນເຂດອ້ອມຂ້າງປ່າປ້ອງກັນ ໄດ້ເປັນຢ່າງດີ | |
| 1.3 ຈັດຝຶກອົບຮົມວຽກງານກອງທຶນໝູນວຽນ | ຈັດຝຶກອົບຮົມວຽກງານຄຸ້ມຄອງກອງທຶນໝູນວຽນເພື່ອພັດທະນາຊີວິດການເປັນຢູ່ຂອງປະຊາຊົນ<br>- ເປົ້າໝາຍທີ່ຕັ້ງໄວ້ : 3 ຄັ້ງ<br>- ຂໍ້ມູນພື້ນຖານ : ຍັງບໍ່ໄດ້ຝຶກ<br>- ຜົນທີ່ໄດ້ຮັບຕົວຈິງ 3 ຄັ້ງ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍທີ່ໄດ້ວາງແຜນ ເນື່ອງຈາກວ່າໄດ້ມີ ຄະນະຊີ້ນຳຂັ້ນເມືອງຍົມມະລາດ ແລະ ບົວລະພາ ພ້ອມທີມງານຄູຝຶກພາກັນລົງຝຶກອົບຮົມວຽກງານຄຸ້ມຄອງກອງທຶນ ໝູນວຽນໃຫ້ຄະນະກຳມະການຄຸ້ມຄອງກອງທຶນ ຢູ່ທີ່ບ້ານຫາດຊອນ ຈຳນວນ 45 ທ່ານ ຍິງ 4 ທ່ານ, ຝຶກອົບຮົມວຽກງານຄຸ້ມຄອງກອງທຶນໝູນວຽນ ຢູ່ທີ່ບ້ານກະຈາມໃຫ່ຍ ຈຳນວນ 20 ທ່ານ ຍິງ 2 ທ່ານ ແລະ ກໍໄດ້ຮັບການຝຶກອົບຮົມ ຈາກທີມງານກົມປ່າໄມ້,ຊ່ຽວຊານທີ່ປຶກສາ ອີກຈຳນວນ 15 ທ່ານ ດັ່ງນັ້ນຈຶ່ງເຮັດໃຫ້ການຄຸ້ມຄອງກອງທຶນໝູນວຽນຂອງແຕ່ລະບ້ານ ໄດ້ຈັດຕັ້ງປະຕິບັດດີຂື້ນ. | |
| 1.4 ຈັດຝຶກອົບຮົມ ການລ້ຽງສັດ, ຫັດຖະກຳ ແລະ ປູກຝັງແບບຍືນຍົງ (ສາລັບປະຊາຊົນ) | ຈັດຝຶກອົບຮົມ ການລ້ຽງສັດ, ຫັດຖະກຳ ແລະ ປູກຝັງແບບຍືນຍົງ (ສຳລັບປະຊາຊົນ)<br>- ເປົ້າໝາຍທີ່ຕັ້ງໄວ້: 3 ຄັ້ງ<br>- ຂໍ້ມູນພື້ນຖານ: ຍັງບໍໄດ້ຝຶກ<br>- ຜົນທີ່ໄດ້ຮັບຕົວຈິງ: 3 ຄັ້ງ | |

| | | |
|---|---|---|
| | ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: ເນື່ອງຈາກວ່າຫ້ອງການກະສິກຳ ແລະ ປ່າໄມ້ເມືອງຍົມມະລາດ ແລະ ບົວລະພາ ໄດ້ພາກັນລົງຝຶກອົບຮົມວຽກງານການລ້ຽງສັດ ແລະ ການປູກຝັງໃຫ້ປະຊາຊົນ ທັງໝົດ 103 ຄົນ ຍິງ 9 ຄົນ ສາມາດເຮັດໃຫ້ ປະຊາຊົນ ຮູ້ຈັກວິທີການລ້ຽງສັດ,ປູກຜັກສວນຄົວ ແລະ ການປ້ອງກັນຮັກສາສັດ ເຊິ່ງມັນສະແດງໃຫ້ເຫັນການເພີ່ມຂຶ້ນຂອງສັດລ້ຽງ ແລະ ສວນຜັກຕາມຄົວເຮືອນຂອງປະຊາຊົນ. | |
| 1.5 ຈັດທັດສະນະສຶກສາວຽກງານສົນຍາອະນຸລັກ(ສໍາລັບຄະນະການຈັດ ຕັ້ງບ້ານ) | ຈັດທັດສະນະສຶກສາວຽກງານສົນຍາອະນຸລັກ (ສາລັບຄະນະການຈັດຕັ້ງບ້ານ)<br>- ເປົ້າໝາຍທີ່ຕັ້ງໄວ້ປະຈໍາປີ 2 ຄັ້ງ<br>- ຂໍ້ມູນພື້ນຖານ<br>- ຜົນທີ່ໄດ້ຮັບຕົວຈິງ 2 ຄັ້ງ (51ເທື່ອຄົນ )<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: ໄດ້ນໍາພາປະຊາຊົນໄປທັດສະນະສຶກສາຢູ່ທີ່ອຸທິຍານແຫ່ງຊາດນາກາຍນໍ້າເທີນ ແລະ ຢູ່ທີ່ແຂວງວຽງຈັນ ເພື່ອສຶກສາຖອດຖອນບົດຮຽນກ່ຽວກັບສົນຍາອະນຸລັກໃຫ້ຄະນະການຈັດຕັ້ງບ້ານໄດ້ຮຽນຮູ້ການເຮັດສົນຍາອະນຸ ລັກຮ່ວມກັບຊາວບ້ານ, ການປູກຝັງ,ການລ້ຽງສັດ ແລະ ລະບຽບການສ້າງຕັ້ງວັງສະຫງວນ ເພື່ອມາພັດທະນາໃນການຄຸ້ມຄອງຊັບພະ ຍາກອນປ່າໄມ້,ສັດນໍ້າ-ສັດປ່າ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ. | |
| 1.6 ຈັດທັດສະນະສຶກສາໃຫ້ພະນັກງານ ແລະ ຄູ່ຮ່ວມງານ | ທັດສະນະສຶກສາຂອງພະນັກງານ ແລະ ຄູ່ຮ່ວມງານຢູ່ທີ່ອຸທິຍານແຫ່ງຊາດນໍ້າແອັດ-ພູເລີຍ<br>- ເປົ້າໝາຍທີ່ຕັ້ງໄວ້ປະຈໍາປີ 1 ຄັ້ງ<br>- ຂໍ້ມູນພື້ນຖານ<br>- ຜົນທີ່ໄດ້ຮັບຕົວຈິງ 1 ຄັ້ງ ( 34 ຄົນ )<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: ໄດ້ໄປທັດສະນະສຶກສາແລກປ່ຽນບົດຮຽນກ່ຽວກັບວຽກງານຄູ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ແບບມີສ່ວນຮ່ວມຂອງປະຊາຊົນບົດຮຽນທີ່ຖອດຖອນໄດ້ຄື: ວຽກງານການກວດກາລາດຕະເວນ,ວຽກງານການທ່ອງທ່ຽວເຊີງອະນຸລັກ ແລະ ການສົ່ງເສີມປະຊາຊົນແບບມີສ່ວນຮ່ວມໃນການອະນຸລັກ : ການສົ່ງເສີມປະຊາຊົນ ປູກກາເຟ ອາລາບີກາ ທີ່ບ້ານຫ້ວຍຕືນ ເມືອງຊອນ ແຂວງຫົວພັນເຫັນວ່າເປັນບົດຮຽນ ແລະ ເປັນແບບຢ່າງທີ່ດີ ເພື່ອ | |

| | | |
|---|---|---|
| | ຄຸ້ມຄອງປ່າປ້ອງກັນນ້ຳອິນ-ພູຫີນເຫຼັກໄຟ ແຂວງຄຳມ່ວນ. | |
| 1.7 ຈັດປະຊຸມຄະນະຊີ້ນຳໂຄງການຂັ້ນແຂວງ ແລະ ປະຊຸມປຶກສາຫາລືຂັ້ນເມືອງ ແລະ ຄູ່ຮ່ວມງານ, ເຄືອຂ່າຍ ແລະ ໂຄງການຍ່ອຍ | ຈັດປະຊຸມຄະນະຊີ້ນຳໂຄງການຂັ້ນແຂວງ ແລະ ປະຊຸມປຶກສາຫາລື ຂັ້ນເມືອງ, ຄູ່ຮ່ວມງານ, ເຄືອຂ່າຍ ແລະ ເຂົ້າຮ່ວມກອງປະຊຸມ ກປສ,ໂຄງການຍ່ອຍ.<br>- ເປົ້າໝາຍທີ່ຕັ້ງໄວ້: 6 ຄັ້ງ ( 2 ຄັ້ງປີ2018 ,2ຄັ້ງປີ2019,2ຄັ້ງ ປີ2020 ແລະ ອີກ 2 ຄັ້ງ ປີ2021 )<br>- ຂໍ້ມູນພື້ນຖານ<br>- ຜົນທີ່ໄດ້ຮັບຕົວຈິງ 8 ຄັ້ງ .<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື:ໄດ້ຈັດກອງປະຊຸມສຸະຫຼູບຜົນການຈັດຕັ້ງປະຕິບັດປະຈຳປີ ແລະ ວາງແຜນກິດຈະກຳໃນແຕ່ລະປີ ນອກນັ້ນຍັງໄດ້ມີການປະຊຸມປຶກສາຫາລື ແລະ ລາຍງານຜົນການຈັດຕັ້ງປະຕິບັດ 3 ເດືອນຮ່ວມກັບໂຄງການຍ່ອຍ,ຈັດກອງປະຊຸມເພື່ອອະນຸມັດແຜນຄຸ້ມຄອງປ່າປ້ອງກັນ ແລະ ຈັດກອງປະຊຸມປະເມີນເຄື່ອງມືທີ່ມີປະສິດທິພາບໃນການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ເຊິ່ງມັນສາມາດເຮັດໃຫ້ເປັນບົດຮຽນອັນໃຫ່ຍຫຼວງ ເພື່ອມາຈັດຕັ້ງປະຕິບັດໃນວຽກຂອງໂຄງການຕົ້ນເອງ | |
| **ອົງປະກອບ 2:ສະໜັບສະໜູນ ການວາງແຜນຄຸ້ມຄອງ ປ່າສະຫງວນ ແລະ ປ່າປ້ອງກັນ ແບບມີສ່ວນຮ່ວມ ແລະ ການຄຸ້ມຄອງ ປ່າປ້ອງກັນ Nam-In Phouhinleckfai** | | |
| 2.1: ລົງປະຊາສຳພັນປູກຈິດສຳນຶກກ່ຽວກັບການຄຸ້ມຄອງປ່າໄມ້ ຢູ່ຂັ້ນເມືອງ ແລະ ບ້ານ (ໂດຍຜ່ານການປະຊຸມບ້ານ, ວິທະຍຸທ້ອງຖິ່ນ, ປ້າຍ ຫລື ພາບໂຄສະນາ ແລະ ວັນສຳຄັນຕ່າງໆ). | ການປູກຈິດສຳນຶກໃນຫມູ່ບ້ານເປົ້າຫມາຍກ່ຽວກັບການແບ່ງເຂດນຳໃຊ້ທີ່ດິນ, ກົດລະບຽບບ້ານ ແລະ ການດຳລົງຊີວິດແບບຍືນຍົງ.<br>- ເປົ້າໝາຍທີ່ຕັ້ງໄວ້: 14 ຄັ້ງ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 14 ຄັ້ງ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່?<br>ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື : ໄດ້ລົງໂຄສະ ນາປູກຈິດສຳນຶກ ເຜີຍແຜ່ລະບຽບ ປ່າສະຫງວນ ແລະ ປ້ອງປ້ອງກັນ,ກົດໝາຍສັດນ້ຳ-ສັດປ່າ,ກົດໝາຍປ່າໄມ້,ການສະແດງລະຄອນສັ້ນ ແລະໂຄສະນາໃນວັນສຳຄັນແຫ່ງຊາດ(ວັນປູກຕົ້ນໄມ້,ວັນອະນຸລັກສັດນ້ຳ-ສັດປ່າ)ໃຫ້ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ ແລະ ນ້ອງນັກຮຽນ ຢູ່19 ບ້ານອ້ອມປ່າປ້ອງກັນ,ຕະຫຼາດ,ຮ້ານອາຫານ ແລະ ໂຮງຮຽນປະຖົມ,ມັດທະຍົມ ຂອງເມືອງຍົມມະລາດ ແລະ ເມືອງບົວລະພາ ເຊິ່ງໄດ້ມີຜູ້ເຂົ້າຮ່ວມເຮັດກິດຈະ ກຳຈຳນວນ 3,084 ຄົນ ຍິງ 948 ຄົນ ເຊິ່ງໄດ້ມີ ການ | |

| | | |
|---|---|---|
| | ຕັ້ງປ້າຍໂຄສະນາຫ້າມຄ້າ-ຂາຍສັດປ່າທີ່ຜິດກົດໝາຍ,ສະແດງລະຄອນ (ແຈກໂປຣດສະເຕີ,ເສື້ອ,ປຶ້ມ,ບິກ ແລະ ເຄື່ອງໃຊ້ສອຍຕ່າງ ),ປ່ອຍລູກປາຄືນສູ່ທຳມະຊາດ ຈຳນວນ 101,250 ໂຕ ແລະ ແຈກເສື້ອວັນປູກຕົ້ນໄມ້ ຈຳນວນ 195 ຜືນ. | |
| 2.2: ສຳເລັດການສ້າງລະບົບການລາດ ຕະເວນ (ທີມງານບັງຄັບໃຊ້ກົດໝາຍ ແລະ ທີມງານລາດຕະເວນຊຸມຊົນ ) ພ້ອມກວດກາລາດຕະເວນ | ສ້າງທີມງານລາດຕະເວນ ພ້ອມທັງ ເຄື່ອນໄຫວກວດກາລາດຕະເວນເຂດປ່າປ້ອງກັນແບບມີສ່ວນຮ່ວມຂອງຊຸມຊົນ.<br>- ເປົ້າໝາຍທີ່ຕັ້ງໄວ້: 68 ຄັ້ງ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 67 ຄັ້ງ ( ໄດ້ 10 ຄັ້ງ ປີ 2018, 24 ຄັ້ງ ປີ 2019, 23 ຄັ້ງ ປີ 2020 ແລະ 10 ຄັ້ງ ປີ 2021 )<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ບໍ່ສາມາດບັນລຸຄາດໝາຍທີ່ວາງໄວ້ຄື: ໄດ້ສ້າງຕັ້ງທີມງານລາດ ຕະເວນຂັ້ນ ໃນ 19 ບ້ານ,ບ້ານລະ 06 ຄົນ ທັງໝົດ 114 ຄົນ ເຊິ່ງໄດ້ເຮັດຂໍ້ຕົກລົງຮັບຮອງຈາກທ່ານເຈົ້າ ເມືອງ ຍົມມະລາດ ແລະ ເມືອງບົວລະພາ ແລະ ກໍໄດ້ລົງກວດ ກາລາດຕະເວນຕາມຂອບເຂດຄຸ້ມຄອງຂອງແຕ່ລະບ້ານ ໃນປ່າປ້ອງກັນ. | |
| 2.3: ໄດ້ມີຕິດຕາມການເພີ່ມຂຶ້ນຂອງສັດປ່າ ແລະ ເນື້ອທີ່ປ່າໄມ້. | ໄດ້ມີຕິດຕາມການເພີ່ມຂຶ້ນ ຂອງສັດປ່າ ແລະ ເນື້ອທີ່ປ່າໄມ້.<br>- ເປົ້າໝາຍທີ່ຕັ້ງໄວ້: 3 ຄັ້ງ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 3 ຄັ້ງ ( ໄດ້ 1 ຄັ້ງ ປີ2018, 1 ຄັ້ງ ປີ 2019 ແລະ 1 ຄັ້ງ ປີ 2021 )<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ບັນລຸເປົ້າໝາຍ ໃນອັດຕາການປົກຫຸ້ມຂອງປ່າໄມ້ເພີ່ມຂຶ້ນນັ້ນກໍ່ຍ້ອນວ່າທີມງານຄຸ້ມຄອງປ່າປ້ອງກັນນ້ຳອືນ-ພູຫີນເຫຼັກໄຟ ໄດ້ເອົາໃຈໃສ່ປະຕິບັດວຽກງານ ຕາມພາລະບົດບາດ ແລະ ສິດໜ້າທີ່ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ ໂດຍພາຍໃຕ້ການສະໜັບສະໜູນດ້ານແຫຼ່ງທຶນຈາກໂຄງການ LENS2. | |
| 2.4: ສຳເລັດການທົບທວນ ແລະການແບ່ງດິນ ແບ່ງປ່າຄືນ (ຈຳນວນ 8 ບ້ານ) | ການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ແບບມີສ່ວນຮ່ວມຂັ້ນບ້ານເຂດປ່າປ້ອງກັນນ້ຳອືນ-ພູຫີນເຫຼັກໄຟ<br>- ເປົ້າໝາຍທີ່ຕັ້ງໄວ້: 8 ບ້ານ<br>- ຂໍ້ມູນພື້ນຖານ: 0 ບ້ານ<br>- ຜົນທີ່ໄດ້ຮັບຕົວຈິງ: 8 ບ້ານ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: | |

| | | |
|---|---|---|
| | ໄດ້ລົງທົບທວນການວາງແຜນນໍາໃຊ້ທີ່ດິນໃນປີ 2019 ສໍາເລັດ 03 ບ້ານ ແລະ ປີ 2020 ສໍເລັດ 05 ບ້ານ ລວມທັງໝົດ 8 ບ້ານ ນອກນັ້ນ ແມ່ນ ທາງ ອຸທິຍານແຫ່ງຊາດນາກາຍນໍ້າເທີນ ຈັດຕັ້ງປະຕິບັດ. | |
| 2.5: ສ້າງກົດລະບຽບການຄຸ້ມຄອງນໍາໃຊ້ປ່າໄມ້ ແລະ ສັນຍາອະນຸລັກຂັ້ນບ້ານ . (ຈໍານວນ 8 ບ້ານ). | ສ້າງລະບຽບການຄຸ້ມຄອງຊັບພະຍາກອນປ່າໄມ້ ແລະ ສັນຍາອະນຸລັກຂັ້ນບ້ານ ໃຫ້ໄດ້ຕາມຈໍານວນບ້ານເປົ້າ ໝາຍ.<br>- ເປົ້າໝາຍທີ່ຕັ້ງໄວ້: 08 ບ້ານ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 08 ບ້ານ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: ໃນປີ 2019 ປະຕິບັດໄດ້ສໍາເລັດການສ້າງລະບຽບການຄຸ້ມຄອງຊັບ ພະຍາກອນປ່າໄມ້ ແລະ ສັນຍາອະນຸລັກຂັ້ນບ້ານເປົ້າ ໝາຍຂອງໂຄງການໄດ້ 08 ບ້ານ. | |
| 2.6: ສ້າງອາສາສະໝັກປ່າໄມ້ບ້ານ, ສັນຍາອະນຸລັກ ແລະ ກົດລະບຽບການຄຸ້ມຄອງປ່າໄມ້ ຂັ້ນບ້ານ | ສ້າງອາສາສະໝັກປ່າໄມ້ບ້ານ, ສັນຍາອະນຸລັກ ແລະ ກົດລະບຽບການຄຸ້ມຄອງປ່າໄມ້ ຂັ້ນບ້ານ<br>- ເປົ້າໝາຍທີ່ຕັ້ງໄວ້: 08 ບ້ານ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 08 ບ້ານ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: ໃນປີ 2018 ໄດ້ລົງສ້າງຕັ້ງທີມງານອາສາສະໝັກປ່າໄມ້ບ້ານ ໄດ້ 04 ບ້ານ,ປີ 2019 ໄດ້ສ້າງອາສາສະໝັກປ່າໄມ້ບ້ານ ໄດ້ 15 ບ້ານ ແລະ ກໍ່ໄດ້ເຮັດສັນຍາອະນຸລັກ ໄດ້ 08 ບ້ານ ທີໄດ້ຮັບທຶນພັດທະນາບ້ານ. | |
| 2.7: ສໍາເລັດການລົງເກັບກໍາຂໍ້ມູນເສດຖະກິດ-ສັງຄົມ ແລະ ວາງແຜນພັດທະນາບ້ານ ຈໍານວນ 8 ບ້ານ. | ສໍາເລັດການລົງເກັບກໍາຂໍ້ມູນເສດຖະກິດ-ສັງຄົມ ແລະ ວາງແຜນພັດທະນາບ້ານ ຈໍານວນ 8 ບ້ານ.<br>- ເປົ້າໝາຍທີ່ຕັ້ງໄວ້: 08 ບ້ານ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 08 ບ້ານ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: ປີ 2018 ໄດ້ລົງເກັບກໍາຂໍ້ມູນເສດຖະກິດສັງຄົມ ແລະ ແຜນພັດທະນາບ້ານ ໄດ້ 08 ບ້ານ ເປົ້າໝາຍໂຄງການ. | |
| 2.8: ສໍາເລັດການເຮັດສັນຍາອະນຸລັກ ຈໍານວນ 8 ບ້ານ | ສໍາເລັດການເຮັດສັນຍາອະນຸລັກ ຈໍານວນ 8 ບ້ານ<br>- ເປົ້າໝາຍທີ່ຕັ້ງໄວ້: 08 ບ້ານ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 08 ບ້ານ | |

| | | |
|---|---|---|
| | ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື: ສໍາເລັດການເຮັດສັນຍາອະນຸລັກ ຮ່ວມກັບບ້ານ ໄດ້ 08 ບ້ານ ປີ 2019. | |
| 2.9: ສໍາເລັດການ ສ້າງກອງທຶນໝູນວຽນ ຈໍານວນ 8 ບ້ານ | ສໍາເລັດການ ສ້າງກອງທຶນໝູນວຽນ ຈໍານວນ 8 ບ້ານ<br>- ເປົ້າໝາຍທີ່ຕັ້ງໄວ້: 08 ບ້ານ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 08 ບ້ານ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື:ສໍາເລັດການສ້າງຕັ້ງກອງທຶນໝູນວຽນ | |
| 2.10: ຈັດຕັ້ງປະຕິບັດ ກິດຈະກໍາຕ່າງໆ ກ່ຽວກັບການຟື້ນຟູຊີວິດ (ເປັນທຶນ ໃຫ້ແກ່ 8 ບ້ານ). | ຈັດຕັ້ງປະຕິບັດ ກິດຈະກໍາຕ່າງໆ ກ່ຽວກັບການຟື້ນຟູຊີວິດ (ເປັນທຶນ ໃຫ້ແກ່ 8 ບ້ານ).<br>- ເປົ້າໝາຍທີ່ຕັ້ງໄວ້: 08 ບ້ານ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 08 ບ້ານ<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່? ສາມາດບັນລຸຕາມຄາດໝາຍທີ່ວາງໄວ້ຄື:ຕິດຕາມຊຸກຍູການປະຕິບັດກິດຈະກໍາ ກອງທຶນພັດທະນາຊີວິດການເປັນຢູ່ ແລະ ປັບປຸງຄະນະກໍາມະການກອງທຶນບ້ານ ໃຫ້ໄດ້ 40 ສໍາເລັດ 18 ບ້ານ,ບ້ານເປົ້າໝາຍເມືອງຍົມມະລາດ 06 ບ້ານ ແລະ ເມືອງບົວລະພາ 02 ບ້ານ ມູນຄ່າທັງໝົດ 992,000,000 ກີບ ເພື່ອພັດທະນາກິດຈະກໍາສ້າງນໍ້າປາປາຊຸມຊົນ 2 ແຫ່ງ,ກິດຈະກໍາລ້ຽງງົວ 120 ຄອບຄົວ,ກິດຈະກໍາກອງທຶນແມ່ຍິງ 150 ຄອບຄົວ,ກິດຈະກໍາແນວພັນເຂົ້າ 506 ຄອບຄົວ,ກິດຈະກໍາລ້ຽງແບ້ 31 ຄອບຄົວ ,ຄົມມະນາຄົມນັກຮຽນ (ເຮືອພ້ອມຈັກ 2 ລໍາ ), ກິດຈະກໍານໍ້າປາປາຊຸມຊົນ 2 ບໍ່,ກິດຈະກໍາຕອບໂຕໄພພິບັດ 2 ຫຼັງ ແລະ ປັບປຸງວັງສະຫງວນ 7 ແຫ່ງ, ເຊິ່ງສາມາດສົ່ງເສີມ ຄອບຄົວທຸກຍາກ, ກຸ່ມບຸກລຸກປ່າໄມ້ ໃຫ້ຊຸມຊົນມີລາຍຮັບໃຫ້ດີຂຶ້ນ ແລະ ຫຼຸດຜ່ອນການທໍາລາຍປ່າໄມ້. | |
| **ອົງປະກອບທີ 3. ການບໍລິຫານ ແລະ ຕິດຕາມ ໂຄງການຍ່ອຍ** | | |
| 3.1: ສ້າງບົດລາຍງານຄວາມຄືບໜ້າ 6 ເດືອນ ຂອງໂຄງການຍ່ອຍ, ຊຶ່ງໃນນັ້ນຄຸນນະພາບຂອງລາຍງານແຕ່ລະດ້ານ ການຕິດຕາມປະເມີນຜົນ , ການຈັດຊື້ ແລະ ການເງິນ ສອດຄ່ອງ | ບົດລາຍງານການບໍລິຫານ ແລະ ຄຸ້ມຄອງໂຄງການຍ່ອຍ.<br>- ເປົ້າໝາຍທີ່ຕັ້ງໄວ້: 8 ບົດ<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 8 ບົດ. | |

| | | |
|---|---|---|
| ແລະ ຢູ່ໃນລະດັບທີ່ຫນ້າພໍໃຈ (ປະຈໍາປີ) | ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່?<br>ສາມາດບັນລຸຕາມຄາດໝາຍຕົວຊີ້ວັດທີ່ວາງໄວ້ຄື: ໄດ້ສໍາເລັດການສົ່ງບົດລາຍງານປະຈໍາ 6 ເດືອນຕົ້ນປີ ແລະ ບົດລາຍງານປະຈໍາປີ | |
| 3.2: ບັນດາກິດຈະກາຕ່າງໆ ກໍານົດໃນແຜນ ໄດ້ດໍາເນີນການສໍາເລັດ (ປະຈາປີ) | ຄວາມສາມາດໃນການຈັດຕັ້ງປະຕິບັດໃຫ້ເກີດຜົນໄດ້ຮັບຕາມແຜນການປີທີໄດ້ຄາດຫວັງໄວ້.<br>- ເປົ້າໝາຍທີ່ຕັ້ງໄວ້: 95<br>- ຂໍ້ມູນພື້ນຖານ: ບໍ່ມີ<br>- ຜົນທີ່ໄດ້ຮັບຕົວຈິງ: 100<br>ຕົວຊີ້ວັດດັ່ງກ່າວສາມາດບັນລຸຕາມຄາດໝາຍບໍ່?ຍັງບໍ່ສາມາດບັນລຸຕາມຄາດໝາຍຕົວຊີ້ວັດທີ່ວາງໄວ້, ເນື່ອງຈາກວ່າກອງປະຊຸມສະຫຼູບປິດໂຄງການຍັງບໍ່ທັນຈັດຕັ້ງປະຕິບັດ. | |

2.4 ສະຖານະ ກົນໄກຂອງການຈັດຕັ້ງ

ຂໍໃຫ້ນໍາສະເໜີຂໍ້ມູນ ສະພາບກົນໄກດ້ານການຈັດຕັ້ງ ທີ່ສ້າງຂຶ້ນມາເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍການສົມທົບ ແລະ ປະສານງານກັບຄູ່ຮ່ວມງານ ແລະ ພາກສ່ວນກ່ຽວຂ້ອງ. ໃນນີ້ອາດລວມ ມີການປັບປຸງຂີດຄວາມສາມາດ ຫລື ສິ່ງທ້າທາຍພາຍໃນ ອົງການຈັດຕັ້ງປະຕິບັດໂຄງການຍ່ອຍ.

ສໍາລັບການຈັດຕັ້ງປະຕິບັດໂຄງການນີ້ໄດ້ແຕ່ງຕັ້ງ 3 ຄະນະຄື: (1). ຄະນະຊີ້ນໍາ, (2). ຄະນະຄຸ້ມຄອງໂຄງການ ແລະ (3) ຄະນະຈັດຕັ້ງກິດຈະກໍາ ຄືດັ່ງໃນຮູບລຸ່ມນີ້. ລາຍລະອຽດຂອງແຕ່ລະພາກສ່ວນ ມີດັ່ງລຸ່ມນີ້:

1. ຄະນະຊີ້ນໍາ

ຄະນະກໍາມະການຊີ້ນໍາໂຄງການຄຸ້ມຄອງປ່າປ້ອງກັນນໍ້າອິນ-ພູຫີນເຫຼັກໄຟ ຈະໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ການເປັນປະທານຂອງຮອງເຈົ້າແຂວງຄໍາມ່ວນ. ຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ແຂວງ (PAFO) ຈະເປັນເລຂາທິການ. ສະມາຊິກຂອງຄະນະກໍາມະການຈະປະກອບມີ: ທ່ານ ຮອງຫົວໜ້າພະແນກ ແຜນການ ແລະ ການລົງທຶນ, ທ່ານ ຮອງເຈົ້າເມືອງ 2 ເມືອງຄື: ເມືອງຍົມມະລາດ ແລະ ເມືອງບົວລະພາ,

ຄະນະກໍາມະການດັ່ງກ່າວແມ່ນເພື່ອໃຫ້ທິດຊີ້ນໍາໃນການເຄື່ອນໄຫວຈັດຕັ້ງປະຕິບັດໂຄງການ, ເຂົ້າຮ່ວມປະຊຸມປະຈໍາ 6 ເດືອນ ແລະ ປະຈໍາປີ ຄະນະຈະມີການປະຊຸມປະຈາງວດ (2 ຄັ້ງ ຕໍ່ປີ) ເພື່ອຮັບຮອງເອົາບົດລາຍງານ ແລະ ແຜນການເຄື່ອນໄຫວຈັດຕັ້ງປະຕິບັດໂຄງການ ແລະ ເຂົ້າຮ່ວມກອງປະຊຸມປຶກສາຫາລືຕ່າງໆ ຕາມການແຈ້ງເຊີນຈາກພາກສ່ວນກ່ຽວຂ້ອງ, ຕົກລົງການດັດແກ້ກິດຈະກໍາ ແລະ ງົບປະມານຂອງໂຄງການ ແລະ ລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການທີ່ສໍາຄັນ.

2. ຄະນະຄຸ້ມຄອງໂຄງການ

ຄະນະຄຸ້ມຄອງໂຄງການ ຈະໄດ້ສ້າງຂຶ້ນເພື່ອຮັບປະກັນໃຫ້ການຈັດຕັ້ງກິດຈະກໍາຂອງໂຄງການດໍາເນີນຕາມຈຸດປະສົງ ແລະ ໄດ້ຮັບຜົນຕາມທີ່ກໍານົດໄວ້. ຄະນະດັ່ງກ່າວ ປະກອບດ້ວຍ:

1. ຜູ້ຊີ້ນໍາໂຄງການ ທ່ານ ສີລາ ຈັນທະລາ ຮອງຫົວໜ້າແນກກະສິກໍາ ແລະ ປ່າໄມ້ແຂວງຄໍາມ່ວນ.
2. ຜູ້ຊີ້ນໍາໂຄງການ ທ່ານ ຄໍາແສງ ແສງທອງນາລົມ ຫົວໜ້າກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນແຂວງຄໍາມ່ວນ.
3. ຫົວໜ້າໂຄງການ: ທ່ານ ຟອງສະມຸດ ອິນຕະນາມ ຈຸງານບໍລິຫານ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
4. ຜູ້ປະສານໂຄງການ: ທ່ານ ຄໍາເພັງ ໄຊຍາສິງ ວິຊາການກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
5. ບັນຊີ - ການເງິນໂຄງການ: ທ່ານ ນາງ ທິບພະວົງ ກິ່ງແກ້ວ ວິຊາການກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
6. ຈັດຊື້-ຈັດຈ້າງໂຄງການ: ທ່ານ ນາງ ພູວຽນ ສີລິພັນພອນ ວິຊາການ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
7. ຄັງເງິນສົດໂຄງການ: ທ່ານ ນາງ ຄອນສະຫວັນ ວິຊາການ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.

ຄະນະດັ່ງກ່າວມີໜ້າທີ່ຮັບຜິດຊອບຕໍ່ການຄຸ້ມຄອງບໍລິຫານການຈັດຕັ້ງປະຕິບັດກິດຈະກຳທີ່ກຳນົດໃນແຜນຂອງໂຄງການ, ຄຸ້ມຄອງການເງິນ (ໂອນເອົາເງິນ, ເບີກຈ່າຍ), ຈັດຊື້ອຸປະກອນ ແລະ ຫາທີ່ປຶກສາ (ຄູຝຶກ), ກະກຽມແຜນ ແລະ ບົດສະຫຼຸບທາງດ້ານວິຊາການ ແລະ ການເງິນ ປະຈຳງວດ, ປະຈຳປີ ແລະ ທ້າຍໂຄງການໃຫ້ທັນເວລາ ເພື່ອລາຍງານຄະນະຊີ້ນຳໂຄງການ ພິຈາລະນາ ແລະ ຮັບຮອງ ແລະ ລາຍງານໃຫ້ ກປສ ແລະ ຜູ້ໃຫ້ທຶນ, ປະສານງານກັບ ກປສ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄຸ້ມຄອງໂຄງການໃຫ້ບັນລຸຕາມຄາດໝາຍ, ລວມທັງ ການກວດສອບ, ການຕິດຕາມກວດກາ, ການແລກປ່ຽນບົດຮຽນ ແລະ ການສຶກສາອື່ນໆ ທີ່ເຫັນວ່າຈຳເປັນ ແລະ ປະຕິບັດທຸກໜ້າວຽກອື່ນໆທີ່ກ່ຽວຂ້ອງທີ່ຄະນະຊີ້ນຳມອບໝາຍໃຫ້.

3. ຄະນະວິຊາການ

ຄະນະວິຊາການ ປະກອບດ້ວຍພະນັກງານວິຊາການກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ປະສານສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ ແລະ ຫ້ອງການທີ່ກ່ຽວຂ້ອງ 2 ເມືອງຄື: ເມືອງຍົມມະລາດ ແລະ ເມືອງບົວລະພາ ຈະໄດ້ຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ໂດຍມີສ່ວນຮ່ວມກັບການຈັດຕັ້ງບ້ານທຸກພາກສ່ວນ.ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນຈະເປັນຜູ້ຕິດຕາມຄຸ້ມຄອງຊັບພະຍາກອນປ່າໄມ້ ແລະ ອານຸລັກຊີວະນາໆພັນໃນປ່າປ້ອງກັນນ້ຳອິນ-ພູຫີນເຫຼັກໄຟ ໂດຍມີໜ່ວຍງານປະສານງານຂອງແຕ່ລະເມືອງຄື: ໜ່ວຍງານກວດກາປ່າໄມ້, ໜ່ວຍງານປ່າໄມ້ ແລະ ໜ່ວຍງານລ້ຽງສັດ ລາຍລະອຽດສະແດງໃນຮູບໂຄງຮ່າງການຈັດຕັ້ງ ຄືດັ່ງລຸ່ມນີ້:

**ໂຄງຮ່າງການຈັດຕັ້ງໂຄງການ**

**ຄະນະຊີ້ນຳ**

- ທ່ານ ຮອງເຈົ້າແຂວງຄຳມ່ວນ.
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງຄຳມ່ວນ.
- ທ່ານ ຮອງຫົວໜ້າພະແນກ ແຜນການ ແລະ ການລົງທຶນ.
- ທ່ານ ຮອງເຈົ້າເມືອງ 2 ເມືອງຄື: ເມືອງຍົມມະລາດ ແລະ ເມືອງບົວລະພາ,

**ຄະນະຄຸ້ມຄອງໂຄງການ**

1. ຜູ້ຊີ້ນຳໂຄງການ ທ່ານ ສີລາ ຈັນທະລາ ຮອງຫົວໜ້າແນກກະສິກຳ ແລະ ປ່າໄມ້ແຂວງຄຳມ່ວນ.
2. ຜູ້ຊີ້ນຳໂຄງການ ທ່ານ ຄຳແສງ ແສງທອງນາລິນ ຫົວໜ້າກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນແຂວງຄຳມ່ວນ.
3. ຫົວໜ້າໂຄງການ: ທ່ານ ຟອງສະມຸດ ອິນຕະນາມ ຈຸງານບໍລິຫານ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
4. ຜູ້ປະສານໂຄງການ: ທ່ານ ຄຳເພັງ ໄຊຍາສິງ ວິຊາການກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
5. ບັນຊີ - ການເງິນໂຄງການ: ທ່ານ ນາງ ທິບພະວົງ ກິ່ງແກ້ວ ວິຊາການກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
6. ຈັດຊື້-ຈັດຈ້າງໂຄງການ: ທ່ານ ນາງ ພູວຽນ ສີລິພັນພອນ ວິຊາການ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.
7. ຄັງເງິນສົດໂຄງການ: ທ່ານ ນາງ ຄອນສະຫວັນ ວິຊາການ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.

**ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຍົມມະລາດ**

- ໜ່ວຍງານກວດກາປ່າໄມ້,
- ໜ່ວຍງານປ່າໄມ້,
- ໜ່ວຍງານລ້ຽງສັດ

**ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ບົວລະພາ**

- ໜ່ວຍງານກວດກາປ່າໄມ້,
- ໜ່ວຍງານປ່າໄມ້,ໜ່ວຍງານ ລ້ຽງສັດ

2.5 ການຈັດຕັ້ງປະຕິບັດກິດຈະກຳ ຕາມອົງປະກອບຂອງໂຄງການຍ່ອຍ ແລະຜົນສຳເລັດຂອງຜົນໄດ້ຮັບ.
ໃນຂໍ້ນີ້ ຂໍໃຫ້ອະທິບາຍ ຜົນໄດ້ຮັບຕົວຈິງ ຂອງແຕ່ລະກິດຈະກຳ, ຜົນສຳເລັດ ແລະສະໜອງ ລາຍລະອຽດຂອງຜົນໄດ້ຮັບໃນເອກະສານຊ້ອນທ້າຍ.

**I. ອົງປະກອບ 1: ກໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ແລະ ການປະສານງານໃນການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ນ້ຳອືນ-ພູທີນເຫຼັກໄຟ**

**- ຈຸດປະສົງ:** ເພື່ອເພີ່ມຄວາມອາດສາມາດໃຫ້ຄະນະຊີ້ນຳ, ພະນັກງານໂຄງການຂັ້ນແຂວງ, ເມືອງ ແລະ ພະນັກ ງານວິຊາການຂອງກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ໄດ້ມີຄວາມຮູ້ດ້ານວິຊາການໃນການປະສານງານ ແລະ ຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.

**1.1 ການສ້າງຕັ້ງໜ່ວຍຄຸ້ມຄອງ ປ່າປ້ອງກັນນ້ຳອືນ - ພູທີນເຫຼັກໄຟ**

ໜ່ວຍຄຸ້ມຄອງ ປ່າປ້ອງກັນ ນ້ຳອືນພູທີນເຫຼັກໄຟ ປະກອບດ້ວຍພະນັກງານລັດ ແລະ ອາສາສະໝັກ ເຊິ່ງໄດ້ນຳໃຊ້ພະນັກງານ ແລະ ອາສາສະໝັກ ພາຍໃນກອງ ນອກນັ້ນ ແມ່ນໄດ້ແຕ່ງພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງຍົມມະລາດ ແລະ ເມືອງບົວລະພາ ເຊິ່ງປະກອບມີ: 1.ຄະນະຊີ້ນຳ,ຄຸ້ມຄອງປ່າປ້ອງກັນແຂວງ ແລະ ເມືອງ,2.ບໍລິຫານ-ການເງິນ,3.ວິຊາການ ກຄປປ,4. ໜ່ວຍງານປ່າໄມ້ເມືອງ ຍົມມະລາດ ແລະ ບົວລະພາ ເຊິ່ງມີພາລະບົດບາດ ແລະ ໜ້າທີ່ຂອງໃຜລາວ ຕາມຂໍ້ຕົກລົງຂອງທ່ານເຈົ້າແຂວງສະບັບເລກທີ 72/ຈຂ.ຄມ ລົງວັນທີ 15 ມີນາ 2018.

**1.2 ການຝຶກອົບຮົມວຽກປະຊາສຳພັນຊຸມຊົນ (ສຳລັບພະນັກ ງານ)**

ໃນປີ 2020 ເຂົ້າຮ່ວມຝຶກອົບຮົມວຽກໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກວຽກງານອະນຸ ລັກ 2 ຄັ້ງ. ຄັ້ງທີ1: ຈັດໂດຍກົມປ່າໄມ ຈັດຂຶ້ນ ຢູ່ທີ່ອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ, ມີຜູ້ ເຂົ້າຮ່ວມ 5 ຄົນ, ຍິງ 2 ຄົນ. ຮຽນຮູ້ພື້ນຖານການໂຄສະນາເຜີຍແຜ່, ການກຳນົດກຸ່ມເປົ້າໝາຍ, ເຕັກນິກການໂຄສະນາເຜີຍແຜ່ ແລະ ການກະກຽມແຜນກິດ ຈະກຳ.ຄັ້ງທີ2:ໃນລະຫວ່າງ ວັນທີ 17-23 ພຶດສະພາ 2020 ໄດ້ຈັດ ຝຶກອົບຮົມວຽກງານໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກດ້ານການອະນຸລັກຂື້ນໂດຍ ຄູຝຶກຈາກກົມປ່າໄມ້ ໃຫ້ພະນັງານແຂວງ ແລະ ເມືອງ ຈຳນວນ 13 ທ່ານ ຍິງ 3 ທ່ານ ຢູ່ທີ່ ເມືອງຍົມມະລາດ,ຮຽນຮູ້ກ່ຽວກັບການສ້າງແຜນ ກິດຈະກຳໂຄສະນາເຜີຍແຜ່ຄື: ເກມ, ໂພດສະເຕີ, ການແຂ່ງຂັນແຕ້ມຮູບ, ລະຄອນ ແລະ ສ້າງແຜນໂຄສະນາເຜີຍແຜ່ປູກຈິດສຳນຶກ 2021-2025.

**1.3 ການຝຶກອົບຮົມກ່ຽວກັບວຽກງານກອງທຶນໝູນວຽນ (ສຳລັບຄະນະຈັດຕັ້ງບ້ານ)**

ສຳເລັດຈັດຝຶກອົບຮົມວຽກງານຄຸ້ມຄອງກອງທຶນໝູນວຽກໃຫ້ຄະນະກຳມະການກອງທຶນບ້ານ ໄດ້ 3 ຄັ້ງ : ໃນປີ 2019 ໄດ້ 2 ຄັ້ງ ຄື: ທີມງານຄູຝຶກຈາກແຂວງ ແລະ ເມືອງ(ກະສິກາ,ສະຫະພັນແມ່ຍິງ ) ໄດ້ພາກັນລົງຝຶກອົບຮົມວຽກງານກອງທຶນໝູນວຽນໃຫ້ຄະນະກຳມະການກອງທຶນບ້ານເປົ້າໝາຍ 6 ບ້ານ ເມືອງຍົມມະລາດ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 45 ທ່ານ ຍິງ 4 ທ່ານ ຢູ່ທີ່ບ້ານຫາຊອນ, 02 ບ້ານ ເມືອງບົວລະພາ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 20 ທ່ານ ຍິງ 2 ທ່ານ ຢູ່ບ້ານກະຈາມໃຫ່ຍ ,ໃນປີ 2020 ໄດ້ຈັດຝຶກອົບຮົມການຄຸ້ມຄອງກອງທຶນພັດທະນາບ້ານ ໂດຍມີ ຄູຝຶກຈາກກົມປ່າໄມ້ ມີຜູ້ເຂົ້າຮ່ວມທັງໝົດ 15 ທ່ານ, ຍິງ 2 ທ່ານ,ຢູ່ທີໂຮງຮຽນປະຖົມບ້ານແກ້ງມ່ວງ, ເຊິ່ງຝຶກອົບຮົມແກ່ຄະນະກຳມະການຄຸ້ມຄອງກອງທຶນກ່ຽວກັບການເຮັດບັນຊີ, ການສະຫຼຸບທາງດ້ານການເງິນ, ການຈ່າຍເງິນສິດ,ລະບົບການຝາກ ແລະ ການຖອນເງິນ. ການຝຶກອົບຮົມ.

**1.4 ການຝຶກອົບຮົມ ກິດຈະກາສ້າງລາຍຮັບ ເຊັ່ນວ່າ ການລ້ຽງສັດ, ຫັດຖະກຳ ແລະ ປູກຝັງແບບຍືນຍົງ (ສຳລັບປະຊາຊົນ)**

ໄດ້ຈັດຝຶກອົບຮົມວຽກງານການລ້ຽງສັດ ແລະ ການປູກຝັງ ໃຫ້ປະຊາຊົນ 8 ບ້ານເປົ້າໝາຍ ມີ 6 ບ້ານ ເມືອງຍົມມະລາດ, 2 ບ້ານ ເມືອງບົວລະພາ ໄດ້ 3 ຄັ້ງ : ໃນປີ 2019 ໄດ້ 2 ຄັ້ງ: ໃນລະຫວ່າງ ວັນທີ 11-16 ທັນວາ 2019 ທີມງານຄູຝຶກໂດຍ ພະແນກກະສິກຳ ແລະ ປ່າໄມ້ແຂວງ,ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໄດ້ພາກັນລົງຝຶກອົບຮົມວຽກງານປູກຝັງ ແລະ ລ້ຽງສັດ ໃຫ້ປະຊາຊົນ ຈຳນວນ 47 ຄົນ ຍິງ 8 ຄົນ,ຢູ່ທີ່ ບ້ານກະຈາມໃຫ່ຍ,ວັນທີ່ 17-23 ທັນວາ 2019 ໄດ້ພາກັນລົງຝຶກອົບຮົມວຽກງານ ປູກຝັງ ແລະ ລ້ຽງສັດ ໃຫ້ປະຊາຊົນ ຈຳນວນ 25 ຄົນ ຍິງ 0 ຄົນ, ຢູ່ທີ່ບ້ານຫາດຊອນ,ໃນລະຫວ່າງ ວັນທີ 6 - 11 ພະຈິກ 2020 ໄດ້ຈັດຝຶກອົບຮົມ ການລ້ຽງສັດ, ຫັດຖະກຳ ແລະ ປູກຝັງແບບຍືນຍົງ ຈຳນວນ 8 ບ້ານເປົ້າໝາຍ ຈຳນວນ 31 ຄົນ ຍິງ 1 ຄົນ,ການຝຶກອົບຮົມແມ່ນໄດ້ຮຽນຮູ້ກ່ຽວກັບ ການລ້ຽງສັດ (ງົວ,ຄວາຍ,ແບ້,ໝູ ແລະ ໄກ່ ) ຮູ້ວິທີການລ້ຽງ ແລະ ວິທີການປ້ອງກັນພະຍາດສັດ ຕາມລະດູການ,ການປູກຕົ້ນໄມ້ໃຫ້ໝາກ,ພືດສວນຄົວ,ການເຮັດຝຸ່ນຊີວະພາບ ຕ່າງໆ,ເຊິ່ງສາມາດເປັນບົດຮຽນເພື່ອສ້າງອາຊີບ ແລະ ສ້າງລາຍໄດ້ ໃຫ້ກັບ ພໍ່ແມ່ປະຊາຊົນ.

## 1.5 ການຈັດທັດສະນະສຶກສາວຽກງານສັນຍາອະນຸລັກ (ສາລັບຄະນະການຈັດຕັ້ງບ້ານ)

ໄປທັດສະນະສຶກສາຖອດຖອນບົດຮຽນວຽກງານສັນຍາອະນຸລັກ(ສໍາລັບຄະນະກໍາມະການຈັດຕັ້ງບ້ານ) ໄດ້ 02 ຄັ້ງຄື : ໄປທັດສະນະສຶກຖອດຖອນບົດຮຽນຢູ່ທີ່ອຸທິຍານແຫ່ງຊາດນາກາຍນໍ້າເທີນ ກ່ຽວກັບສັນຍາອະນຸລັກໃຫ້ຄະນະການຈັດຕັ້ງບ້ານ ມີຜູ້ເຂົ້າຮ່ວມ 32 ທ່ານ ຍິງ 6 ທ່ານ ເຊິ່ງການໄປຖອດຖອນບົດຮຽນໃນຄັ້ງນີ້ແມ່ນໄດ້ນໍາພາຄະນະກໍາມະການຂັ້ນບ້ານໄປທີ່ບ້ານທົ່ງກອງເມືອງຍົມມະລາດ ທີ່ເປັນບ້ານເປົ້າໝາຍໃນການພັດທະນາຊີວິດການເປັນຢູ່ປະຊາຊົນຂອງອຸທິຍານນາກາຍນໍ້າເທີນ ໄດ້ຮຽນຮູ້ກ່ຽວກັບຂັ້ນຕອນການເຮັດສັນຍາອະນຸລັກຮ່ວມກັບຊາວບ້ານ ເລີ່ມຈາກເກັບກໍາຂໍ້ມູນເສດຖະກິດສັງຄົມ,ແຜນພັດທະນາບ້ານ(ກໍານົດກິດຈະກໍາ)ຈົນເຮັດສັນຍາຮ່ວມກັບບ້ານ,ໃນຄັ້ງວັນທີ 05-08 ມັງກອນ 2021 ຄະນະຊີ້ນາແຂວງ,ເມືອງ ແລະ ອໍານາດການປົກຄອງບ້ານໄປທັດສະນະສຶກສາແລກປ່ຽນບົດຮຽນກ່ຽວກັບວຽກງານສັນຍາອະນຸລັກ ທີ່ແຂວງວຽງຈັນ ຜູ້ເຂົ້າຮ່ວມທັງໝົດ 19 ທ່ານ, ຍິງ 6 ທ່ານ .ສາມາດຖອດຖອນບົດຮຽນໄດ້ດັ່ງນີ້: - ການປູກພືດອິນຊີຂອງຊາວບ້ານໆບຸ່ງພ້າວ ເມືອງທຸລະຄົມ ແຂວງວຽງຈັນ,ການລ້ຽງງົວທອມຂອງປະຊາຊົນບ້ານ (ໂຄງການພັດທະນາຊົນນະບົດແບບມີສ່ວນຮ່ວມ ) ແລະ ການສ້າງຕັ້ງວັງສະຫງວນອະນຸລັກສັດນໍ້າຢູ່ບ້ານຜາຕັ້ງ ເມືອງວັງວຽງ ແຂວງວຽງຈັນ.

## 1.6 ການຈັດກອງປະຊຸມ ຄະນະຊີ້ນໍາໂຄງການຂັ້ນແຂວງ ແລະ ປະຊຸມປຶກສາຫາລື ຂັ້ນເມືອງ

▪ ໃນຄັ້ງວັນທີ 18 / 5 / 2018 ໄດ້ຈັດກອງປະຊຸມປຶກສາຫາລືຜ່ານແຜນຈັດຕັ້ງປະຕິບັດໂຄງການ ຢູ່ທີ່ ພະແນກກະສິກໍາ ແລະ ປ່າໄມ້ ແຂວງຄໍາມ່ວນ ເຊິ່ງມີຜູ້ເຂົ້າຮ່ວມມາຈາກພາກສ່ວນທີ່ກ່ຽວຂ້ອງການນໍາຂັ້ນແຂວງ,ເມືອງ ແລະ ບ້ານເປົ້າໝາຍ ຂອງ 2 ເມືອງຍົມມະລາດ ແລະ ເມືອງບົວລະພາ ຈໍານວນທັງໝົດ 44 ຄົນ ຍິງ 7 ຄົນ,ກອງປະຊຸມໄດ້ນໍາສະເໜີຄວາມເປັນມາ,ຈຸດປະສົງ,ແຜນຈັດຕັ້ງປະຕິບັດໂຄງການ.

▪ ໃນຄັ້ງວັນທີ 10 ຕຸລາ 2018 ໄດ້ຈັດກອງປະຊຸມປຶກສາຫາລືໃນການແບ່ງຄວາມຮັບຜິດຊອບບ້ານເປົ້າໝາຍຕາມທາງເລກທີ 12 ທີ່ຂຶ້ນກັບເມືອງຍົມມະລາດ ແລະ ເມືອງບົວລະພາ ລະຫວ່າງ ອຄປ ທ2 ກັບ ໂຄງການຍ່ອຍ LENS2 ຢູ່ທີ່ເມືອງຍົມມະລາດ ແຂວງຄໍາມ່ວນ ເຊິ່ງມີຜູ້ເຂົ້າຮ່ວມ ທັງໝົດ 23 ທ່ານ ຍິງ 4 ທ່ານ ເຊິ່ງໄດ້ປຶກສາຫາລືເຫັນດີກັນດັ່ງນີ້ :

- ຕາມເສັ້ນທາງເລກທີ 12 ໄປຫາຈຸດສຸມລັງຄັ້ງ ທາງ ອຄປ ທ2 ແມ່ນຮັບຜິດຊອບ ວຽນພັດທະນາ ແລະ ລາດຕະເວນເບື້ອງປ່າສະຫງວນແຫ່ຊາດນາການນໍ້າເທີນ.
- ເບື້ອງຕາເວັນຕົກລຽບຕາມສາຍນໍ້າເຊບັ້ງໄຟ ແມ່ນ ໂຄງການ CBI-LENE2-016 ຮັບຜິດຊອບ ວຽກພັດທະນາ ຈໍານວນ 8 ບ້ານເປົ້າໝາຍ.

▪ ວັນທີ 4 ມັງກອນ 2019 ໄດ້ຈັດກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານປີ 2018 ແລະ ຜ່ານແຜນປີ 2019 ຂຶ້ນທີ່ ລີສອດສາຍພູຫຼວງ ເຊິ່ງມີຜູ້ເຂົ້າຮ່ວມ ຈາກກົມປ່າໄມ້,ພະແນກກະສິກາ ແລະ ປ່າໄມ້ແຂວງ,ຮອງເຈົ້າເມືອງ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ອໍານາດການປົກຄອງບ້ານ ຈໍານວນ 34 ທ່ານ ຍິງ 7 ທ່ານ ເຊິ່ງສາມາດບັນດຸຕາມເປົ້າໝາຍທີ່ວາງໄວ້ 65 ເປີນເຊັນ.

▪ ວັນທີ 7 ມັງກອນ 2020 ໄດ້ຈັດກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານປີ 2019 ແລະ ຜ່ານແຜນປີ 2020 ຂຶ້ນທີ່ ລີສອດສາຍພູຫຼວງ ເຊິ່ງມີຜູ້ເຂົ້າຮ່ວມ ຈາກກົມປ່າໄມ້,ພະແນກກະສິກໍາ ແລະ ປ່າໄມ້ແຂວງ,ຮອງເຈົ້າເມືອງ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ອໍານາດການປົກຄອງບ້ານ ຈໍານວນ 31 ທ່ານ ຍິງ 5 ທ່ານ ເຊິ່ງສາມາດບັນດຸຕາມເປົ້າໝາຍທີ່ວາງໄວ້ 79 ເປີນເຊັນ.

▪ ໃນຄັ້ງວັນທີ 10-12 ກຸມພາ 2021 ໄດ້ຈັດກອງປະຊຸມຜ່ານແຜນຄຸ້ມຄອງປ່າປ້ອງກັນນໍ້າອິນ ພູຫີນເຫັລກໄຟ ແບບມີສ່ວນຮ່ວມ (ປີ 2021-2025) ທີ່ລີສອດສາຍພູຫຼວງ ເມືອງ ບົວລະພາ ເຊິ່ງມີຜູ້ເຂົ້າຮ່ວມມາຈາກກົມປ່າໄມ້,ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ,ພະແນກກະສິກໍາ ແລະ ປ່າໄມ້ແຂວງ,ຮອງເຈົ້າເມືອງ,ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ,ປກສ,ປກຊ,ສະຫະພັນຍິງ ແລະ ວິຊາການເຂົ້າຮ່ວມຈານວນ 36 ທ່ານ,ຍິງ 5 ທ່ານ ກອງປະຊຸມໄດ້ຜ່ານຮ່າງແຜນຄຸ້ມຄອງປ່າປ້ອງກັນນໍ້າອິນ-ພູຫີນເຫຼັກໄຟ ໄລຍະ 5 ປີ ເພື່ອໃຫ້ບັນດາທ່ານປະກອບຄໍາຄິດເຫັນຕົກລົງເປັນເອກະພາບ ແລະ ນໍາສະເໜີທ່ານເຈົ້າແຂວງ ເຊັນຮັບຮອງ.

▪ ໃນຄັ້ງວັນທີ 15-16 ກຸມພາ 2021 ໄດ້ຈັດກອງປະຊຸມປະເມີນເຄື່ອງມືການຕິດຕາມແບບມີປະສິດທິພາບ ການຄຸ້ມຄອງໂຄງການ ( METT),ທີ່ລີສອດສາຍພູຫຼວງເມືອງ ບົວລະພາ ເຊິ່ງມີຜູ້ເຂົ້າຮ່ວມມາຈາກກົມປ່າໄມ້,ກອງທຶນປົກປັກຮັກສາ

ສິ່ງແວດລ້ອມ ແລະ ສັງຄົມ,ພະແນກກະສິກຳ ແລະ ປ່າໄມ້ແຂວງ,ຮອງເຈົ້າເມືອງ,ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ອຳນາດການປົກຄອງບ້ານ ຈຳນວນເຂົ້າຮ່ວມ 31 ທ່ານ ຍິງ 3 ທ່ານ,ກອງປະຊຸມເປັນເອກະພາບກັນ ໄດ້ໃຫ້ຄະແນນຕາມແບບຟອມ 30 ຂໍ້ ມີຄະແນນທັງໝົດໄດ້ 40 ເຫັນວ່າການຄຸ້ມຄອງປ່າປ້ອງກັນ ດັ່ງກ່າວມີຄະແນນເພີ່ມຂຶ້ນ 32 ຄະແນນ ຈາກ 8 ຄະແນນໃນຂໍ້ມູນພື້ນຖານ ຫຼືຂໍ້ທີ່ຄະແນນເພີ່ມຂຶ້ນມີຂໍ້ 1,2,3,4,6,7,8,10,12,21,24,26,27 ແລະ 30 ເຫັນວ່າມີການຄຸ້ມຄອງໄດ້ດີຂຶ້ນສາມາດບັນລຸຕາມຄາດໝາຍເນື່ອງຈາກວ່າມີລະບຽບການຄຸ້ມຄອງ ແລະ ປະຕິບັດລະບຽບການ, ການໂຄສະນາເຜີຍແຜ່ ແຕ່ການຄຸ້ມຄອງດັ່ງກ່າວຍັງມີຄວາມຈຳກັດດ້ານອຸປະກອນຮັບໃຊ້,ງົບປະມານທີ່ບໍ່ຍືນຍົງ ແລະ ການມີສ່ວນຮ່ວມປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຊຸມຊົນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ.ໃນຕໍ່ໜ້າແມ່ນສ້າງກົນໄກການເງິນແບບຍືນຍົງ, ພັດທະນາແຫຼ່ງທ່ອງທ່ຽວແບບອະນຸລັກ, ຫາແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອຄຸ້ມຄອງຕາມແຜນທີ່ວາງໄວ້.

**1.7 ການຈັດທັດສະນະສຶກສາໃຫ້ພະນັກງານ ແລະ ຄູ່ຮ່ວມງານ**

▪ ໃນຄັ້ງວັນທີ 25 ກຸມພາ ຫາ 2 ມີນາ 2019 ໄດ້ທັດສະນະສຶກສາແລກປ່ຽນບົດຮຽນກ່ຽວກັບວຽກງານຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ແບບມີສ່ວນຮ່ວມຂອງປະຊາຊົນ ຢູ່ທີ່ອຸທິຍານແຫ່ງຊາດນ້ຳແອດ-ພູເລີຍ ແຂວງຫົວພັນ ເຊິ່ງມີຜູ້ເຂົ້າຮ່ວມ ຕ່າງໜ້າຄະນະຊີ້ນຳຂັ້ນແຂວງ,ເມືອງ ພ້ອມດ້ວຍວິຊາການ ຂອງໂຄງການ ທັງໝົດ 34 ຄົນ ຍິງ 3 ຄົນ ເຊິ່ງໄດ້ຈັດຕັ້ງປະຕິບັດດັ່ງນີ້ :

- ເຂົ້າຮ່ວມປຶກສາຫາລືແລກປ່ຽນບົດຮຽນວຽກງານຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ຢູ່ ພະແນກກະສິກຳ ແລະ ປ່າໄມ້ ແຂວງຫົວພັນ.
- ລົງຢ້ຽມຢາມວຽກງານການຄຸ້ມຄອງປ່າສະຫງວນແບບມີສ່ວນຮ່ວມຂອງຊຸມຊົນຢູ່ທີ່ອຸທິຍານແຫ່ງຊາດນ້ຳແອດ-ພູເລີຍ :
  1, ເຂົ້າຮ່ວມປຶກສາຫາລືຖອດຖອນບົດຮຽນວຽກງານຄຸ້ມຄອງປ່າສະຫງວນຢູ່ທີ່ຫ້ອງການອຸທິຍານແຫ່ງຊາດນ້ຳແອດ-ພູເລີຍກ່ຽວກັບ ການກວດກາລາດຕະເວນ,ວຽກງານທ່ອງທ່ຽວເຊີງອະນຸລັກ ແລະ ການສົ່ງເສີມປະຊາຊົນແບບມີສ່ວນຮ່ວມໃນການອະນຸລັກ.
  2, ລົງຢ້ຽມຢາມການສົ່ງເສີມປະຊາຊົນ ປູກກາເຟ ອາລາບີກາ ທີ່ບ້ານຫ້ວຍຕືນ ເມືອງຊອນ ແຂວງຫົວພັນ.
  ການໄປທັດສະນະສຶກສາຖອດຖອນບົດຮຽນໃນຄັ້ງນີ້ ແມ່ນເປັນແຮງຈູງໃຈ ແລະ ສົ່ງເສີມໃຫ້ພະນັກງານມີຄວາມຫ້າວຫັນໃນການເຮັດວຽກ ເພື່ອນຳເອົາບົດຮຽນມານຳໃຊ້ໃນການຈັດຕັ້ງປະຕິບັດວຽກງານໃນອານາຄົດ.

**II. ອົງປະກອບທີ 2: ສະໜັບສະໜູນ ການວາງແຜນຄຸ້ມຄອງ ປ່າສະຫງວນ ແລະ ປ່າປ້ອງກັນ ແບບມີສ່ວນຮ່ວມ ແລະ ການຄຸ້ມຄອງ ປ່າປ້ອງກັນນ້ຳອືນ - ພູຫີນເຫຼັກໄຟ.**

**- ຈຸດປະສົງ :** ເພື່ອສ້າງແຜນການຄຸ້ມຄອງປ່າໄມ້, ເຜີຍແຜ່, ປຶກສາຫາລື ປັບປຸງຄວາມສາມາດ ແລະ ປະສານສົມທົບກັບບັນດາ ພາກສ່ວນທີ່ກ່ຽວຂ້ອງໃນການຈັດສັນພື້ນທີ່, ສ້າງລະບຽບຄຸ້ມຄອງ, ສະໜັບສະໜູນຊຸມຊົນທີ່ຢູ່ອ້ອມຂ້າງເຂດປ່າປ້ອງກັນ ແລະ ບັງຄັບໃຊ້ລະບຽບກົດໝາຍການຄຸ້ມຄອງປ່າໄມ້ ແລະ ສັດນ້ຳ-ສັດປ່າ.

**2.1 ການຈັດຫາຫ້ອງການພາກສະໜາມ ແລະ ຈຸດກວດກາ.**

▪ ສຳເລັດການຕັ້ງຫ້ອງການພາກສະໜາມ ຂອງໂຄງການຍ່ອຍ ທີ່ຢູ່ບ້ານ ກະຈາມໃຫ່ຍ ເມືອງບົວລະພາ ແຂວງຄຳມ່ວນ ເຊິ່ງໄດ້ຕົກລົງເຫັນດີຮ່ວມກັບອຳນາດການປົກຄອງຂັ້ນເມືອງ ແລະ ບ້ານ ແມ່ນໄດ້ກຳນົດເອົາຈຸດ GPS : 0561777; 1935086 ມີເນື້ອທີ 900 m2 ສາມາດຕັ້ງຫ້ອງການພາກສະໜາມໄດ້ 01 ຫຼັງ.

**2.2 ການຈັດຊື້ພາຫະນະ ແລະ ອຸປະກອນຮັບໃຊ້.**

▪ ສຳເລັດການຈັດຊື້ພາຫະນະ ແລະ ອຸປະກອນຮັບໃຊ້ : ເພື່ອສະໜັບສະໜູນການດຳເນີນກິດຈະກຳຂອງໂຄງການ, ໂດຍສະເພາະສຳລັບອົງປະກອບທີ 2. ອຸປະກອນດ້ານໄອທີ ແລະ ພາຫະນະ ( ລົດຈັກ 3 ຄັນ ແລະ ລົດກະບະ 4DW 1 ຄັນ) ທາງທີມງານໂຄງການໄດ້ປຶກສາຫາລື ກັບ ຫ້ອງການ ກປສ ເພື່ອກະກຽມຂໍ້ກຳໜົດສຳລັບການຈັດຊື້ອຸປະກອນ ແລະ ພາຫະນະ, ແລະ ດຳເນີນການຈັດຊື້ຈັດຈ້າງ ໃຫ້ສອດຄ່ອງສອດຄ່ອງກັບລະບຽບ ການຈັດຊື້ PIM ຂອງ LENS2 ຕາມທີ່ໄດ້ຕົກລົງເຫັນດີກັບ ຫ້ອງການ ກປສ (ລາຍລະອຽດເບິ່ງແຜນການຈັດຊື້ໃນເອກະສານຊ້ອນ 1).

**2.3 ປະຊາສຳພັນປູກຈິດສຳນຶກ ກ່ຽວກັບການຄຸ້ມຄອງປ່າໄມ້ ຢູ່ຂັ້ນເມືອງ ແລະ ບ້ານ** (ໂດຍຜ່ານການປະຊຸມບ້ານ, ວິທະຍຸທ້ອງຖິ່ນ, ປ້າຍ ຫລື ພາບໂຄສະນາ)

ການປະຊາສຳພັນ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບສັນຍາອະນຸລັກ ໃຫ້ແກ່ຊຸມຊົນ ບ້ານເປົ້າຫມາຍ ແລະ ພາກສ່ວນກ່ຽວຂ້ອງໂດຍທາງອ້ອມ ເຊັ່ນ: ພະນັກງານລັດໃນທ້ອງຖິ່ນ, ໃນ ເມືອງ, ປກຊ, ຕຳຫຼວດ ແລະ ພໍ່ຄ້າຊາວຂາຍ ໃຫ້ເຂົ້າໃຈການອະນຸລັກເພື່ອໄດ້ການສະຫນັບ ສະຫນູນ ແລະ ການຮ່ວມມືຂອງເຂົາເຈົ້າ. ກິດຈະກຳນີ້ຈະປະກອບມີ:

- ລົງໂຄສະນາເຜີນແຜ່ລະບຽບການຄຸ້ມຄອງປ່າສະຫງວນ ແລະ ສັດປ່າ ຂັ້ນແຂວງ ແລະ ສອງເມືອງ(ເມືອງຍົມມະລາດ ແລະ ບົວລະພາ) ໃນວັນສຳຄັນຕ່າງໆ : ວັນທີ 1 /6/2018 ໄດ້ມອບເສື້ອຊົມເຊີຍວັນປູກຕົ້ນໄມ້ແຫ່ງຊາດ ຈຳນວນ 40 ໂຕ ໃຫ້ພະແນກກະສິກຳ ແລະ ປ່າໄມ້,ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຍົມມະລາດ ຈຳນວນ 20 ໂຕ,ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງບົວລະພາ ຈຳນວນ 20 ໂຕ ແລະ ໄດ້ຮ່ວມໂຄສະນາເຜີຍແຜ່ປູກຈິດສຳນຶກ ໃນວັນປູກຕົ້ນໄມ້ແຫ່ງຊາດ ເປັນວັນສຳຄັນໜຶ່ງໃນການປົກປັກຮັກສາຊັບພະຍາກອນປ່າໄມ້.
- ວັນທີ 28 /8 – 4 / 9 / 2018 ລົງໂຄສະນາປູກຈິດສານຶກເຜີຍແຜ່ລະບຽບ ປ່າສະຫງວນ ແລະ ປ້ອງປ້ອງກັນ,ກົດໝາຍສັດນໍ້າ-ສັດປ່າ,ກົດໝາຍປ່າໄມ້ ຢູ່ເຂດ ບ້ານ ເຕືອນ,ໂພນແກ້ວ,ຫາດຊອນ,ແກ້ງມ່ວງ,ຈະກ້ອນ ແລະ ບ້ານທ່າໂຈນ ເມືອງຍົມມະລາດ ເຊິ່ງມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 412 ຄົນ ຍິງ 117 ຄົນ
- ວັນທີ 25-31 / 7 / 2018 ລົງໂຄສະນາ,ແຈກໂປດສະເຕີ ຕາມຕະຫຼາດ ບ້ານໂຄກສະຫວ່າງ ເມືອງຍົມມະລາດ, ຕະຫຼາດຈຸດສຸມລັງຄັງ ແລະ ຕະຫຼາດຕົວເມືອງບົວລະພາ ແລະ ພ້ອມທັງຕິດຕັ້ງປ້າຍ(ຫ້າມລ່າ ແລະ ຫ້າມຊື້-ຂາຍ ສັດປ່າ ທີ່ຜິດກາດໝາຍ ) ເຊິ່ງມີຜູ້ເຂົ້າຮ່ວມ 53 ຄົນ ຍິງ 38 ຄົນ
- ເຂົ້າຮ່ວມເຜີຍແຜ່ປູກຈິດສຳນຶກໃນວັນອະນຸລັກສັດນໍ້າ-ສັດປ່າ ວັນປ່ອຍປາແຫ່ງຊາດ ທີ 13 ກໍລະກົດ 2018 ເຊິ່ງໄດ້ເຂົ້າຮ່ວມດັ່ງນີ້:

- ພະແນກກະສິກາ ແລະ ປ່າໄມ້ ຈັດຂຶ້ນຢູ່ທີ່ ໜອງກຸດຈັບ ເມືອງໜອງບົກ ແຂວງຄາມ່ວນ ແລະ ໄດ້ສິ່ງເສີມລູກປານິນ ແລະ ປາປາກ ຈຳນວນທັງໝົດ 8,750 ໂຕ.
- ຫ້ອງການກະສິກາ ແລະ ປ່າໄມ້ ເມືອງບົວລະພາ ຈັດຂຶ້ນຢູ່ທີ່ ສາຍນໍ້າພະນັງ ແລະ ໄດ້ສິ່ງເສີມ ລູກປານິນ ແລະ ປາປາກ ຈຳນວນທັງມົດ 6,250 ໂຕ.
- ຫ້ອງການກະສິກາ ແລະ ປ່າໄມ້ ເມືອງຍົມມະລາດ ຈັດຂຶ້ນຢູ່ທີ່ ສາຍນໍ້າພະນັງ ແລະ ໄດ້ສິ່ງເສີມ ລູກປານິນ ແລະ ປາປາກ ຈຳນວນທັງມົດ 6,250 ໂຕ.

- ວັນທີ 11-18 ພະຈິກ 2018 ລົງປະຊາສຳພັນປູກຈິສຳນຶກ ກ່ຽວກັບການຄຸ້ມຄອງປ່າໄມ້ຂັ້ນເມືອງ ແລະ ບ້ານພ້ອມທັງເກັບກຳບາງຂໍ້ມູນກ່ຽວກັບເສດຖະກິດສັງຄົມ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 373 ທ່ານ ຍິງ 164 ທ່ານ ຈາກ 6 ບ້າຍເປົ້າໝາຍ : ຫາດຊອນ,ແກ້ງມ່ວງ,ຈະກ້ອນ,ທ່າໂຈນ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ່ຍ.ເຊິ່ງໄດ້ເຜີຍແຜ່ວຽກງານການຄຸ້ມຄອງປ່າໄມ້,ກົດໝາຍປ່າໄມ້,ກົດໝາຍສັດນໍ້າ-ສັດປ່າ ແລະ ນິຕິກຳຕ່າງໆ.
- ວັນທີ 31-07 ເມສາ 2019 ລົງໂຄສະນາປູກຈິດສຳນຶກລະບຽບການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ຈຳນວນ 6 ບ້ານ : ນາເຕືອນໃຈ,ໂພນແກ້ວ,ຫາດຊອນ,ແກ້ງມ່ວງ,ຈະກ້ອນ ແລະ ບ້ານ ທ່າໂຈນ.ມີຜູ້ເຂົ້າຮ່ວມທັງໝົດ 328 ຄົນ 61 ຍິງ ຄົນ ການລົງປູກຈິດສຳນຶກຄັ້ງນີ້ແມ່ນໄດ້ເຕົ້າລວມແຕ່ລະບ້ານ ແລ້ວຜ່ານເອກະສານຕ່າງເຊັ່ນ : ກົດໝາຍປ່າໄມ້, ດຳລັດປ່າປ້ອງກັນ,ກົດໝາຍສັດນໍ້າສັດປ່າ,ແຜນພັດທະນາຂອງບ້ານ ແລະ ເອກະສານອື່ນໆ.
- ລົງໂຄສະນາເຜີນແຜ່ລະບຽບການຄຸ້ມຄອງປ່າສະຫງວນ ແລະ ສັດປ່າ ຂັ້ນແຂວງ ແລະ ສອງເມືອງ(ເມືອງຍົມມະລາດ ແລະ ບົວລະພາ) ໃນວັນສຳຄັນຕ່າງໆ : ວັນທີ 1 /6/2019 ໄດ້ມອບເສື້ອຊົມເຊີຍວັນປູກຕົ້ນໄມ້ແຫ່ງຊາດ ຈຳນວນ 45 ໂຕ ໃຫ້ພະແນກກະສິກຳ ແລະ ປ່າໄມ້,ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຍົມມະລາດ ຈຳນວນ 45 ໂຕ,ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງບົວລະພາ ຈຳນວນ 45 ໂຕ ແລະ ໄດ້ຮ່ວມໂຄສະນາເຜີຍແຜ່ປູກຈິດສຳນຶກ ໃນວັນປູກຕົ້ນໄມ້ແຫ່ງຊາດ ເປັນວັນສຳຄັນໜຶ່ງໃນການປົກປັກຮັກສາຊັບພະຍາກອນປ່າໄມ້.
- ວັນທີ 30-06 ກໍລະກົດ 2019 ລົງໂຄສະນາ,ແຈກໂປດສະເຕີ ຕາມຕະຫຼາດ ບ້ານໂຄກສະຫວ່າງ ເມືອງຍົມມະລາດ, ຕະຫຼາດຈຸດສຸມລັງຄັງ ແລະ ຕະຫຼາດຕົວເມືອງບົວລະພາ ແລະ ພ້ອມທັງຕິດຕັ້ງປ້າຍ(ຫ້າມລ່າ ແລະ ຫ້າມຊື້-ຂາຍ ສັດປ່າ ທີ່ຜິດກາດໝາຍ ) ເຊິ່ງມີຜູ້ເຂົ້າຮ່ວມ 54 ຄົນ ຍິງ 17 ຄົນ.
- ເຂົ້າຮ່ວມເຜີຍແຜ່ປູກຈິດສຳນຶກໃນວັນອະນຸລັກສັດນໍ້າ-ສັດປ່າ ວັນປ່ອຍປາແຫ່ງຊາດ ທີ 13 ກໍລະກົດ 2019 ເຊິ່ງມີດັ່ງນີ້: ພະແນກກະສິກຳ ແລະ ປ່າໄມ້ ຈັດຂຶ້ນຢູ່ທີ່ ໜອງກຸດຈັບ ເມືອງໜອງບົກ ແຂວງຄຳມ່ວນ ໄດ້ສິ່ງເສີມລູກປານິນ ແລະ

ປາປາກ ຈຳນວນທັງໝົດ 30.000 ໂຕ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງບໍລິຄຳໄຊ ຈັດຂຶ້ນຢູ່ທີ່ ສາຍນ້ຳພະນັງ ໄດ້ສົ່ງເສີມ ລູກປານິນ ແລະ ປາປາກ ຈຳນວນທັງມົດ 25.000 ໂຕ,ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງຍົມມະລາດ ຈັດຂຶ້ນຢູ່ທີ່ ສາຍນ້ຳ ພະນັງ ໄດ້ສົ່ງເສີມ ລູກປານິນ ແລະ ປາປາກ ຈຳນວນທັງມົດ 25.000 ໂຕ.

▪ ວັນທີ 17-24 ທັນວາ 2019 ລົງໂຄສະນາປູກຈິດສຳນຶກເຜີຍແຜ່ລະບຽບ ປ່າສະຫງວນ ແລະ ປ້ອງປ້ອງກັນ,ກົດ ໝາຍສັດນ້ຳ-ສັດປ່າ,ກົດໝາຍປ່າໄມ້ ຢູ່ເຂດ ບ້ານ ເຕືອນ,ໂພນແກ້ວ,ຫາດຊອນ,ແກ້ງມ່ວງ,ຈະກ້ອນ ແລະ ບ້ານທ່າໂຈນ ເມືອງ ຍົມມະລາດ ເຊິ່ງມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 360 ຄົນ ຍິງ 90 ຄົນ.

▪ ວັນທີ 15-22 ມີນາ 2020 ລົງໂຄສະນາ ປູກຈິດສຳນຶກ ກ່ຽວກັບການຄຸ້ມຄອງປ່າໄມ້ຂັ້ນເມືອງ ແລະ ບ້ານ ມີຜູ້ເຂົ້າ ຮ່ວມທັງໝົດ 357 ທ່ານ,ຍິງ 68 ທ່ານຈາກ 8 ບ້ານເປົ້າໝາຍ : ບ້ານນາເຕືອນໃຈ,ໂພນແກ້ວ,ຫາດຊອນ,ແກ້ງມ່ວງ,ຈະກ້ອນ, ທ່າໂຈນ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ່ຍ ເຊິ່ງໄດ້ເຜີຍແຜ່ວຽກງານການຄຸ້ມຄອງປ່າໄມ້,ກົດໝາຍປ່າໄມ້,ກົດໝາຍ ສັດນ້ຳ-ສັດປ່າ ແລະ ນິຕິກຳຕ່າງໆ.

▪ ວັນທີ 16-21 ມີນາ 2020 ລົງໂຄສະນາເຜີຍແຜ່ລະບຽບການ ສະກັດກັ້ນການຄ້າ-ຂາຍສັດປ່າ ຕາມຕະຫຼາດ,ຮ້ານ ອາຫານທີ່ສຳຄັນ ຢູ່ທີ່ຕະຫຼາດບ້ານໂຄກ ເມືອງຍົມມະລາດ,ຕະຫຼາດບ້ານຫຼັງຄັງເມືອງບໍລິຄຳໄຊ, ຕະຫຼາດບ້ານນາພະນັງ,ເມືອງ ບໍລິຄຳໄຊ ແຂວງຄຳມ່ວນ,ມີຜູ້ເຂົ້າຮ່ວມພ້ອມທີມງານເຜີຍແຜ່ມີທັງໝົດ 133 ທ່ານ, ຍິງ 58 ຄົນ,ເຊິ່ງໄດ້ມີການສະແດງ ລະຄອນສັ້ນ,ຫຼິ້ນເກມຮ່ວມກັບແມ່ຄ້າ,ພໍ່ຄ້າ ເຮັດໃຫ້ຮູ້ກ່ຽວກັບຄຸນປະໂຫຍດຂອງປ່າໄມ້,ສັດນ້ຳ-ສັດປ່າ,ຮູ້ຈັກອະນຸລັກ ປົກ ປັກຮັກສາໃຫ້ຍືນຍົງ.

▪ ວັນທີ 1 ມິຖຸນາ 2020 ເຂົ້າຮ່ວມໂຄສະນາປູກຈິດສຳນຶກໃນການປົກປັກຮັກສາປ່າໄມ້ ໃນວັນປູກຕົ້ນໄມ້ແຫ່ງຊາດ ຢູ່ ເມືອງນາກາຍ,ເມືອງຍົມມະລາດ ແລະ ເມືອງບໍລິຄຳໄຊ ເຊິ່ງໄດ້ເຂົ້າຮ່ວມ 15 ທ່ານ ຍິງ 3 ທ່ານ.

▪ ລົງໂຄສະນາເຜີຍແຜ່ປູກຈິດສຳນຶກໃຫ້ຮູ້ປົກປັກຮັກສາ ແລະ ອະນຸລັກ ຊັບພະຍາກອນປ່າໄມ້ ໂດຍຮູບການສະແດງ ລະຄອນ,ການເລົ່າເລື່ອງນິທານ ແລະ ການຫຼິ້ນເກມຕ່າງໆໃຫ້ນ້ອງນັກຮຽນຢູ່ທີ່ໂຮງຮຽນ ມສ ຫຼັງຄັງ ແລະ ມສ ໂພນແກ້ວ ເຊິ່ງ ມີທີມງານໂຄສະນາເຂົ້າຮ່ວມ ຈຳນວນ 14 ທ່ານ ຍິງ 4 ທ່ານ.

▪ ລົງໂຄສະນາເຜີຍແຜ່ລະບຽບການສະກັດກັ້ນການຊື້ຂາຍ ສັດນ້ຳ ແລະ ສັດປ່າ ຕາມບ້ານເປົ້າໝາຍຂອງໂຄງການ ເຂດ ບ້ານກະຈາມນ້ອຍ,ກະຈາມໃຫ່ຍ ເມືອງ ບໍລິຄຳໄຊ ແລະ ເຂດບ້ານຫາດຊອນ,ບ້ານຈະກ້ອນ ແລະ ບ້ານ ທ່າໂຈ້ນ ເມືອງ ຍົມ ມະລາດ ເຊິ່ງ ມີຜູ້ເຂົ້າຮ່ວມທັງໝົດ 309 ຄົນ,ຍິງ 151 ຄົນ(ໃນນັ້ນລວມມີພະນັກງານກອງຄຸ້ມຄອງປ່າສະຫງວນ ແລະ ປ່າ ປ້ອງກັນແຂວງ,ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງບໍລິຄຳໄຊ,ຍົມມະລາດ; ຫ້ອງການສະຫະພັນຍິງເມືອງ ບໍລິຄຳໄຊ- ຍົມ ມະລາດ, ຫ້ອງການ ຖວທ ເມືອງ ຍົມມະລາດ-ບໍລິຄຳໄຊ ແລະ ຊາວບ້ານ 5 ບ້ານ )ໂດຍຮູບການສະແດງລະຄອນ,ການເລົ່າ ເລື່ອງນິທານ ແລະ ການຫຼິ້ນເກມຕ່າງໆໃຫ້ພໍ່ແມ່ປະຊາຊົນ.

▪ ຄັ້ງວັນທີ 9-16 ເມສາ 2021 ລົງປະຊາສຳພັນປູກຈິດສຳນຶກກ່ຽວກັບການຄຸ້ມຄອງປ່າໄມ້ຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ເຂດ 6 ບ້ານເປົ້າໝາຍໃນນັ້ນມີ ບ້ານເຕືອນ,ໂພນແກ້ວ,ແກ້ງມ່ວງ,ຫາດຊອນ,ຈະກ້ອນ,ແກ້ງມ່ວງ ແລະ ບ້ານ ທ່າໂຈ້ນ ເມືອງ ຍົມມະລາດ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 230 ທ່ານ,ຍິງ 58 ທ່ານ ກົດໝາຍປ່າໄມ້,ດຳລັດປ່າປ້ອງກັນ,ກົດໝາຍສັດນ້ຳ ສັດປ່າ,ແຜນພັດທະນາຂອງບ້ານ ແລະ ເອກະສານອື່ນໆ.

**2.4 ການສ້າງລະບົບການລາດຕະເວນປ່າໄມ້ ແລະ ສັດປ່າ**

▪ ໃນປີ 2018 ລົງກວດກາລາດຕະເວນປ່າປ້ອງກັນນ້ຳອິນ-ພູຫີນເຫຼັກໄຟ ຈຳນວນ 10 ຄັ້ງ ຂອງເມືອງບໍລິຄຳໄຊ ແລະ ເມືອງຍົມມະລາດ ໄດ້ 3,000 ເຮັກຕາ ໃນຂອບເຂດຂອງບ້ານ ເຕືອນ,ໂພນແກ້ວ,ຫາດຊ້ອນ,ແກ້ງມ່ວງ,ຈະກ້ອນ,ທ່າໂຈນ,ນາ ບໍ່,ທາງການ,ຄຳແຮ່,ສ້າງປຸງບອນ,ທົ່ງຂາມ,ລັງຄັງ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ້ ເຊິ່ງການລົງກວດກາລາດຕະເວນນີ້ໄດ້ ພົບເຫັນ ຮອງຮ້ອຍການຕັດໄມ້ 15 ຈຸດ,ຈູດໄມ້ 5 ຈຸດ, ໄມ້ຫັກ (ພະຍຸ) 2 ຈຸດ ແລະ ພົບເຕົາໄຟເກົ່າ 5 ຈຸດ.

\- ໄດ້ລົງສ້າງຕັ້ງທີມງານກວດກາລາດ ຕະເວນຂັ້ນບ້ານ ຈຳນວນ 19 ບ້ານ,ເມືອງບໍລິຄຳໄຊ 07 ບ້ານ ແລະ ເມືອງຍົມມະ ລາດ 12 ບ້ານ ທີ່ຕັ້ງອ້ອມປ່າປ້ອງກັນ ໃນການລົງຄັ້ງນີ້ແມ່ນໄດ້ສົມທົບກັບຄະນະຊີ້ນຳຂັ້ນເມືອງພ້ອມກັນລົງຫາອຳນາດການ ປົກຄອງບ້ານ ໄດ້ປຶກສາຫາລື ຄັດເລືອກເອົາບຸກຄົນທີ່ເໝາະສົມມີຄວາມສາມາດ ສຳນານພື້ນທີ່ ແລະ ແຂງແຮງ ຈຳນວນນ 6 ຄົນຕໍ່ບ້ານໜຶ່ງ ລວມ 114 ຄົນ ເພື່ອປະກອບລາຍຊື່ເຂົ້າໃສ່ຂໍ້ຕົກລົງ ຂອງທ່ານເຈົ້າເມືອງ ເປັນທີມງານລາດຕະເວນຂັ້ນບ້ານ.

- ໃນປີ 2019 ລົງກວດການລາດຕະເວນໃນປ່າປ້ອງກັນນ້ຳອິນ-ພູຫີນເຫຼັກໄຟ ຈຳນວນ 24 ຄັ້ງ ເຂດບ້ານນາເຕືອນໃຈ, ໂພນແກ້ວ,ທົ່ງກອງ,ນາບໍ່,ຄຳແຮ່,ຫາງການ,ແກ້ງມ່ວງ,ທ່າໂຈນ ເມືອງຍົມມະລາດ ແລະ ບ້ານກະຈາມໃຫ່ຍ,ກະຈາມນ້ອຍ ເມືອງບົວລະພາ ມີຜູ້ເຂົ້າຮ່ວມທັງໝົດ 63 ທ່ານ ຈາກຜົນການກວດກາລາດຕະເວນໃນໄລຍະຜ່ານມາ ສາມາດ ປະຕິບັດໄດ້ 8,000 ເຮັກຕາ ພົບໄພຂົ່ມຂູ່ທັງໝົດ 45 ກໍລະນີ ໃນນັ້ນປະກອບມີ : ເຕົາໄຟເກົ່າ 6 ກໍລະນີ,ລັກຕັດໄມ້ 7 ກໍລະນີ,ໄຟໄໝ້ລາມປ່າ 1 ກໍລະນີ,ແຄມເກົ່າ 4 ກໍລະນີ,ແຮ້ວ 27 ກໍລະນີ.
- ໃນປີ2020 ລົງກວດກາລາດຕະເວນເຂດປ່າປ້ອງກັນ ນ້ຳອິນ-ພູຫີນເຫຼັກໄຟ ເຂດ ເມືອງຍົມມະລາດ ແລະ ເມືອງ ບົວລະພາ ແຂວງຄຳມ່ວນ ຈຳນວນ 23 ຄັ້ງ,ມີຜູ້ເຂົ້າຮ່ວມທັງໝົດ 125 ເທື່ອຄົນ ມີ ບ້ານ ເຕືອນ,ຫາງການ,ໂພນແກ້ວ,ແກ້ງມ່ວງ,ຈະກ້ອນ,ທ່າໂຈນ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ່ຍ,ຈາກຜົນການກວດກາລາດຕະເວນໃນໄລຍະຜ່ານມາ ສາມາດ ປະຕິບັດໄດ້ 13,000 ເຮັກຕາ ພົບໄພຂົ່ມຂູ່ທັງໝົດ 82 ກໍລະນີ ໃນນັ້ນປະກອບມີ : ເຕົາໄຟເກົ່າ 8 ກໍລະນີ,ແຄມເກົ່າ 8 ກໍລະນີ,ແຮ້ວ 66 ກໍລະນີ ຮອງຮ້ອຍສັດ 18 ຮ້ອຍ.
- ໃນປີ 2021 ລົງກວດກາລາດຕະເວນເຂດປ່າປ້ອງກັນ ນ້ຳອິນ-ພູຫີນເຫຼັກໄຟ ເຂດ ເມືອງຍົມມະລາດ ແລະ ເມືອງ ບົວລະພາ ແຂວງຄຳມ່ວນ ຈຳນວນ 10 ຄັ້ງ,ມີຜູ້ເຂົ້າຮ່ວມທັງໝົດ 27 ທ່ານ ມີ ບ້ານ ເຕືອນ,ຫາງການ,ໂພນແກ້ວ,ແກ້ງມ່ວງ, ຈະກ້ອນ,ທ່າໂຈນ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ່ຍ,ຈາກຜົນການກວດກາລາດຕະເວນໃນໄລຍະຜ່ານມາ ສາມາດ ປະຕິບັດໄດ້ 4,000 ເຮັກຕາ ພົບໄພຂົ່ມຂູ່ທັງໝົດ ( ກໍລະນີສະສົມ ) 18 ກໍລະນີ ເຊິ່ງພົບເຫັນ ແຮ່ວ 18 ດາງ .

### 2.5 ຕິດຕາມການເພີ່ມຂຶ້ນ ຂອງສັດປ່າ ແລະ ເນື້ອທີ່ປ່າໄມ້.

- ຕົ້ນປີ2019 ໄດ້ຈັດກອງປະຊຸມປະເມີນສະພາບພື້ນທີ່ປ່າປ້ອງກັນ ( MEET ) ໃນເນື້ອທີ່ 16,898 ຮຕ ໃນອັດຕາການສູນເສຍຂອງປ່າໄມ້ຈາກການປະເມີນຂອງທີມງານກັບກອງສຳຫຼວດຈາກກົມປ່າໄມ້ ໄດ້ແຈ້ງໃຫ້ຮູ້ວ່າ: ສະພາບການສູນເສຍຂອງປ່າໄມ້ ມີຈຳນວນໜ້ອຍ ໃນບາງເຂດພື້ນທີ່ໃນການຂະຫຍາຍ ທີ່ຢູ່ອາໃສ ແລະ ຂະຫຍາຍພື້ນທີ່ກະສິກຳ ແຕ່ອັດຕາການປົກຫຸ້ມຂອງປ່າໄມ້ຢູ່ຫຼາຍເຂດໃນພື້ນທີ່ກໍ່ໄດ້ມີການເພີ່ມຂຶ້ນເຊິ່ງສະແດງໃຫ້ເຫັນຄື:
  - ເນື້ອທີ່ປ່າປົກຫຸ້ມ ປີ 2010-2015 (12,055.26 ເຮັກຕາ = 71,34 ເປີເຊັນ )
  - ເນື້ອທີ່ປ່າປົກຫຸ້ມ ປີ 2016-2020 ( 12,057.7 ເຮັກຕາ = 71,36 ເປີເຊັນ )

ນອກນັ້ນຍັງໄດ້ຕິດຕາມການເພີ່ມຂຶ້ນຂອງສັດປ່າໂດຍທີມງານລາດຕະເວນ ທີ່ຈັດຕັ້ງປະຕິບັດໃນແຕ່ລະປີ ເຊິ່ງມັນສະແດງໃຫ້ເຫັນຈາກໄພ່ຂົ່ມຂູ່,ຮອງຮອຍສັດປ່າ,ຍິນສຽງສັດຕ່າງໆ.

### 2.6 ການແບ່ງດິນ ແບ່ງປ່າແບບມີສ່ວນຮ່ວມ

- ຄັ້ງວັນທີ 12-24 ມີນາ 2019 ໄດ້ຝຶກອົບຮົມວຽກງານວາງແຜນນຳໃຊ້ທີດິນ ແລະ ປ່າໄມ້ ແບບມີສ່ວນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ໃນ ຢູ່ທີ່ ຫອງການກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນແຂວງ ແລະ ພ້ອມກັນລົງພາກສະໜາມຮ່ວມກັບບ້ານເຊິ່ງມີຜູ້ເຂົ້າຮ່ວມໃນການຝຶກອົບຮົມຄັ້ງນີ້ ມີ 11 ຄົນ ຍິງ 0 ຄົນ ຫຼັງຈາກນັ້ນກໍ່ໄດລົງປະຕິບັດຕົວຈິງຢູ່ພາກສະໜາມ ແລະ ກໍ່ໄດ້ມີປະຊາຊົນເຂົ້າຮ່ວມ ເຊິ່ງໄດ້ຈັດຕັ້ງປະຕິບັດຕາມຂັ້ນຕອນດັ່ງນີ້ :ຝຶກອົບຮົມວຽກງານນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ກ່ຽວກັບ ການແຕ້ມແຜນທີ່,GPS, ຂັ້ນຕອນການເກັບກຳຂໍ້ມູນຢູ່ພາກສະໜາມ,ໃນປີ2019 ສຳເລັດ 03 ບ້ານ ຄື : ບ້ານ ແກ້ງມ່ວງ,ຈະກ້ອນ ແລະ ບ້ານ ຫາດຊອນ, ປີ 2020 ສໍເລັດ 05 ບ້ານ ຄື: ບ້ານ ກະຈາມນ້ອຍ,ກະຈາມໃຫ່ຍ,ທ່າໂຈນ,ໂພນແກ້ວ ແລະ ບ້ານ ເຕືອນ, ລວມທັງໝົດ 8 ບ້ານ ແຕ່ລະບ້ານໄດ້ກຳນົດຂອບເຂດການ ນຳໃຊ້ທີ່ດິນແຕ່ລະປະເພດເຊັ່ນ: ເຂດຫວງຫ້າມເດັດຂາດໃນປ່າປ້ອງກັນ, ເຂດຄຸ້ມຄອງນຳໃຊ້ໃນປ່າປ້ອງ, ປ່າປ້ອງກັນແຫຼ່ງນ້ຳ, ເຂດຟື້ນຟູປ່າ, ທີ່ດິນກະສິກຳ ແລະ ອື່ນໆ ຕາມການເກັບກຳຂໍ້ມູນ, ປຶກສາຫາລື ແລະ ລົງສຳຫຼວດສະພາບຄວາມເປັນຈິງ ແລະ ສ້າງແຜນວາດ, ແຜນທີ່, ຖານຂໍ້ມູນທາງ GIS ຂອງແຕ່ລະບ້ານ ແລະ ສັງລວມຂໍ້ມູນເປັນແຜນນຳໃຊ້ທີ່ດິນ ແລະ ປ່າໄມ້, ສ້າງລະບຽບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ ເຊິ່ງຢັ້ງຢືນຈາກ ທ່ານ ເຈົ້າເມືອງ.

### 2.7 ສ້າງກົດລະບຽບການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້.

- ປີ 2018-2019 ໄດ້ລົງສຳຫຼວດກຳນົດຈຸດປັກຫຼັກໝາຍຂອບເຂດປ່າປ້ອງກັນ ພ້ອມທັງລົງປັກຫຼັກໝາຍ ແລະ ປ້າຍໄດ້ 150 ແລະ ໄດ້ທົບທວນຄືນລະບຽບການຄຸ້ມຄອງປ່າໄມ້ຂອງບ້ານ ໄດ້ 19 ບ້ານ: ເມືອງຍົມມະລາດ 12 ບ້ານ,ເມືອງບົວລະພາ 7 ບ້ານ.

- ປີ 2020 ໄດ້ປັບປຸງລະບຽບວັງສະຫງວນຂອງບ້ານ ພ້ອມທັງລົງປັກປ້າຍຊີ້ບອກຂອບເຂດວັງສະຫງວນ ເພື່ອຄຸ້ມຄອງສັດນ້ຳໄດ້ 8 ບ້ານ : ເມືອງຍົມມະລາດ 6 ບ້ານ ແລະ ເມືອງບົວລະພາ 2 ບ້ານ.

**2.8 ສ້າງຕັ້ງອາສາສະໝັກປ່າໄມ້ບ້ານ, ສັນຍາອະນຸລັກ ແລະ ລະບຽບການຄຸ້ມຄອງປ່າໄມ້ບ້ານ.**

- ໄດ້ລົງສ້າງຕັ້ງທີມງານກວດກາລາດ ຕະເວນຂັ້ນບ້ານ ຈຳນວນ 19 ບ້ານ,ເມືອງບົວລະພາ 07 ບ້ານ ແລະ ເມືອງຍົມມະລາດ 12 ບ້ານ ທີ່ຕັ້ງອ້ອມປ່າປ້ອງກັນ ໃນການລົງຄັ້ງນີ້ແມ່ນໄດ້ສົມທົບກັບຄະນະຊີ້ນຳຂັ້ນເມືອງພ້ອມກັນລົງຫາອຳນາດການປົກຄອງບ້ານ ໄດ້ປຶກສາຫາລື ຄັດເລືອກເອົາບຸກຄົນທີ່ເໝາະສົມມີຄວາມສາມາດ ສຳນານພື້ນທີ່ ແລະ ແຂງແຮງ ຈຳນວນມ 6 ຄົນຕໍ່ບ້ານໜຶ່ງ ລວມ 114 ຄົນ ເພື່ອປະກອບລາຍຊື່ເຂົ້າໃສ່ຂໍ້ຕົກລົງ ຂອງທ່ານເຈົ້າເມືອງ ເປັນທີມງານລາດຕະເວນຂັ້ນບ້ານ.
- ປີ 2019 ສ້າງສັນຍາອະນຸລັກຂັ້ນບ້ານໄປພ້ອມກັບການສ້າງແຜນພັດທະນາບ້ານ ແລະ ການສະໜັບສະໜູນທືປັບປຸງຊີວິດການເປັນຢູ່ ຈຳນວນ 8 ບ້ານ : ເມືອງຍົມມະລາດ 6 ບ້ານ ແລະ ເມືອງບົວລະພາ 2 ບ້ານ.

**2.9 ການລົງເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ວາງແຜນພັດທະນາບ້ານ.**

- ລົງເກັບກຳຂໍ້ມູນເສດຖະກິດ-ສັງຄົມ ຈຳນວນ ສອງ ບ້ານ : ບ້ານ ໂພນແກ້ວ ແລະ ບ້ານ ຫາດຊ້ອນ ເຊິ່ງມີຜູ້ເຂົ້າທັງໝົດ 157 ຄົນ ຍິງ 25 ຄົນ
- ຄັ້ງວັນທີ 6-10 ສິງຫາ 2018 ໄດ້ລົງ ເກັບກຳຂໍ້ມູນເສດຖະກິດ-ສັງຄົມ ຮ່ວມກັບທີມງານສະໜັບສະໜູນຂອງ ກປສ ແລະ ກົມປ່າໄມ້ ຢູ່ ບ້ານ ເຕືອນ,ໂພນແກ້ວ,ຫາດຊອນ ເມືອງຍົມມະລາດ,ບ້ານ ກະຈາມນ້ອຍ,ກະຈາມໃຫ່ຍ ເມືອງບົວລະພາ ມີຜູ້ເຂົ້າຮ່ວມທັງໝົດ 86 ຄົນ ຍິງ 44 ຄົນ,ໃນການລົງຄັ້ງນີ້ແມ່ນໄດ້ເກັບກຳເອົາຂໍ້ມູນບາງດ້ານທີ່ຍັງບໍ່ທັນຄົບຖ້ວນ ເພື່ອມາຂຽນບົດລາຍງານ ດ້ານເສດຖະກິດ-ສັງຄົມຂອງບ້ານ ແລະ ບົດລາຍງານ PRA.
- ຄັ້ງວັນທີ 11 – 18 ພະຈິກ 2018 ລົງທົບທວນເກັບກາຂໍ້ມູນເສດຖະກິດ-ສັງຄົມ ຈຳນວນ 6 ບ້ານ : ບ້ານ ຫາດຊ້ອນ,ແກ້ງມ່ວງ,ຈະກ້ອນ,ທ່າໂຈນ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ່ຍ ມີຜູ້ເຂົ້າຮ່ວມທັງໝົດ 373 ທ່ານ ຍິງ 164 ທ່ານ ເຊິ່ງໄດ້ຂຽນບົດລາຍງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ,ບົດລາຍງານເສດຖະກິດສັງຄົມ,ແຜນພັດທະນາຂອງບ້ານ.

**2.10 ການເຮັດສັນຍາອະນຸລັກ ຈຳນວນ 8 ບ້ານ**

- ຄັ້ງວັນທີ 25 ທັນວາ 2018 ຫາ 01 ມັງກອນ 2019 ທີມງານໂຄງການໄດ້ລົງເຮັດສັນຍາອະນຸລັກ ໂດຍການປຶກສາຫາລື ແລະ ຕົກລົງເຫັນດີກັບບ້ານເປົ້າຫມາຍ ໂດຍມີຄວາມຊັດເຈນກ່ຽວກັບຈຸດປະສົງ ແລະ ຂະບວນການ ໃຊ້ສຳລັບ ການປ້ອງກັນ ແລະ ການຄຸ້ມຄອງຊັບພະຍາກອນປ່າໄມ້. ສັນຍາອະນຸລັກ ໄດ້ກຳນົດ,ອະທິບາຍເງື່ອນໄຂ ກົດລະບຽບ ແລະ ພາລະຜູກພັນໃຫ້ບ້ານທີ່ຮັບຜົນປະໂຫຍດໄດ້ປະຕິບັດຕາມ. ສັນຍາອະນຸລັກ ລະບຸລະອຽດ ຄວາມຮັບຜິດຊອບ ແລະ ພັນທະ ຂອງອົງການຈັດຕັ້ງບ້ານ ພ້ອມດ້ວຍປະຊາຊົນ ແລະ ຫນ່ວຍງານຄຸ້ມຄອງປ່າປ້ອງກັນ. ກິດຈະກຳການອະນຸລັກ ແລະ ການຟື້ນຟູຊີວິດການເປັນຢູ່ ຈະເລີ່ມຕົ້ນ ພາຍຫລັງ ຫຼັງຈາກ ສັນຍາອະນຸລັກ ໄດ້ບັນລຸຂໍ້ຕົກລົງ ແລະ ເຊັນສັນຍາກັບບ້ານທີ່ໄດ້ຮັບຜົນປະໂຫຍດ, ຂັ້ນຕອນການສ້າງສັນຍາອະນຸລັກ ແມ່ນມີດັ່ງຕໍ່ໄປນີ້:

1. ການປຶກສາຫາລືລະດັບບ້ານ ກັບຄະນະກຳມະການອະນຸລັກຊັບພະຍາກອນປ່າໄມ້ບ້ານທີ່ມີຢູ່ແລ້ວ ແລະ ຕໍ່ໄປສ້າງຕັ້ງລະບຽບໃນການການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນປ່າໄມ້.
2. ຮ່າງລະບຽບເບື້ອງຕົ້ນ ກ່ຽວກັບການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນປ່າໄມ້ບ້ານ
3. ສະເໜີ ຮ່າງລະບຽບກ່ຽວກັບການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນປ່າໄມ້ບ້ານ ຕໍ່ກອງປະຊຸມລວມບ້ານ ເພື່ອປຶກສາຫາລື ແລະ ເພື່ອຄວາມເປັນເອກະພາບຂອງປະຊາຊົນພາຍໃນບ້ານ.
4. ປັບປຸງຮ່າງລະບຽບກ່ຽວກັບການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນປ່າໄມ້ບ້ານ ໃຫ້ເປັນສະບັບສົມບູນ.
5. ຄະນະກຳມະການອະນຸລັກຊັບພະຍາກອນປ່າໄມ້ບ້ານ ລົງລາຍເຊັນ, ລວມທັງ ນາຍບ້ານ, ຫນ່ວຍງານການປົກປ້ອງຄຸ້ມຄອງປ່າໄມ້ ແລະ ການຮັບຮອງໂດຍ ຂັ້ນເມືອງ ໃຫ້ມີຜົນສັກສິດ ແລະ ບັງຄັບໃຊ້ໄດ້.

**2.11 ສ້າງຕັ້ງກອງທຶນໝູນວຽນ (8 ບ້ານ)**

ການປັບປຸງຊີວິດການເປັນຢູ່ ແມ່ນຈຸດປະສົງທີ່ສຳຄັນຂອງໂຄງການ. ການສົ່ງເສີມການເຂົ້າເຖິງເງິນທຶນເປັນສິ່ງສຳຄັນຫຼາຍ ເພື່ອເພີ່ມທະວີຄວາມສາມາດຂອງຍິງ ແລະ ຊາຍ ໃນການເລີ່ມຕົ້ນກິດຈະກຳການພັດທະນາຊີວິດການເປັນຢູ່ ຕ່າງໆ, ໂດຍສະເພາະແມ່ນການສ້າງລາຍໄດ້ຂອງຄອບຄົວ. ຂະບວນການສົ່ງເສີມ ທີ່ສຳຄັນ:

▪ ຄັ້ງວັນທີ 25-27 ມິຖຸນາ 2019 ລົງສົມທົບກັບອໍານາດການປົກຄອງເມືອງ ແລະ ບ້ານ ຂອງເມືອງຍົມມະລາດ ແລະ ວັນທີ 04-06 ສິງຫາ ແມ່ນ ເມືອງບົວລະພາ ໄດ້ພ້ອມກັນປຶກສາຫາລື ສ້າງຕັ້ງກອງທຶນອະນຸລັກຊັບພະຍາກອນປ່າໄມ້ຂອງບ້ານ ພ້ອມທັງແຕ່ງຕັ້ງຄະນະບໍລິຫານ ແລະ ກໍາມະການກວດກາກອງທຶນບ້ານ ເຊິ່ງແຕ່ລະບ້ານຈະໄດ້ ຮັບຮອງຈາກທ່ານເຈົ້າເມືອງ ເຮັດເປັນຂໍ້ຕົກລົງອອກມາຢັ້ງຢືນ ມີຄື:

1. ບ້ານໂພນແກ້ວ ສ້າງຕັ້ງກອງທຶນ ເລກທີ 170/ຈມ,ຍມ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 171/ຈມ,ຍມ ລົງວັນທີ 26 ມິຖຸນາ 2019.
2. ບ້ານຫາດຊອນ ສ້າງຕັ້ງກອງທຶນ ເລກທີ 173/ຈມ,ຍມ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 172/ຈມ,ຍມ ລົງວັນທີ 26 ມິຖຸນາ 2019.
3. ບ້ານຈະກວ້ນ ສ້າງຕັ້ງກອງທຶນ ເລກທີ 174/ຈມ,ຍມ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 175/ຈມ,ຍມ ລົງວັນທີ 26 ມິຖຸນາ 2019.
4. ບ້ານແກ້ງມ່ວງ ສ້າງຕັ້ງກອງທຶນ ເລກທີ 176/ຈມ,ຍມ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 177/ຈມ,ຍມ ລົງວັນທີ 26 ມິຖຸນາ 2019.
5. ບ້ານນາເຕືອນໃຈ ສ້າງຕັ້ງກອງທຶນ ເລກທີ 178/ຈມ,ຍມ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 179/ຈມ,ຍມ ລົງວັນທີ 26 ມິຖຸນາ 2019.
6. ບ້ານທ່າໂຈນ ສ້າງຕັ້ງກອງທຶນ ເລກທີ 180/ຈມ,ຍມ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 181/ຈມ,ຍມ ລົງວັນທີ 26 ມິຖຸນາ 2019.
7. ບ້ານບ້ານກະຈາມໃຫ່ຍ ສ້າງຕັ້ງກອງທຶນ ເລກທີ 319/ຈມ,ບພ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 318/ຈມ,ບພ ລົງວັນທີ 05 ສິງຫາ 2019.
8. ບ້ານກະຈາມນ້ອຍ ສ້າງຕັ້ງກອງທຶນ ເລກທີ 321/ຈມ,ບພ ແລະ ແຕ່ງຕັ້ງຄະນະກໍາມະການບໍລິຫານ ແລະ ກໍາມະການກວດກາກອງທຶນ ເລກທີ 320/ຈມ,ບພ ລົງວັນທີ 05 ສິງຫາ 2019.

▪ ຄັ້ງວັນທີ 21 ທັນວາ 2019 ຫາ 13 ມັງກອນ 2020 ທີມງານຄູຝຶກ ຂອງໂຄງການໄດ້ພາກັນລົງ ສົມທົບກັບຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ,ສະຫະພັນຍິງເມືອງ ຍົມມະລາດ ແລະ ເມືອງບົວລະພາ ໄດ້ລົງຝຶກອົບຮົມວຽກງານກອງທຶນໝູນວຽນໃຫ້ປະຊາຊົນຢູ່ທີ່ບ້ານຫາດຊອນ ເມືອງຍົມມະລາດ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 45 ທ່ານ ຍິງ 4 ທ່ານ ແລະ ຢູ່ບ້ານ ກະຈາມໃຫ່ຍ ເມືອງບົວລະພາ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 20 ທ່ານ ຍິງ 2 ທ່ານ ເຊິ່ງຮຽນຮູ້ກ່ຽວການຄຸ້ມຄອງເງິນກອງທຶນ,ການເບີກຈ່າຍ ແລະ ການສະຫຼູບບັນຊີກອງທຶນ.

▪ ຄັ້ງວັນທີ 25 ສິງຫາ ຫາ 01 ກັນຍາ 2020 ທີມງານຄູຝຶກ ຂອງໂຄງການໄດ້ພາກັນລົງ ສົມທົບກັບ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ,ສະຫະພັນຍິງເມືອງ ຍົມມະລາດ ແລະ ເມືອງບົວລະພາ ໄດ້ລົງຝຶກອົບຮົມ ແລະ ທົບທວນຄືນ ວຽກງານກອງທຶນໝູນວຽນໃຫ້ປະຊາຊົນຢູ່ທີ່ ໂຮງຮຽນມັດທະຍົມຕອນປາຍ ບ້ານແກ້ງມ່ວງ ເມືອງຍົມມະລາດ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 30 ທ່ານ ຍິງ 6 ທ່ານ ແລະ ຢູ່ບ້ານ ກະຈາມໃຫ່ຍ ເມືອງບົວລະພາ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 10 ທ່ານ ຍິງ 4 ທ່ານ ເຊິ່ງຮຽນຮູ້ກ່ຽວການຄຸ້ມຄອງເງິນກອງທຶນ,ການເບີກຈ່າຍ ແລະ ການສະຫຼູບບັນຊີກອງທຶນ.

## 2.12 ສະໜັບສະໜູນກິດຈະກາການຟື້ນຟູຊີວິດການເປັນຢູ່ (ທຶນໃຫ້ແກ່ 8 ບ້ານ).

ໂຄງການຍ່ອຍ ສະຫນັບສະຫນູນການວາງແຜນພັດທະນາການດໍາລົງຊີວິດຂັ້ນບ້ານ ໂດຍໃຊ້ວິທີການມີສ່ວນຮ່ວມ ເຊັ່ນ: ການວິເຄາະສະຖານະພາບຊຸມຊົນແບບມີສ່ວນຮ່ວມ PRA. ໂດຍຜ່ານຂະບວນການ ດັ່ງກ່າວນີ້, ບ້ານຈະສາມາດລະບຸໄດ້ຜົນກະທົບທາງລົບ ເນື່ອງຈາກການຈໍາກັດການເຂົ້າເຖິງຊັບພະຍາກອນທໍາມະຊາດ ເຊັ່ນດຽວກັນກັບ ບູລິມະສິດສໍາລັບ ການດໍາລົງຊີວິດທີ່ເຫມາະສົມກັບຄວາມຕ້ອງການ ແລະ ຄວາມສາມາດຂອງເຂົາເຈົ້າ ແລະ ແຜນພັດທະນາບ້ານ CAP ໄດ້ຮັບການຈັດຕັ້ງປະຕິບັດ.

▪ ບ້ານທີ່ຢູ່ອ້ອມຂ້າງປ່າປ້ອງກັນນໍ້າອີນ-ພູຫີນເຫຼັກໄຟ 8 ບ້ານ ປະຕິບັດໄດ້ມີຂະບວນການທົບທວນການນໍາໃຊ້ທີດິນ ແລະ ປ່າໄມ້,ມີສັນຍາອະນຸລັກຊີວະນາໆພັນ ແລະ ພ້ອມທັງຈັດຕັ້ງປະຕິບັດ ແຜນດໍາເນີນງານປັບປຸງຊີວິດການເປັນຢູ່ ໂດຍ

ຜ່ານຂະບວນການມີສ່ວນຮ່ວມຂອງຊຸມຊົນ ແລະ ໄດ້ເຮັດສັນຍາອະນຸລັກ ພ້ອມທັງສະໜັບສະ ໜູນທຶນກິດຈະກໍາ ພັດທະນາຊີວິດການເປັນຢູ່ໃຫ້ບ້ານ 08 ບ້ານ. ມູນຄ່າທັງໝົດປະມານ 992,000,000 ກີບ ເພື່ອພັດທະນາກິດຈະກໍາ ສ້າງນໍ້າປາປາຊຸມຊົນ 1 ບ້ານ,ກິດຈະກໍາລ້ຽງງົວ 120 ຄອບຄົວ,ກິດຈະກໍາກອງທຶນແມ່ຍິງ 150 ຄອບຄົວ,ກິດຈະກໍາແນວ ພັນເຂົ້າ 506 ຄອບຄົວ,ກິດຈະກໍາລ້ຽງແບ້ 31 ຄອບຄົວ,ຄົມມະນາຄົມນັກຮຽນ (ເຮືອພ້ອມຈັກ 2 ລໍາ ),ກິດຈະກໍາຕອບ ໂຕໄພພິບັດ 2 ຫຼັງ ແລະ ປັບປຸງວັງສະຫງວນ 7 ແຫ່ງ,ເຊິ່ງສາມາດສົ່ງເສີມ ຄອບຄົວທຸກຍາກ, ກຸ່ມບຸກລຸກປ່າໄມ້ ໃຫ້ຊຸມ ຊົນມີລາຍຮັບໃຫ້ດີຂຶ້ນ ແລະ ຫຼຸດຜ່ອນການທໍາລາຍປ່າໄມ້ ຕາມສັນຍາອະນຸລັກ ບາດກ້າວຕໍ່ໄປ ແມ່ນສືບຕໍ່ຕິດຕາມຊຸກຍູ້ ແລະ ປະເມີນຜົນ ຄຸ້ມຄອງໃຫ້ດີຂຶ້ນປະຊາຊົນໄດ້ມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ຫຼາຍຂຶ້ນ ໂດຍສະເພາະ ຫຼຸດຜ່ອນ ການເຂົ້າໄປຕັດໄມ້, ການລ່າສັດ, ການເກັບກູ້ເຄື່ອງປ່າຂອງດົງ ແລະ ບັນຫາໄຟໄໝ້ປ່າຫຼຸດໜ້ອຍລົງ.

## III.ອົງປະກອບທີ 3. ການບໍລິຫານ ແລະ ຕິດຕາມ ໂຄງການຍ່ອຍ

**- ຈຸດປະສົງ :**ເພື່ອຕິດຕາມຜົນໄດ້ຮັບຂອບໜ້າວຽກ ແລະ ແຜນການທີ່ວາງໄວ້ ລວມທັງ ການຄຸ້ມຄອງການເງິນ, ອຸປະກອນ,ພາຫະນະຮັບໃຊ້ ແລະ ສະຖານທີ່ເຮັດວຽກ ຕໍ່ການຈັດຕັ້ງປະຕິບັດບັນດາກິດຈະກໍາແລ້ວລາຍງານຄວາມ ຄືບໜ້າຂອງໂຄງການ.

### 3.1. ການລາຍງານຄວາມຄືບໜ້າ, ກວດກາຕິດຕາມ ແລະ ການປະເມີນຜົນການຈັດຕັ້ງປະຕິບັດຂອງໂຄງການຍ່ອຍ ຈະຕ້ອງບັນລຸຕາມແຜນວຽກ ແລະ ແຜນງົບປະມານ

- ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ແຂວງຄໍາມ່ວນ ໄດ້ແຕ່ງຕັ້ງ ທີມງານຂອງໂຄງການຍ່ອຍຂຶ້ນ ໂດຍເຮັດຂໍ້ ຕົກລົງຂອງທ່ານເຈົ້າແຂວງງຄໍາມ່ວນ ສະບັບເລກທີ 72/ຈຂ.ຄມ ລົງວັນທີ 15 ມີນາ 2018, ເພື່ອຮັບຜິດຊອບ ການ ຕິດຕາມກວດກາ ແລະ ການຄຸ້ມຄອງກິດຈະກໍາໂຄງການຍ່ອຍໃຫ້ສອດຄ່ອງກັບຄູ່ມືປະຕິບັດໂຄງການ LENS2 ລວມທັງ ການຄຸ້ມຄອງທາງດ້ານການເງິນ, ການຈັດຊື້ ແລະ ຕິດຕາມກວດກາການປະຕິບັດ ແລະ ການລາຍງານ.
- ວຽກງານຈັດຊື້-ຈັດຈ້າງຄື: ໄດ້ສໍາເລັດການກໍ່ສ້າງຫ້ອງການພາກສະໜາມ.
- ໄດ້ສໍາເລັດການຈັດຊື້: ເຄື່ອງເຟີນີເຈີ້ຫ້ອງການ, ເຄື່ອງໄອທີ, ກ້ອງຖ່າຍຮູບ,ກ້ອງສ່ອງ, ອຸປະກອນພາກສະໜາມ ແລະ ພາຫະນະລົດຈັກ,ລົດໃຫຍ່.
- ໄດ້ສໍາເລັດແຜນກິດຈະກໍາ, ແຜນງົບປະມານ ປະຈໍາເດືອນ, ປະຈໍາໄຕມາດ ແລະ ປະຈໍາປີ.
- ໄດ້ເຂົ້າຮ່ວມປະຊຸມປຶກສາຫາລື, ຝຶກອົບຮົມ ແລະ ຕິດຕາມປະເມີນຜົນຕາມການແຈ້ງເຊີນຂອງຫ້ອງການ ກປສ ແລະ ທະນາຄານໂລກເປັນປົກກະຕິ.
- ສໍາເລັດການກວດກາ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໂຄງການໄລຍະ 3 ເດືອນ, 6 ເດືອນ ແລະ ບົດສະຫຼຸບປະຈໍາປີ ສົ່ງບົດລາຍ ໃຫ້ ກປສ, ຄະນະຊີ້ນໍາ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັນກັບເວລາ.

### 3.2.ຈັດຕັ້ງປະຕິບັດໄດ້ຕາມແຜນປີ (ຢ່າງໜ້ອຍ 65 ປີທີ່1, 75 ປີທີ່ 2 ແລະ 90 ປີສຸດທ້າຍ)

ຜົນສໍາເລັດຂອງບັນດາກິດຈະກໍາໃນແຕ່ລະປີມີຄື:

- ປີທີ່1: ປະຕິບັດໄດ້ 65 ເປີເຊັນ
- ປີທີ່2: ປະຕິບັດໄດ້ 79 ເປີເຊັນ
- ປີທີ່3: ປະຕິບັດໄດ້ 93 ເປີເຊັນ
- ປີທີ່4: ປະຕິບັດໄດ້ 100 ເປີເຊັນ

ຜົນສໍາເລັດຂອງໜ້າວຽກແມ່ນໄດ້ດີ ຍ້ອນວ່າໄດ້ຮັບການຊີ້ ນໍາຈາກຫົວໜ້າຄະນະພະແນກກະສິກໍາແລະ ປ່າໄມ້, ທີມງານຈາກ ສູນກາງຊ່ວຍຊຸກຍູ້ໃຫ້ການແນະນໍາ ແລະ ທີມງານໂຄງການ ທຸກພາກສ່ວນໄດ້ເອົາໃຈໃສ່ປະຕິບັດຕາມ ແຜນໂຄງການ, ຕາມການຊີ້ນໍາຂອງຂັ້ນເທິງ,

## 2.6 ຂໍ້ຫຍຸ້ງຍາກ ແລະບັນຫາສຳຄັນ ທີ່ພົບພໍ້ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃສ່ລາຍການ ບັນຫາຕ່າງໆ ທີ່ພົບພໍ້ ແລະວິທີການ/ມາດຕະການແກ້ໄຂ ບັນຫາເຫລົ່ານັ້ນ.

| *ບັນຫາທີ່ພົບພໍ້* | *ວິທີການ/ມາດຕະການທີ່ໄດ້ນຳໃຊ້ ໃນການແກ້ໄຂ* |
|---|---|
| *1. ການຈັດຕັ້ງປະຕິບັດໂຄງການ ພະນັກງານຈຳນວນໜຶ່ງຍັງບໍ່ມີປະສົບການມາກ່ອນ ໂດຍສະເພາະດ້ານການຈັດຊື້-ຈັດຈ້າງ ແລະ ດ້ານການເງິນ ອາໃສວິທີການ ທັງຮຽນທັງ ເຮັດໄປພ້ອມໆກັນ ອັນພາໃຫ້ມີຄວາມຊັກຊ້າໃນບາງໜ້າວຽກ.* | *ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ເພີ້ມກິດຈະກຳຝຶກອົບຮົມ ແລະ ເຮັດກັບທີ່ຫລາຍຂຶ້ນດ້ານຕ່າງໆ ເຮັດໃຫ້ພະນັກງານການເງິນ ແລະ ຈັດຊື້-ຈັດຈ້າງ ຈາກແຕ່ລະປີ ສາມາດຈັດຕັ້ງປະຕິບັດສຳເລັດ* |
| *2. ດ້ານບຸກຄະລະກອນເຮັດວຽກຄຸ້ມຄອງປ່າປ້ອງກັນ ຍັງມີຈຳນວນໜ້ອຍ ບໍ່ພຽງພໍກັບໜ້າວຽກ* | *ໄດ້ປຶກສາກັບຄະນະຊີ້ນຳເພື່ອຊ່ວຍປະກອບດ້ານບຸກຄະລະກອນ ມີປະສົບການໃນການຈັດຕັ້ງປະຕິບັດໂຄງການ* |
| *3. ວຽກງານ ຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຄຸ້ມຄອງ ປ່າສະຫງວນ-ປ່າປ້ອງກັນ ດ້ານການໂຄສະນາເຜີຍແຜ່ ແລະ ການກວດກາລາດຕະເວນ , ການວາງແຜນພັດທະນາຊຸມຊົນ* | *ໄດ້ປະສານງານກັບ ກົມປ່າໄມ້ ເພື່ອຊ່ວຍຈັດຫາຊ່ຽວຊານ ມາຝຶກອົບຮົມ ສ້າງຄວາມເຂັ້ມແຂງພະນັກງານຄຸ້ມຄອງປ່າສະຫງວນ-ປ່າປ້ອງກັນ ໄດ້ທັນກັບເວລາ.* |
| *4. ການນຳໃຊ້ເຄື່ອງມືພາກສະໜາມໃນການກວດກາລາດຕະເວນຍັງບໍ່ທັນສຳນານດີໂດຍສະເພາະໂປຣດແກຣມ SMART* | *ໄດ້ປະສານສົມທົບກັບກົມປ່າໄມ້ ແລະ ພາກສ່ວນກ່ຽວພັນ ໃນການສົ່ງພະນັກງານ ເຂົ້າຮ່ວມຝຶກອົບຮົມ ແລະ ນຳພາລົງເຮັດຕົວຈິງຢູ່ພາກສະ<br>ໜາມ ສາມາດມານຳໃຊ້ໄດ້* |
| *5. ການມີສວນຮ່ວມ ແລະ ຄວາມເປັນເຈົ້າການຕໍ່ກັບວຽກງານການອະນຸລັກ ຂອງປະຊາຊົນ ຍັງປະຕິບັດບໍ່ໄດ້ດີ ເທົ່າທີ່ຄວນ ສະແດງອອກຍັງມີການ ລັກລອບລ່າສັດ ແລະ ການເກັບກູ້ເຄື່ອງປ່າຂອງ ດົງແບບຊະຊາຍ.* | *ໄດ້ເພີ່ມທະວີ ວຽກງານໂຄສະນາເຜີຍແຜ່ ປູກຈິດສຳນຶກດ້ານວຽກງານອະນຸລັກຊີວະນາໆພັນ ໃຫ້ຫຼາຍຂຶ້ນ ຈາກປີລະຄັ້ງຕໍ່ບ້ານ ເປັນປີລະ 2ຄັ້ງ ແລະ ເພີ່ມທະວີການກວດກາລາດຕະເວນ , ການບັງຂັບໃຊ້ກົດໝາຍ ໃຫ້ມີຄວາມເຂັ້ມງວດ* |

## III. ແຜນການ ແລະ ທິດທາງຕໍ່ໜ້າ

ຂໍ້ນີ້ ຂໍໃຫ້ອະທິບາຍ ແຜນການ ລວມທັງ ແຜນການຕິດຕາມ-ສືບຕໍ່ ຫລື ບົດສະເໜີ, ການຜັນຂະຫຍາຍໂຄງການຕໍ່ໜ້າ, ການຜັນຂະຫຍາຍຮູບແບບໄປບ່ອນອື່ນ, ເພື່ອຮັກສາໂຄງການໃຫ້ມີຄວາມຍືນຍົງໃນຕໍ່ໜ້າ. ຈະເຮັດແນວໃດເພື່ອໃຫ້ບັນລຸ ແລະໃຜຈະເປັນຄົນເຮັດ.

1. ໃຫ້ສືບຕໍ່ນຳໃຊ້ພະນັກງານພະນັກງານຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ ທີໄດ້ຜ່ານການຝຶກອົບຮົມດ້ານວິຊາການຕ່າງໆມາແລ້ວ ໄດ້ມີຄວາມຮູ້, ຄວາມສາມາດ ດ້ານການຄຸ້ມຄອງຊັບພະຍາກອນປ່າໄມ້ ເພື່ອໝູນໃຊ້ເຂົ້າໃນການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນໃນຕໍ່ໜ້າໃຫ້ດີຂຶ້ນ.
2. ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມໃນເຂດປ່າສະຫງວນ ໂດຍສະເພາະແມ່ນ ການກຳນົດເຂດຫ້ວງຫ້າມ ແລະ ເຂດຄຸ້ມຄອງນຳໃຊ້ຕາມລະບຽບກົດໝາຍ ເປັນບົດຮຽນທີ່ດີ ແຕ່ຕ້ອງໄດ້ມີການຕິດຕາມກວດກາຢ່າງຕໍ່ເນື່ອງ.ໂດຍຫ້ອງການກະສິກຳ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

3. ການສະໜັບສະໜູນກອງທຶນພັດທະນາຊີວິດການເປັນຢູ່ເພື່ອການອະນຸລັກໃຫ້ຊາວບ້ານ ເປັນວຽກງານໜຶ່ງທີ່ສ້າງແຮງຈູງໃຈໃຫ້ຊາວບ້ານມີສ່ວນຮ່ວມໃນການປົກປັກຮັກສາປ່າໄມ້, ເປັນການສ້າງວຽກເຮັດງານທຳ, ສ້າງລາຍໄດ້ ເພື່ອແກ້ໄຂຄວາມທຸກຍາກ ແລະ ຫຼຸດຜ່ອນການຊົມໃຊ້ຊັບພະຍາກອນປ່າໄມ້.ໂດຍການຄຸ້ມຄອງຂອງຄະນະກຳມະການຂັ້ນບ້ານ ແລະ ໄດ້ຮັບການສະໜັບສະໜູນຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ.
4. ພາຍຫຼັງໂຄງການໄດ້ສຳເລັດແມ່ນໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ແຕ່ລະເມືອງປະສານກັບຂະແໜງການທີ່ກ່ຽວຂ້ອງ ລົງຕິດຕາມຊຸກຍູ້ກອງທຶນພັດທະນາຊີວິດການເປັນຢູ່ເພື່ອການອະນຸລັກຊັບພະຍາກອນປ່າໄມ້ແຕ່ລະບ້ານ ຕາມພະລະບົດບາດ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
5. ຊອກຫາແຫຼ່ງທຶນມາຄຸ້ມຄອງ ແລະ ພັດທະນາປ່າປ້ອງກັນນ້ຳອິນທ-ພູຫິນເຫຼັກໄຟ ຕາມແຜນຄຸ້ມຄອງ 2021-2025 ເພື່ອໃຫ້ເຮັດໃຫ້ມີການດຳເນີນກິດຈະກຳຕໍ່ເນື່ອງ,ເພື່ອຄຸ້ມຄອງລະບົບປ່າປ້ອງກັນໃຫ້ມີຄວາມຍືນຍົງ.

## IV. ສະຫຼຸບສັງລວມ

ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃນໄລຍະຜ່ານມາແມ່ນໄດ້ຮັບຜົນສຳເລັດໄປຕາມທີ່ແຜນທີ່ວາງໄວ້ຍ້ອນການເອົາໃຈໃສ່ຂອງຄະນະຊີ້ນຳ ຢ່າງໃກ້ກິດຕິດແທດ ແລະ ເປັນປະຈຳ ໃນການຊີ້ນຳ-ນຳພາ ແລະ ຄວາມຫ້າວຫັນໃນການການປະຕິບັດວຽກງານຂອງທີມງານວິຊາການຈັດຕັ້ງປະຕິບັດໂຄງການ, ການມີສ່ວນຮ່ວມຈາກຂະແໜງການທີ່ກ່ຽວຂອງຂັ້ນແຂວງ, ເມືອງ, ບ້ານເປົ້າໝາຍ ແລະ ຍ້ອນການສະໜັບສະໜູນ, ຕິດຕາມຊຸກຍູ້ ທາງດ້ານວິຊາການ ຈາກກົມປ່າໄມ້ ແລະ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມຢ່າງຕໍ່ເນື່ອງ ຈຶ່ງເຮັດໃຫ້ໂຄງການດັ່ງກ່າວປະສົບຜົນສຳເລັດ ແລະ ບັນລຸຕາມຕົວຊີ້ວັດທີ່ວາງໄວ້. ຊຶ່ງເຫັນໄດ້ຜົນງານຈາກການຕີລາຄາຂອງຂອງທະນາຄານໂລກ ແລະ ກປສ ໂດຍຕີລາຄາໃນລະດັບເພິ່ງພໍໃຈ (S ຫາ HS) ຊຶ່ງມີຜົນສຳເລັດດັ່ງລຸ່ມນີ້:

1. ພະນັກງານຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ ແລະ ບ້ານ ໄດ້ຮັບການຝຶກອົບຮົມດ້ານວິຊາການຕ່າງໆເພີ່ມຄວາມອາດສາມາດໃຫ້ຄະນະຊີ້ນຳ, ພະນັກງານໂຄງການຂັ້ນແຂວງ, ເມືອງ ແລະ ພະນັກ ງານວິຊາການຂອງກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ໄດ້ມີຄວາມຮູ້ດ້ານວິຊາການໃນການປະສານງານ ແລະ ຄຸ້ມຄອງປ່າສະຫງວນ ແລະ ສັດປ່າໄດ້ດີຂຶ້ນ.

2. ປ່າປ້ອງກັນນ້ຳອິນ-ພູຫິນເຫຼັກໄຟ ໄດ້ຮັບການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ແບບມີສ່ວນຮ່ວມ ໂດຍສະເພາະແມ່ນ ການກຳນົດເຂດຫ້ວງຫ້າມ ແລະ ເຂດຄຸ້ມຄອງນຳໃຊ້ ພ້ອມທັງປັກຫຼັກໝາຍຂອບເຂດ ແລະ ຕິດປ້າຍແຜນທີ່, ແຕ່ລະບ້ານໄດ້ຮັບການຈັດສັນ ຂອບເຂດທຳການຜະລິດກະສິກຳ ແລະ ຂອບເຂດປ່າໄມ້ຢ່າງຈະແຈ້ງ.

3. ໄດ້ມີທີມງານກວດກາລາດຕະເວນເພື່ອປ້ອງກັນ ແລະ ສະກັດກັ້ນການທຳລາຍປ່າໄມ້ ແລະ ສັດນ້ຳ-ສັດປ່າເປັນປົກກະ ຕິໂດຍການນຳໃຊ້ໂປຣແກມສະມາດໃນການບັນທຶກ ແລະ ເກັບກຳຂໍ້ມູນ.

4. ບັນຫາໄພຂົ່ມຂູ່ຕໍ່ປ່າປ້ອງກັນ ເຊັ່ນ: ການນຳໃຊ້ທີ່ດິນ, ຕັດໄມ້, ລ່າສັດ, ເກັບກູ້ເຄື່ອງປ່າຂອງດົງ ແລະ ບັນຫາການຄ້າຂາຍສັດປ່າ ແມ່ນຫຼຸດລົງ ເມື່ອທຽບກັບໄລຍະກ່ອນການຈັດຕັ້ງປະຕິບັດໂຄງການ.

5. ປະຊາຊົນ 08 ບ້ານເປົ້າໝາຍໂຄງການໄດ້ຮັບເງິນກອງທຶນໃນການປັບປຸງຊີວິດການເປັນຢູ່ ແລະ ປະຕິບັດຂໍ້ຕົກລົງວ່າດ້ວຍການອະນຸລັກຊັບພະຍາກອນປ່າໄມ້ໃນເຂດປ່າປ້ອງກັນນ້ຳອິນ-ພູຫິນເຫຼັກໄຟ.

6. ພະນັກງານ, ປະຊາຊົນ, ຊາວຄ້າຂາຍ ແລະ ນັກຮຽນ ຢູ່ອ້ອມຂ້າງປ່າປ້ອງກັນ ໄດ້ຮັບຄວາມຮູ້, ຄວາມເຂົ້າໃຈ ໃນຄວາມສຳຄັນຂອງຊັບພະຍາກອນປ່າໄມ້-ສັດນ້ຳ ສັດປ່າ ໂດຍຜ່ານການໂຄສະນາເຜີຍແຜ່ປູກຈິດສຳນຶກວຽກງານການອະນຸລັກ.

7. ແຜນຄຸ້ມຄອງປ່າປ້ອງກັນນ້ຳອິນ-ພູຫິນເຫຼັກໄຟ ໃນໄລຍະ 5 ປີ 2021-2025 ໄດ້ຮັບຮອງທາງດ້ານວິຊາການຈາກກົມປ່າໄມ້ ແລະ ໄດ້ຮັບການອະນຸມັດຈາກເຈົ້າແຂວງຄຳມ່ວນ.

## V. ຂໍ້ສະເໜີແນະ ອີງໃສ່ບົດຮຽນທີ່ຖອດຖອນໄດ້

### ກ. ຄວນຈະເຮັດຫຍັງໃນຕໍ່ໜ້າ?

1. ສືບຕໍ່ຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າປ້ອງກັນນໍ້າອິນ-ພູທີນເຫຼັກໄຟ ໃນໄລຍະ 5 ປີ (2021-2025) ທີ່ໄດ້ຮັບອະນຸມັດ.
2. ສືບຕໍ່ຕິດຕາມ, ຊຸກຍູ້ ກອງທຶນພັດທະນາບ້ານທີ່ໄດ້ສະໜັບສະໜູນທຶນພັດທະນາຊີວິດການເປັນຢູ່ຂອງຊຸມຊົນແລ້ວ ຕິດພັນກັບຂໍ້ຕົກລົງວ່າດ້ວຍການອະນຸລັກຊັບພະຍາກອນປ່າໄມ້.
3. ສືບຕໍ່ໃນການໝູນໃຊ້ພະນັກງານທີມງານໂຄງການທີ່ໄດ້ຜ່ານການຝຶກອົບຮົມ ແລະ ປະຕິບັດຕົວຈິງ ໃນການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນໃນຕໍ່ໜ້າໃຫ້ດີຂຶ້ນ.

### ຂ. ຄວນຈະຫລີກເວັ້ນຫຍັງໃນຕໍ່ໜ້າ?

1. ຄວນຫຼີກລ້ຽງໃນການສັບປ່ຽນພະນັກງານຮັບຜິດຊອບວຽກງານໂຄງການ(ພະນັກງານ ກປສ ແລະ ປະນັກງານໂຄງການຍ່ອຍ) ເພາະພະນັກງານທີ່ເຄີຍເຮັດມາ ແມ່ນໄດ້ຜ່ານການຝຶກອົບຮົມຫຼາຍຄັ້ງໄດ້ມີຄວາມຊໍານານ ແລະ ເຂົ້າ ໃຈວຽກງານດີແລ້ວ. ຖ້າມີຄວາມຈໍາເປັນສັບປ່ຽນຕ້ອງໄດ້ມີການຝຶກອົບຮົມໃໝ່ໃຫ້ເຂົ້າໃຈວຽກງານລະບົບປະສານງານ ແລະ ມີການມອບ-ຮັບໜ້າວຽກຢ່າລະອຽດ.
2. ຄວນຫຼີກລຽງບັນຫາການເຮັດວຽກລ້າຊ້າ, ແກ່ຍາວ ບໍ່ໄປຕາມແຜນຂອງໂຄງການ ເຮັດໃຫ້ໄດ້ຕໍ່ເວລາຈັດຕັ້ງປະຕິບັດໂຄງການຫຼາຍຄັ້ງ.

### ຄ. ຂໍ້ແນະນໍາລວມອື່ນໆ

1. ຄວນຊອກຫາງົບປະມານທັງພາຍໃນ ແລະ ຕ່າງປະເທດ ເພື່ອມາຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າປ້ອງກັນນໍ້າອິນ-ພູທີນເຫຼັກໄຟ ໃນໄລຍະ 5 ປີ (2021-2025) ທີ່ໄດ້ຮັບອະນຸມັດ ໂດຍສະເພາະການອະນຸລັກປ່າໄມ້ ທີ່ເປັນທາງທ່ຽວຂອງສັດປ່າ ໄປມາ ລະຫວ່າງ ອຸທິຍານແຫ່ງຊາດນາກາຍ-ນໍ້າເທີນ ກັບ ອຸທິຍານແຫ່ງຊາດຫີນໜາມໜໍ່.
2. ສ້າງພະນັກງານຜູ້ທີ່ມີຜົນງານໄປຍົກລະດັບດ້ານວິຊາສະເພາະ ແລະ ພາສາຕ່າງປະເທດໃຫ້ສູງຂຶ້ນຕາມຄວາມສາມາດຂອງຜູ້ກ່ຽວ.
3. ສ້າງບ້ານຕົວແບບດ້ານການອະນຸລັກ ແລະ ມີສ່ວນຮ່ວມທີ່ດີໃນການຄຸ້ມຄອງປ່າປ້ອງກັນ ໃນບ້ານເປົ້າໝາຍຂອງໂຄງການທີ່ໄດ້ສະໜອງທຶນໃຫ້.

ວັນທີ :24..1..2022

ຢັ້ງຢືນໂດຍ:

ຮອງ ຫົວໜ້າ ພະແນກກະສິກໍາ ແລະ ປ່າໄມ້ແຂວງຄໍາມ່ວນ

ໄຄສີ ດາລາສີ

ກະກຽມໂດຍ: ໂຄງການຍ່ອຍ LENS2-016



CS ສະແກນດ້ວຍ CamScanner

ສຳລັບ ກປສ **ເທົ່ານັ້ນ:**

1. ຜົນສຳເລັດ ຕາມຈຸດປະສົງ, ຜົນໄດ້ຮັບຫຼັກ ແລະ ຜົນໄດ້ຮັບຍ່ອຍ ຂອງໂຄງການຍ່ອຍ

_____________________________________________________________________________

_____________________________________________________________________________

2. ຜົນສຳເລັດ ຕາມກອບດ້ານເວລາ

_____________________________________________________________________________

_____________________________________________________________________________

3. ຜົນງານດ້ານການເງິນ ແລະ ຈັດຊື້-ຈັດຈ້າງ___________________________

_____________________________________________________________________________

_____________________________________________________________________________

4. ຜົນງານດ້ານ ກົນໄກການຈັດຕັ້ງ ແລະດ້ານບຸກຄະລາກອນ ລວມທັງການປະເມີນຄວາມສາມາດ

_____________________________________________________________________________

_____________________________________________________________________________

5. ບົດຮຽນທີ່ຖອດຖອນໄດ້ ແລະຄຳແນະນຳໃນຕໍ່ໜ້າ (ຈະເຮັດຫຍັງ, ບໍ່ເຮັດຫຍັງ, ຈະເລີ່ມເຮັດຫຍັງ?)

ສືບຕໍ່ເຮັດຫຍັງ: _________________________________________________________

_____________________________________________________________________________

ສິ່ງທີ່ບໍ່ຄວນເຮັດອີກ: ____________________________________________________

_____________________________________________________________________________

ມີອັນໃດໃໝ່/ຈະເລີ່ມເຮັດໃນຕໍ່ໜ້າ: ___________________________________

_____________________________________________________________________________

6. ການຈັດອັນເກນອັນດັບຜົນສຳເລັດຂອງໂຄງການ

- ພໍໃຈຫຼາຍ ☐
- ພໍໃຈ ☐
- ພໍໃຈປານກາງ ☐
- ບໍ່ພໍໃຈປານກາງ ☐
- ບໍ່ພໍໃຈ ☐

7. ຜົນສໍາເລັດດ້ານຜົນໄດ້ຮັບຍ່ອຍໂຄງການ

จำนวนผลได้รับย่อย ທີ່ຕັ້ງໄວ້_________________

ຈຳນວນໝາກຜົນ ທີ່ບັນລຸໄດ້_______________

ເປີເຊັນ ການຈັດເກນຜົນງານ_______________

ກະກຽມໂດຍ:

ຊື່ແລະລາຍເຊັນ:_________________________________ ວັນທີ:
_________________________________

ຕຳແໜ່ງ: _________________________________________

ກວດໂດຍ:

ຊື່ແລະລາຍເຊັນ:_________________________________ ວັນທີ:
_________________________________

ຕຳແໜ່ງ: _________________________________________

| | |
|---|---|
| Project Development Objective (PDO) | ສ້າງຄວາມເຂັ້ມແຂງໃຫ້ລະບົບການປົກປັກຮັກສາສິ່ງແວດລ້ອມ ໂດຍສະເພາະ ການຄຸ້ມຄອງປ່າສະຫງວນ, ການບັງຄັບໃຊ້ກົດໝາຍ ສັດນໍ້າ-ສັດປ່າ ແລະ ການປະເມີນຜົນ ດ້ານສິ່ງແວດລ້ອມ. |
| SP development objective | ເພື່ອສ້າງຄວາມເຂັ້ມແຂງແກ່ພະນັງງານວິຊາການຂັ້ນແຂວງ, ເມືອງ ແລະ ຊຸມຊົນໃນການຄຸ້ມຄອງປ່າປ້ອງກັນນໍ້າອືນ-ພູຫີນເຫຼັກໄຟ ໃຫ້ມີປະສິດທິພາບສູງ ແລະ ຮັບປະ ກັນທາງດ້ານຊີວິດການເປັນຢູ່ຂອງຊຸມຊົນທີ່ຢູ່ອ້ອມຂ້າງປ່າປ້ອງກັນໃຫ້ດີຂຶ້ນຢ່າງຕໍ່ເນື່ອງ ແລະ ມີຄວາມຍືນຍົງ. |

| ຕົວຊີ້ວັດ | ຫົວໜ່ວຍ | | ຂໍ້ມູນພື້ນຖານ | ແຜນ | ຕົວເລກ ເປົ້າໝາຍ 2018 | 2019 | 2020 | 2021 | ຄວາມຖີ່ການລາຍງານ | ແຫຼ່ງຂໍ້ມູນ ວິທີການ | ຜູ້ຮັບຜິດຊອບເກັບກຳຂໍ້ມູນ | ຜູ້ຮັບຜິດຊອບການວິໃຈ ແລະ ລາຍງານ | ບັນລະຍາຍ (ນິຍາມຕົວຊີ້ວັດ) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|
| **ໂຄງການຍ່ອຍທີ່ພົວພັນກັບຕົວຊີ້ວັດຜົນຮັບຂອງຈຸດປະສົງການພັດທະນາໂຄງການ** | | | | | | | | | | | | | | |
| **ຕົວຊີ້ວັດ 1:** ພື້ນທີ່ໃນເຂດປ່າປ້ອງກັນ ນໍ້າອືນ - ພູຫີນເຫຼັກໄຟ ໄດ້ຮັບການປັບປຸງການປົກປັກຮັກສາດ້ານຊີວະນາໆ ພັນ ວັດແທກໂດຍ ຄະແນນຂອງປະສິດທິຜົນການຄຸ້ມຄອງ (ປະຈຳປີ). ຕົວຊີ້ວັດຜົນໄດ້ຮັບ (PDO ຕົວຊີ້ວັດ 1) | # | | ແຜນ | 8 | 22 | 31 | 37 | 37 | ປະຈຳປີ | ບົດລາຍງານໂຄງການ, M&E, METT | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | 1. ຈັດກອງປະຊຸມປພເມີນເຄື່ອງມືການຕິດຕາມ-ປະເມີນປະສິດທິພາບ ການຄຸ້ມຄອງໂຄງການ ( METT),ທີ່ລີສອດສາຍພູຫຼວງເມືອງບົວລະພາ ໃນຄັ້ງວັນທີ 15-16 ກຸມພາ 2021 ມີຜູ້ເຂົ້າຮ່ວມ 31 ທ່ານ ,ຍິງ3 ທ່ານ. |
| | | | ປັບປຸງ | | 22 | 31 | 37 | 37 | | | | | | |
| | | | ຕົວຈິງ | | TBD | 35 | 35 | 40 | | | | | | |
| **ຕົວຊີ້ວັດ 2:** ເພີ່ມຄະແນນຄວາມສາມາດໃນການເຄື່ອນໄຫວຂອງທີມງານ ຄຸ້ມຄອງປ່າປ້ອງກັນ ນໍ້າອືນ - ພູຫີນເຫຼັກໄຟ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ(ສະສົມ) (ຈຸດປະສົງ LENS2 ຕົວຊີ້ວັດ 3). | | | ແຜນ | #REF! | 18% | 23% | 35% | 38% | ປະຈຳປີ | ຕາຕະລາງດັດສະນີ, ຕື່ມລົງ ເປັນແຕ່ລະສະຖາບັນ ຂຶ້ນກັບຄະແນນ ສູງສຸດແມ່ນ 100 ຄະແນນ | ກົມແຜນການ ກວດສອບ (ກອງປະຊຸມກັບບັນດາສະຖາບັນທີ່ກ່ຽວຂ້ອງ) | ກົມແຜນການ | | ສຳລັບຕົວຊີ້ວັດນີ້ແມ່ນໄດ້ມີການປະເມີນໃນທ້າຍເດືອນ 6 ປີ 2020 ຮ່ວມກັບຄະນະຊີ້ນຳຂັ້ນພະແນກ,ກອງ ແລະ ວິຊາການ ໂຄງການ ເຊິ່ງມັນໄດ້ສະແດງໃຫ້ເຫັນໃນແຕ່ລະຂໍ້ທີ່ເພີ່ມຂຶ້ນ :<br>1. ຈຳນວນພະນັກງານ ແລະ ຄວາມສາມາດເຂົ້າໃຈຂອງຄູ່ຮ່ວມງານ<br>- PFRM ມີຈຳນວນພະນັກງານດີ (30) ທີ່ເກືອບເຄິ່ງໜຶ່ງເຮັດວຽກນີ້ປະຈຳ (40%) ແລະ ໄດ້ຮັບການຝຶກອົບຮົມນັບທັງຄູ່ຮ່ວມງານຂອງເຂົາ. (ເພີ່ມຂຶ້ນ ຈາກ 4 ເປັນ 5 )<br>2. ສ້າງກົນໄກ ການປະສານງານ<br>- ມີຄະນະກຳມະການປ່າສະຫງວນ ແລະ ການຈັດຕັ້ງການຄຸ້ມຄອງປ່າສະຫງວນ (ສຳລັບ 1 ແຫ່ງ) ທີ່ມີການດຳເນີນດີພໍຄວນ,ພົວພັນຄະນະກຳມະການສິ່ງແວດລ້ອມຂັ້ນແຂວງໄດ້ເປີດກອງປະຊຸມປຶກສາຫາລືຮ່ວມກັນບາງຄັ້ງທີ່ກ່ຽວພັນກັບປ່າສະຫງວນ ໂດຍມີການຈັດຕັ້ງການຄຸ້ມຄອງປ່າສະຫງວນ (ສຳລັບ 1 ແຫ່ງ). PFRM ໄດ້ມີຂັ້ນຕອນ ແລະ ສາຍພົວພັນດ້ານການສ້າງແຜນການ ແລະ ລາຍງານໃນລະດັບຊາດ ພ້ອມສົ່ງຂໍ້ມູນໃຫ້ຄູ່ຮ່ວມງານຫຼັກ. (ເພີ່ມຂຶ້ນຈາກ3 ເປັນ 4 )<br>7. ການຊີ້ນຳ<br>- ມີການຊີ້ນຳຢ່າງດີດ້ານວຽກງານອະນຸລັກຈາກອົງການຈັດຕັ້ງລະດັບແຂວງ, ຄະນະກຳມະການສິ່ງແວດລ້ອມຂັ້ນແຂວງໄດ້ພິຈາລະນາເປັນວາລະຂອງໜ້າວຽກທີ່ສຳຄັນ ແລະ ຕ້ອງໄດ້ລະດົມທຶນເພື່ອສະໜັບສະໜູນໃນວຽກນີ້. (ເພີ່ມຂຶ້ນ ຈາກ 4 ເປັນ 5 ) |
| | | | ປັບປຸງ | | 29% | 36% | 55% | | | | | | | |
| | | | ຕົວຈິງ | | TBD | 33% | 38% | 41% | | | | | | |
| **ໂຄງການຍ່ອຍທີ່ພົວພັນກັບຕົວຊີ້ວັດ ຜົນຮັບໄລຍະກາງຂອງໂຄງການ** | | | | | | | | | | | | | | |
| **ຕົວຊີ້ວັດ 3:** ຈຳນວນພະນັກງານຄຸ້ມຄອງປ່າປ້ອງກັນ ນໍ້າອືນ - ພູຫີນເຫຼັກໄຟ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ ທີ່ໄດ້ຮັບການຝຶກອົບຮົມ ຫລັກສູດສາມັນ ໄລຍະສັ້ນ ຫຼື ເຂົ້າຮ່ວມໃນການທັດສະນະສຶກສາ (ການຝຶກອົບຮົມ w / ຫລັກສູດຫລາຍກ່ວາ 16 ຊົ່ວໂມງ ແລະ ໜ້ອຍກ່ວາ 80 ຊົ່ວໂມງ ແລະ ມີບຸກຄົນໃດນຶ່ງທີ່ໄດ້ຮັບການຝຶກຫຼາຍວິຊາ ແມ່ນ ນັບເປັນຜູ້ໄດ້ຮັບປະໂຫຍດ ຫລາຍຄົນ) (ແບບສະສົມ). (ຜົນໄດ້ຮັບ LENS2 ຕົວຊີ້ວັດ 1.1) | # | ລວມ | ແຜນ | 0 | 43 | 116 | 146 | 126 | ປະຈຳປີ | ລາຍງານໂດຍ ຜູ້ຈັດຝຶກອົບຮົມ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | 1. ຄະນະຊີ້ນຳແຂວງ,ເມືອງ ແລະ ອຳນາດການປົກຄອງບ້ານໄປທັດສະນະສຶກສາແລກປ່ຽນບົດຮຽນກ່ຽວກັບວຽກງານສັນຍາອະນຸລັກ ທີ່ແຂວງວຽງຈັນ, ຄັ້ງວັນທີ 05-08 ມັງກອນ 2021 ຜູ້ເຂົ້າຮ່ວມທັງໝົດ 19 ທ່ານ, ຍິງ 6 ທ່ານ .ສາມາດຖອດຖອນບົດຮຽນໄດ້ດັ່ງນີ້: - ການປູກພືດອິນຊີຂອງຊາວບ້ານໆບຸ່ງຜ້າວ ເມືອງທຸລະຄົມ ແຂວງວຽງຈັນ,ການລ້ຽງງົວທອມຂອງປະຊາຊົນບ້ານ (ໂຄງການພັດທະນາຊົນນະບົດແບບມີສ່ວນຮ່ວມ ) ແລະ ການສ້າງຕັ້ງວັງສະຫງວນອະນຸລັດສັດນໍ້າຢູ່ບ້ານຜາຕັ້ງ ເມືອງວັງວຽງ ແຂວງວຽງຈັນ.<br>2. ຝຶກອົບຮົມຮ່າງບົດລາຍງານສະຫຼຸບປົກໂຄງການ,ຢູ່ທີ່ຫ້ອງປະຊຸມໂຮງແຮມຮຸ່ງທິບ ນະຄອນໄກສອນ ແຂວງ ສະຫັວນນະເຂດ, ຄັ້ງວັນທີ 17 ຫາ 20 ກຸມພາ 2021 ຈຳນວນ 5 ທ່ານ,ຍິງ 2 ທ່ານ. |
| | | | ປັບປຸງ | | 23 | 40 | 80 | | | | | | | |
| | | | ຕົວຈິງ | | 23 | 64 | 134 | 141 | | | | | | |
| | | ເພດຍິງ | ແຜນ | 0 | 20 | 20 | 20 | 20 | | | | | | |
| | | | ປັບປຸງ | | 20 | 20 | 20 | 20 | | | | | | |
| | | | ຕົວຈິງ | | 8 pp | 15 pp | 33 pp | 33 pp | | | | | | |
| **ຕົວຊີ້ວັດ 4:**ຮ່າງແຜນການຄຸ້ມຄອງປ່າປ້ອງກັນ ນໍ້າອືນ - ພູຫີນເຫຼັກໄຟ ເຊິ່ງຈະໄດ້ຮັບການພັດທະນາຂຶ້ນໂດຍ ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ ຮ່ວມກັບກຸ່ມຜູ້ມີສ່ວນຮ່ວມ ແລະ ມີກອງປະຊຸມ ແລະການປຶກສາຫາລື ຢູ່ຂັ້ນເມືອງ ແລະ ບ້ານ ໂດຍຜ່ານວິທີການແບບມີສ່ວນຮ່ວມ. (ຜົນໄດ້ຮັບລະດັບກາງ LENS2 ຕົວຊີ້ວັດ 1.3) ການພັດທະນາລະບົບ ແຜນ ການອະນຸລັກລະດັບຊາດ ແລະ ປົກປັກຮັກສາ ແລະ ການຄຸ້ມຄອງ ປ່າປ້ອງກັນ (ສະສົມ). | # | | ແຜນ | 0 | Draft/ review | Finalize approval (MAF DOF) | - | Finalize approval (MAF DOF) | ປະຈຳປີ | ບົດລາຍງານໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ໄດ້ຖືກເຊັນຮັບຮອງນຳທ່ານເຈົ້າແຂວງແລ້ວ |
| | | | ປັບປຸງ | | | Draft/ review | Finalize approval (MAF DOF) | | | | | | | |
| | | | ຕົວຈິງ | | ມີຮ່າງແຜນຄຸ້ມຄອງ | ມີຮ່າງແຜນຄຸ້ມຄອງ | ສຳເລັດຜ່ານຮ່າງແຜນຄຸ້ມຄອງ | ສຳເລັດແລ້ວ | | | | | | |
| **ຕົວຊີ້ວັດ 5:** ຈຳນວນບ້ານຢູ່ພາຍໃນ ຫຼື ຢູ່ອ້ອມຂ້າງ ປ່າປ້ອງກັນ ນໍ້າອືນ - ພູຫີນເຫຼັກໄຟ ຊຶ່ງເປັນຜູ້ໄດ້ຮັບຜົນປະໂຫຍດໂດຍກົງ ໃນການປັບປຸງຊີວິດການເປັນຢູ່ ຫຼື ທຶນຊ່ວຍເຫລືອສຳລັບການອະນຸລັກ (CCA) (ໃນນັ້ນມີແມ່ຍິງ | # | | ແຜນ | | 4 | 4 | 0 | 8 | ປະຈຳປີ | ບົດລາຍງານໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ທຶນສະໜັບສະໜູນການປັບປຸງຊີວິດການເປັນຢູ່ຂອງຊຸມຊົນ ແມ່ນໄດ້ກະກຽມແຜນພັດທະນາບ້ານເປົ້າໝາຍຈຳນວນ 8 ບ້ານໄດ້ສຳເລັດພ້ອມທີ່ຈະປ່ອຍທຶນໃຫ້ບ້ານ |
| | | | ປັບປຸງ | | 0 | 8 | 8 | 0 | | | | | | |

| | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|
| ຫຼື ອົງການ ແມ່ຍິງ 20%) (ແບບສະສົມ) (ຜົນໄດ້ຮັບລະດັບກາງ LENS2 ຕົວຊີ້ວັດ 2.1) | | | ຕົວຈິງ | | 0 | 8 | 8 | 8 | | | | | | |
| ຕົວຊີ້ວັດ 6 : ແມ່ຍິງມີສ່ວນຮ່ວມໃນການຄຸ້ມຄອງກອງທຶນພັດທະນາປັບປຸງຊີວິດການເປັນຢູ່ຂອງບ້ານ 8 ບ້ານ ເປົ້າໝາຍ ຈຳນວນ 40 ເປີເຊັນ | # | ບ້ານ | ແຜນ | | 0 | 8 | 0 | 0 | ປະຈຳປີ | ບົດລາຍງານ ໂຄງການ, M&E | ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ | ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ | | |
| | | | ປັບປຸງ | | 0 | 8 | 8 | 0 | | | | | | |
| | | | ຕົວຈິງ | | 0 | 25 | 40 | 0 | | | | | | |
| **ຕົວຊີ້ວັດ 7:** ພື້ນທີ່ພາຍໃນປ່າປ້ອງກັນ ນ້ຳອິນ - ພູຫີນເຫຼັກໄຟ ທີ່ ສະຖານະພາບຂອງປະຊາກອນປະເພດສັດປ່າ ແລະ ໄພຂົ່ມຂູ່ ໄດ້ຮັບການສຳຫຼວດ (ປະຈຳປີ). (ຜົນໄດ້ຮັບລະດັບກາງ LENS2 ຕົວຊີ້ວັດ 2.2) | (a) ຮຕ | ການສຳຫລວດສັດ | ແຜນ | | 10,000 | 12,000 | 16,000 | 6,000 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | 1. ລົງກວດກາລາດຕະເວນເຂດປ່າປ້ອງກັນ ນ້ຳອິນ-ພູຫີນເຫຼັກໄຟ ເຂດ ເມືອງຍົມມະລາດ ແລະ ເມືອງບົວລະພາ ແຂວງຄຳມ່ວນ ຈຳນວນ 10 ຄັ້ງ,ມີຜູ້ເຂົ້າຮ່ວມທັງໝົດ 27 ທ່ານ ມີ ບ້ານ ເຕືອນ,ທາງການ,ໂພນແກ້ວ,ແກ້ງມ່ວງ,ຈະກ້ອນ,ທ່າໂຈນ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ່ຍ. ພົບໄພຂົ່ມຂູ່ທັງໝົດ ( ກໍລະນີສະສົມ ) 100 ກໍລະນີ ໃນນັ້ນປະກອບມີ : ເຕົາໄຟເກົ່າ 8 ກໍລະນີ,ແຄມເກົ່າ 8 ກໍລະນີ,ແຮ້ວ 66 ກໍລະນີ ແລະ ຮອງຮ້ອຍສັດ 18 ຮ້ອຍ. |
| | | | ປັບປຸງ | | 6,000 | 13,000 | 16,000 | | | | | | | |
| | | | ຕົວຈິງ | | 6,000 | 8,000 | 13,000 | 4,000 | | | | | | |
| ຕົວຊີ້ວັດທີ່ 8: ພື້ນທີ່ພາຍໃນປ່າປ້ອງກັນ ນ້ຳອິນ - ພູຫີນເຫຼັກໄຟ ທີ່ ສະຖານະພາບຂອງພື້ນທີ່ປ່າໄມ້ຖືກສູນເສຍ ໄດ້ຮັບການສຳຫຼວດກວດກາ (ປະຈຳປີ). (ຜົນໄດ້ຮັບລະດັບກາງ LENS2 ຕົວຊີ້ວັດ 2.2) | (b) ຮຕ | ການສູນເສຍນື້ທີ່ປ່າໄດ້ຖືກສຳຫລວດ | ແຜນ | | 16,800 | | 16,800 | 16,800 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ທ້າຍ ເດືອນ 1 ທ້າຍປີ 2021 |
| | | | ປັບປຸງ | | 16,800 | | 16,800 | | | | | | | |
| | | | ຕົວຈິງ | | TBD | | 16,800 | 16,800 | | | | | | |
| ຕົວຊີ້ວັດທີ່ 9 : ກໍລະນີສິ່ງທີ່ເປັນໄພຄຸຄາມຕໍ່ສັດປ່າ ໄດ້ກວດກາພົບເຫັນໂດຍທີມງານກວດກາລາດຕະເວນ,ໜ່ວຍງານປ່າປ້ອງກັນນ້ຳອິນ-ພູຫີນເຫຼັກໄຟ | # | | ແຜນ | | 56 | 112 | 170 | 76 | | | | | | 1.ລົງກວດກາລາດຕະເວນເຂດປ່າປ້ອງກັນ ນ້ຳອິນ-ພູຫີນເຫຼັກໄຟ ເຂດ ເມືອງຍົມມະລາດ ແລະ ເມືອງບົວລະພາ ແຂວງຄຳມ່ວນ ຈຳນວນ 10 ຄັ້ງ ພົບໄພຂົ່ມຂູ່ທັງໝົດ ( ກໍລະນີສະສົມ ) 100 ກໍລະນີ ໃນນັ້ນປະກອບມີ : ເຕົາໄຟເກົ່າ 8 ກໍລະນີ,ແຄມເກົ່າ 8 ກໍລະນີ,ແຮ້ວ 66 ກໍລະນີ ແລະ ຮອງຮ້ອຍສັດ 18 ຮ້ອຍ. |
| | | | ປັບປຸງ | | 30 | 112 | 170 | | | | | | | |
| | | | ຕົວຈິງ | | 30 | 45 | 82 | 100 | | | | | | |
| **ຕົວຊີ້ວັດຜົນໄດ້ຮັບ ໂຄງການຍ່ອຍ** | | | | | | | | | | | | | | |
| ***ອົງປະກອບທີ I: ສ້າງຄວາມສາມາດໃນການວາງແຜນຄຸ້ມຄອງ ປ່າປ້ອງກັນ Nam-In Phouhinleckfai*** | | | | | | | | | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ** 1.1: ສ້າງໜ່ວຍງານຄຸ້ມຄອງປ່າປ້ອງກັນນ້ຳອິນ - ພູຫີນເຫຼັກໄຟ ໂດຍນຳໃຊ້ພະນັກ ງານລັດ ແລະ ອາສາສະໝັກໃຫ້ເປັນໜ່ວຍງານສະເພາະ ເພື່ອບໍລິຫານຈັດການໃຫ້ມີປະສິດຖິພາບ. | | | ແຜນ | 0 | 1 | 0 | 0 | 0 | | | | | | |
| | | | ປັບປຸງ | | 1 | 0 | 0 | 0 | | | | | | |
| | | | ຕົວຈິງ | | 1 | | | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 1.2:** ພະນັກງານປະຊາສຳພັນ ແລະ ຄູ່ຮ່ວມງານຂັ້ນເມືອງ ໄດ້ຮັບການຝຶກອົບຮົມວຽກງານການປະຊາສຳພັນຊຸມຊົນ | ຈຳນວນ ພະນັກງານ | | ແຜນ | 0 | 25 | 0 | 0 | 0 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 19 | 6 | 6 | | | | | | | |
| | | | ຕົວຈິງ | | 19 | 0 | 18 | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ** 1.3 ຈັດຝຶກອົບຮົມວຽກງານກອງທຶນໝູນວຽນ | ຄັ້ງ | | ແຜນ | | 1 | 2 | 0 | 0 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 0 | 2 | 1 | 0 | | | | | | |
| | | | ຕົວຈິງ | | 0 | 2 | 1 | | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ** 1.4 ຈັດຝຶກອົບຮົມ ການລ້ຽງສັດ, ທັດຖະກຳ ແລະ ປູກຝັງແບບຍືນຍົງ (ສຳລັບປະຊາຊົນ) | ຄັ້ງ | | ແຜນ | | 1 | 1 | 0 | 0 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 0 | 2 | 1 | 0 | | | | | | |
| | | | ຕົວຈິງ | | 0 | 2 | 1 | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ** 1.5 ຈັດທັດສະນະສຶກສາວຽກງານສັນຍາອະນຸລັກ (ສຳລັບຄະນະການຈັດຕັ້ງບ້ານ) | ຄັ້ງ | | ແຜນ | | 1 | 1 | 1 | 0 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 0 | 1 | 1 | | | | | | | |
| | | | ຕົວຈິງ | | 0 | 1 | 1 | 0 | | | | | | |

| | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|
| **ຕົວຊີ້ວັດ ໂຄງການຍ່ອຍ** 1.6 ຈັດທັດສະນະສຶກສາໃຫ້ ພະນັກງານ ແລະ ຄູ່ຮ່ວມງານ | ຄັ້ງ | | ແຜນ | 0 | 0 | 1 | 0 | 0 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 0 | 1 | 0 | | | | | | | |
| | | | ຕົວຈິງ | | 0 | 1 | | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ** 1.7 ຈັດປະຊຸມຄະນະຊີ້ນໍາ ໂຄງການຂັ້ນແຂວງ ແລະ ປະຊຸມປຶກສາຫາລື ຂັ້ນເມືອງ ແລະ ຄູ່ຮ່ວມງານ, ເຄືອຂ່າຍ ແລະ ໂຄງການຍ່ອຍ | ຄັ້ງ | | ແຜນ | | 2 | 2 | 1 | 1 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ກໍາລັງກະກຽມກອງປະຊຸມສະຫຼຸບປິດໂຄງການ |
| | | | ປັບປຸງ | | 2 | 2 | 2 | | | | | | | |
| | | | ຕົວຈິງ | | 2 | 2 | 4 | 0 | | | | | | |
| *ອົງປະກອບ 2:ສະໜັບສະໜູນ ການວາງແຜນຄຸ້ມຄອງ ປ່າສະຫງວນ ແລະ ປ່າປ້ອງກັນ ແບບມີສ່ວນຮ່ວມ ແລະ ການຄຸ້ມຄອງ ປ່າປ້ອງກັນ Nam-In Phouhinleckfai* | | | | | | | | | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.1:** ລົງປະຊາສໍາພັນປູກຈິດສໍານຶກ ກ່ຽວກັບການຄຸ້ມຄອງປ່າໄມ້ ຢູ່ຂັ້ນເມືອງ ແລະ ບ້ານ (ໂດຍຜ່ານການປະຊຸມບ້ານ, ວິທະຍຸທ້ອງຖິ່ນ, ປ້າຍ ຫລື ພາບໂຄສະນາ ແລະ ວັນສໍາຄັນຕ່າງໆ). | ຄັ້ງ | | ແຜນ | 0 | 4 | 4 | 4 | 2 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | 1. ລົງໂຄສະນາເຜີຍແຜ່ລະບຽບການສະກັດກັ້ນການຊື້ຂາຍ ສັດນໍ້າ ແລະ ສັດປ່າ ຕາມບ້ານເປົ້າໝາຍຂອງໂຄງການ ເຂດບ້ານກະຈາມນ້ອຍ, ກະຈາມໃຫ່ຍ ເມືອງ ບົວລະພາ ແລະ ເຂດບ້ານຫາດຊອນ,ບ້ານຈະກ້ອນ ແລະ ບ້ານ ທ່າໂຈ້ນ ເມືອງ ຍົມມະລາດ ເຊິ່ງ ມີຜູ້ເຂົ້າຮ່ວມທັງໝົດ 309 ຄົນ,ຍິງ 151 ຄົນ(ໃນນັ້ນລວມມີພະນັກງານກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນແຂວງ 4ທ່ານ,ຍິງ 2 ທ່ານ, ພະນັກງານຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງບົວລະພ,ຍົມມະລາດ2 ທ່ານ ; ພະນັກງານຫ້ອງການສະຫະພັນຍິງເມືອງ ບົວລະພາ- ຍົມມະລາດ 2 ທ່ານ ຫ້ອງການ ຖວທ ເມືອງ ຍົມມະລາດ-ບົວລະພາ 2 ທ່ານ ແລະ ຊາວບ້ານ 5 ບ້ານ ມີ 299 ຄົນ,ຍິງ146 ຄົນ)<br>2. ລົງປະຊາສໍາພັນປູກຈິດສໍານຶກກ່ຽວກັບການຄຸ້ມຄອງປ່າໄມ້ຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ເຂດ 6 ບ້ານເປົ້າໝາຍໃນນັ້ນມີ ບ້ານເຕືອນ,ໂພນແກ້ວ,ແກ້ງມ່ວງ,ຫາດຊອນ,ຈະກ້ອນ,ແກ້ງມ່ວງ ແລະ ບ້ານ ທ່າໂຈ້ນ ເມືອງ ຍົມມະລາດ ຄັ້ງວັນທີ 9-16 ເມສາ 2021 ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈໍານວນ 230 ທ່ານ,ຍິງ 58 ທ່ານ. |
| | | | ປັບປຸງ | | 4 | 4 | 4 | | | | | | | |
| | | | ຕົວຈິງ | | 4 | 4 | 4 | 2 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.2:** ສໍາເລັດການສ້າງລະບົບການລາດຕະເວນ (ທີມງານບັງຄັບໃຊ້ກົດໝາຍ ແລະ ທີມງານລາດຕະເວນຊຸມຊົນ ) ພ້ອມກວດກາລາດຕະເວນ | ເດືອນ | | ແຜນ | 0 | 4 | 4 | 4 | 10 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ລົງກວດກາລາດຕະເວນເຂດປ່າປ້ອງກັນ ນໍ້າອິນ-ພູຫີນເຫຼັກໄຟ ເຂດ ເມືອງຍົມມະລາດ ແລະ ເມືອງບົວລະພາ ແຂວງຄໍາມ່ວນ ຈໍານວນ 10 ຄັ້ງ,ມີຜູ້ເຂົ້າຮ່ວມທັງໝົດ 27 ທ່ານ ມີ ບ້ານ ເຕືອນ,ຫາງການ,ໂພນແກ້ວ,ແກ້ງມ່ວງ,ຈະກ້ອນ,ທ່າໂຈນ,ກະຈາມນ້ອຍ ແລະ ບ້ານກະຈາມໃຫ່ຍ. ພົບໄພຂົ່ມຂູ່ທັງໝົດ ( ກໍລະນີສະສົມ ) 18 ກໍລະນີ ເຊິ່ງພົບເຫັນ ແຮ່ວ 18 ດາງ . |
| | | | ປັບປຸງ | | 10 | 24 | 24 | | | | | | | |
| | | | ຕົວຈິງ | | 10 | 24 | 23 | 10 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.3:** ໄດ້ມີຕິດຕາມການເພີ່ມຂຶ້ນ ຂອງສັດປ່າ ແລະ ເນື້ອທີ່ປ່າໄມ້. | ຄັ້ງ/ປີ | | ແຜນ | 0 | 1 | 1 | 1 | 1 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ຕົ້ນປີ 2021ໄດ້ມີການສໍາຫຼວດ ແລະ ປະເມີນການເພີ່ມຂຶ້ນຂອງສັດປ່າ ແລະ ເນື້ອທີ່ປ່າໄມ້ ຮ່ວມກັບກົມປ່າໄມ້ |
| | | | ປັບປຸງ | | 1 | 1 | 1 | | | | | | | |
| | | | ຕົວຈິງ | | 1 | 1 | 0 | 1 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.4:** ສໍາເລັດການທົບທວນ ແລະ ການແບ່ງດິນ ແບ່ງປ່າຄືນ (ຈໍານວນ 8 ບ້ານ) | ບ້ານ | | ແຜນ | 0 | 4 | 4 | 0 | 0 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 4 | 4 | 2 | | | | | | | |
| | | | ຕົວຈິງ | | 4 | 2 | 2 | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.5:** ສ້າງກົດລະບຽບການຄຸ້ມຄອງ ແລະ ນໍາໃຊ້ປ່າໄມ້. (ຈໍານວນ 19 ບ້ານ). | ບ້ານ | | ແຜນ | 0 | 4 | 4 | 0 | 0 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 0 | 8 | 8 | | | | | | | |
| | | | ຕົວຈິງ | | 0 | 0 | 8 | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.6:** ສ້າງອາສາສະໝັກປ່າໄມ້ບ້ານ, ສັນຍາອະນຸລັກ ແລະ ກົດລະບຽບການຄຸ້ມຄອງປ່າໄມ້ ຂັ້ນບ້ານ. | ບ້ານ | | ແຜນ | 0 | 4 | 4 | 0 | 0 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 4 | 4 | 0 | | | | | | | |
| | | | ຕົວຈິງ | | 4 | 4 | | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.7:** ສໍາເລັດການລົງເກັບກໍາຂໍ້ມູນເສດຖະກິດ-ສັງຄົມ ແລະ ວາງແຜນພັດທະນາບ້ານ ຈໍານວນ 8 ບ້ານ. | ບ້ານ | | ແຜນ | | 4 | 4 | 0 | 0 | ປະຈໍາປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 4 | 4 | 0 | | | | | | | |
| | | | ຕົວຈິງ | | 4 | 4 | | 0 | | | | | | |

| | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|
| **ຕົວຊີ້ວັດ ໂຄງການຍ່ອຍ 2.8**: ສຳເລັດການເຮັດສັນຍາອະນຸລັກ ຈຳນວນ 8 ບ້ານ | ບ້ານ | | ແຜນ | | 4 | 4 | 0 | 0 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 0 | 8 | 0 | | | | | | | |
| | | | ຕົວຈິງ | | 0 | 8 | | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.9:** ສຳເລັດການ ສ້າງກອງທຶນໝູນວຽນ ຈຳນວນ 8 ບ້ານ | ບ້ານ | | ແຜນ | | 4 | 4 | 0 | 0 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | |
| | | | ປັບປຸງ | | 0 | 8 | 0 | | | | | | | |
| | | | ຕົວຈິງ | | 0 | 8 | | 0 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 2.10:** ຈັດຕັ້ງປະຕິບັດ ກິດຈະກຳຕ່າງໆ ກ່ຽວກັບການຟື້ນຟູຊີວິດ (ເປັນທຶນ ໃຫ້ແກ່ 8 ບ້ານ). | ບ້ານ | | ແຜນ | | 4 | 4 | 0 | 8 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | 1. ລົງຊຸກຍູ້ ແລະ ຕິດຕາມກອງທຶນອະນຸລັກບ້ານ ເຂດ8 ບ້ານເປົ້າໝາຍຂອງໂຄງການ ທີ່ເມືອງ ບົວລະພາ ແລະ ເມືອງ ຍົມມະລາດ ໃນຄັ້ງວັນທີ 29 ທັນວາ 2020 ຫາ 3 ມັງກອນ 2021 ຈຳນວນ 6 ທ່ານ,ຍິງ 1 ທ່ານ.(ໃນນັ້ນມີ ວິຊາການໂຄງການຍ່ອຍ 4 ທ່ານ,ຍິງ 1 ທ່ານ, ວິຊາການຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຍົມມະລາດ 1 ທ່ານ ແລະ ວິຊາການຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ບົວລະພາ 1 ທ່ານ).<br>2. ລົງຊຸກຍູ້-ຕິດຕາມ ກອງທຶນວັງສະຫງວນ ຂອງບ້ານເປົ້າໝາຍ 8 ບ້ານ ເຂດເມືອງ ຍົມມະລາດ ແລະ ເມືອງ ບົວລະພາ, ຄັ້ງວັນທີ 20-25 ກຸມພາ 2021 ຈຳນວນ 1 ທ່ານ ,ຍິງ0 ທ່ານ.<br>3. ລົງຊຸກຍູ້ ແລະ ຕິດຕາມການຈັດຕັ້ງແຜນພັດທະນາ ບ້ານເປົ້າໝາຍຂອງໂຄງການ ທີ່ບ້ານກະຈາມນ້ອຍ ແລະ ກະຈາມໃຫ່ຍ ເມືອງບົວລະພາ ຄັ້ງວັນທີ 3-8 ມີນາ 2021 ຈຳນວນ 2 ທ່ານ.<br>4. ລົງຊຸກຍູ້ ແລະ ຕິດຕາມແຜນກິດຈະກຳນ້ຳປະປາຊຸມຊົນຂອງບ້ານເປົ້າໝາຍ ເຂດເມືອງ ບົວລະພາ ແລະ ເມືອງ ຍົມມະລາດ ໃນຄັ້ງວັນທີ 29 ມີນາ ຫາ 01 ເມສາ 2021 ຈຳນວນ 3 ທ່ານ.<br>5. ລົງຊຸກຍູ້ຕິດຕາມປິດບັນຊີກອງທຶນອະນຸລັກຂອງບ້ານເປົ້າໝາຍ ຈຳນວນ 8 ບ້ານນັ້ນນັ້ນມີ ບ້ານ ກະຈາມນ້ອຍ,ບ້ານ ກະຈາມໃຫ່ ເມືອງ ບົວລະພາ ແລະ ບ້ານ ເຕືອນ,ບ້ານໂພນແກ້ວ,ບ້ານຫາດຊອນ,ບ້ານແກ້ງມ່ວງ,ບ້ານຈະກ້ອນ,ບ້ານທ່າໂຈ້ນເມືອງ ຍົມມະລາດ ໃນຄັ້ງວັນທີ 29 ມີນາ ຫາ 5 ເມສາ 2021 ຈຳນວນ 4 ທ່ານ,ຍິງ 2 ທ່ານ. |
| | | | ປັບປຸງ | | 0 | 8 | 8 | | | | | | | |
| | | | ຕົວຈິງ | | 0 | 8 | 8 | 8 | | | | | | |
| *ອົງປະກອບທີ 3. ການບໍລິຫານ ແລະ ຕິດຕາມ ໂຄງການຍ່ອຍ* | | | | | | | | | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 3.1:** ສ້າງບົດລາຍງານຄວາມຄືບໜ້າ 6 ເດືອນ ຂອງໂຄງການຍ່ອຍ, ຊຶ່ງໃນນັ້ນຄຸນນະພາບຂອງລາຍງານແຕ່ລະດ້ານ ການຕິດຕາມປະເມີນຜົນ , ການຈັດຊື້ ແລະ ການເງິນ ສອດຄ່ອງ ແລະ ຢູ່ໃນລະດັບທີ່ໜ້າພໍໃຈ (ປະຈຳປີ) | ບົດລາຍງານ | | ແຜນ | | 2-/2 | 2-/2 | 3-/3 | 1 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ບົດລາຍງານ 6 ເດືອນຕົ້ນປີ ແລະ ບົດສະຫຼູບປີ 2021. |
| | | | ປັບປຸງ | | 2-/2 | 2-/2 | 3-/3 | | | | | | | |
| | | | ຕົວຈິງ | | 2 | 2 | 2 | 1 | | | | | | |
| **ຕົວຊີ້ວັດ ໂຄງການຍ່ອຍ 3.2:** ບັນດາກິດຈະກຳຕ່າງໆ ກຳນົດໃນແຜນ ໄດ້ດຳເນີນການສຳເລັດ (ປະຈຳປີ) | % | | ແຜນ | | 50 | 75 | 85 | 95 | ປະຈຳປີ | ບົດລາຍງານ ໂຄງການ, M&E | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ | | ມີ 11 ກິດຈະກຳ,34 ໜ້າວຽກຍ່ອຍ ໃນນັ້ນ ໜ້າວຽກທີ່ສຳເລັດໃຫ້ (2 ຄະແນນ) ມີ 31 ໜ້າວຽກ , ( 1 ຄະແນນ)ກຳລັງຈັດຕັ້ງປະຕິບັດ ມີ 3 ໜ້າວຽກ ແລະ ( 0 ຄະແນນ ) 0 ໜ້າວຽກໄດ້ຈັດຕັ້ງປະຕິບັດ ດັ່ງນັ້ນ ຈຶ່ງສາມາດປະເມີນ ໄດ້ 95,59 ເປີເຊັນ ໃນ 6 ເດືອນຕົ້ນປີ 2021 |
| | | | ປັບປຸງ | | 65 | 75 | 90 | | | | | | | |
| | | | ຕົວຈິງ | | 65 | 79 | 93 | 100 | | | | | | |

# Nam In - Phou Hin lek fai

ເອກະສານຊ້ອນທ້າຍ 4: ຕົວຢ່າງຂອງ METT (ເຄື່ອງມືການຕິດຕາມການຄຸ້ມຄອງທີ່ມີປະສິດທິຜົນ)

ເບິ່ງເອກະສານຊ້ອນທ້າຍ 2 ຕົວຊີ້ວັດສໍາລັບ PDO- ລະດັບຕົວຊີ້ວັດ 1 ໜ້າທີ່. 16 ff. ສໍາລັບຂໍ້ມູນເພີ່ມເຕີມ.

METT ສໍາລັບເຂດປ່າປ້ອງກັນນໍ້າອິນ-ພູຫີນເຫຼັກໄຟ

ຈຸດປະສົງ 1: ສ້າງລະບົບການຄຸ້ມຄອງ ປ່າສະຫງວນ ໃຫ້ມີຄວາມຍືນຍົງ
ພາກທີ II: ເຄື່ອງມືການຕິດຕາມຄຸ້ມຄອງທີ່ມີປະສິດທິຜົນສໍາລັບ ປ່າສະຫງວນ

ຂໍ້ສັງເກດ: ກະລຸນາຕື່ມແບບຟອມເຄື່ອງມືການຕິດຕາມການຄຸ້ມຄອງທີ່ມີປະສິດທິຜົນສໍາລັບ ແຕ່ລະ ປ່າສະຫງວນ ທີ່ເປັນເປົ້າໝາຍຂອງ GEF ແລະ ສ້າງແຜນວຽກສະເພາະແຕ່ລະເຂດ.
ໂຄງສ້າງ ແລະ ເນື້ອໃນຂອງເຄື່ອງມືການຕິດຕາມ-ເປົ້າໝາຍ 1 ພາກທີ II:
ເຄື່ອງມືການຕິດຕາມແບ່ງອອກເປັນສອງພາກໃຫຍ່: ແບບຟອມຂໍ້ມູນ ແລະ ແບບຟອມການປະເມີນ. ຕ້ອງໄດ້ຕື່ມຂໍ້ມູນໃສ່ທັງສອງພາກ.
1. ຟອມຂໍ້ມູນ: ຟອມຂໍ້ມູນແບ່ງອອກເປັນສອງພາກແຍກກັນ:
Ü ຟອມຂໍ້ມູນ 1: ບັນທຶກລາຍລະອຽດຂອງການປະເມີນ ແລະ ຂໍ້ມູນພື້ນຖານກ່ຽວກັບພາກສະໜາມ, ເຊັ່ນ: ຊື່, ຂະໜາດ ແລະ ສະຖານທີ່ ແລະ ອື່ນໆ.
Ü ຟອມຂໍ້ມູນ 2: ສະໜອງຂໍ້ມູນທົ່ວໄປກ່ຽວກັບໄພຄຸກຄາມຕ່າງໆ ຢູ່ປ່າສະຫງວນ ທີ່ມີບັນຫາພົບພໍ້. ຢູ່ໃນແບບຟອມດັ່ງກ່າວນີ້ຜູ້ປະເມີນຈະຕ້ອງໄດ້ມີການກໍານົດບັນດາໄພຄຸກຄາມຕ່າງໆ ແລະ ຈັດລຽງອັນດັບຜົນກະທົບຕໍ່ກັບ ປ່າສະຫງວນ.
2. ແບບຟອມປະເມີນ: ວິທີການການປະເມີນແມ່ນອອກແບບໂດຍການສ້າງເປັນແບບສອບຖາມປະມານ 30 ຄໍາຖາມຢູ່ໃນຕາຕະລາງ ເຊິ່ງລວມມີສາມຖັນສໍາລັບບັນທຶກລາຍລະອຽດຂອງການປະເມີນ ແລະ ແຕ່ລະຖັນຕ້ອງໄດ້ຕື່ມຂໍ້ມູນໃສ່ໃຫ້ຄົບຖ້ວນ.

ສິ່ງສໍາຄັນ: ກະລຸນາອ່ານຄໍາແນະນໍາກ່ຽວກັບ GEF ຢູ່ເວບໄຊ ກ່ອນການຕື່ມຂໍ້ມູນຂອງທ່ານ

| ຟອມຂໍ້ມູນ 1: ການລາຍງານຄວາມຄືບໜ້າຢູ່ເຂດພື້ນທີ່ ປ່າສະຫງວນ | ກະລຸນາຕື່ມຄໍາຕອບຂອງທ່ານໃສ່ບ່ອນນີ້ | | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| | 2013 | 2014 | 2015 | 2016 | 2017 | 2018 | ຕົວຈິງ | 2019 | ຕົວຈິງ | 2020 | 2020 | |
| ຊື່, ການເຂົ້າຮ່ວມ ແລະ ລາຍລະອຽດທີ່ຢູ່ພົວພັນສໍາລັບບຸກຄົນທີ່ຮັບຜິດຊອບຕໍ່ການຕື່ມຂໍ້ມູນ METT (ອີເມວ ແລະ ອື່ນໆ.) | | | | | ທ່ານ. ພອງສະມຸດ ອິນຕະນາມ, ຮອງຫົວໜ ້າໜ່ວຍງານຄຸ້ມຄອງປ່າ ສະຫງວນ ຂອງ ແຂວງຄໍາມ່ວນ | | ທ່ານ. ພອງສະມຸດ ອິນຕະນາມ, ຮອງ ຫົວໜ້າໜ່ວຍງານ ຄຸ້ມຄອງປ່າ ສະຫງວນ ຂອງ ແຂວງຄໍາມ່ວນ | | ທ່ານ. ພອງສະ ມຸດ ອິນຕະນາມ, ຮອງຫົວໜ້າໜ ່ວຍງານຄຸ້ມຄອງ ປ່າສະຫງວນ ຂອງແຂວງຄໍາມ່ວນ | | | |
| ວັນທີ່ດໍາເນີນການປະເມີນ | | | | | 14-Feb-17 | | 4 ມັງກອນ 2019 | | | | | ເດືອນ ວັນທີ, ປີ (ຕົວຢ່າງ., ພຶດສະພາ 12, 2010) |
| ຊື່ຂອງພື້ນທີ່ປົກປັກຮັກສາ | ປ່າປ້ອງກັນແຂວງ ນໍ້າອິນ- ພູຫີນເຫຼັກໄຟ | | | | | | | | | | | ປ່າປ້ອງກັນນໍ້າອິນ-ພູຫີນເຫຼັກໄຟ, ທີ່ນອນຢູ່ໃນເຂດປ່າປ້ອງກັນແຂວງ ນໍ້າອິນ-ພູຫີນເຫັກໄຟ |
| WDPA site code (these codes can be found on www.unep-wcmc.org/wdpa/) | | | | | | | | | | | | |
| ລະຫັດພາກສະໜາມ WDPA ( ລະຫັດເຫລົ່ານີ້ສາມາມາດຫາໄດ້ຢູ່ໃນເວບໄຊ www.unep-wcmc.org/wdpa/) | | | | | | | | | | 1 | | 1: ລະດັບຊາດ<br>2: ອີງການ IUCN |

| | | | |
|---|---|---|---|
| ປະເທດ | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ | | |
| ທີ່ຕັ້ງຂອງເຂດປົກປັກຮັກສາ (ແຂວງ ແລະ ແຜນທີ່ອ້າງອີງຖ້າເປັນໄປໄດ້) |  | | |
| ວັນທີ່ສ້າງຕັ້ງ | 11/27/2014 | | |
| ລາຍລະອຽດເຈົ້າຂອງກຳມະສິດ (ກະລຸນາເລືອກ 1-4) | 1 | | 1: ລັດ<br>2: ເອກະຊົນ |
| ອົງການຄຸ້ມຄອງ | ກອງຄຸ້ມຄອງປ່າສະຫງວນສະຫງວນ ແລະ ປ່າປ້ອງກັນ | | |
| ຂະໜາດຂອງພື້ນທີ່ປົກປັກຮັກສາ(ເຮັກຕາ) | 16,898 | 16,898 | |
| ຈຳນວນພະນັກງານຖາວອນ (ທັງໝົດ/ຍິງ) | 9 | 10 / 3 | This figure is the total staff number of PFRM |
| ຈຳນວນພະນັກງານຊົ່ວຄາວ | 3 | 3 | |
| ງົບປະມານປະຈຳປີ (US$) ສຳລັບທຶນໝູນວຽນ (ການດຳເນີນງານ) – ບໍ່ລວມລາຍຈ່າຍເງິນເດືອນພະນັກງານ | 211,429 | 235,908 | ເປັນງົບປະມານທີ່ກຳລັງກະກຽມໂຄງການຂອງປີທີ່ 2 |
| ງົບປະມານປະຈຳປີ (US$)ສຳລັບວຽກງານປົກປັກຮັກສາ ຫຼື ທຶນເພີ່ມເຕີມ – ບໍ່ລວມລາຍຈ່າຍເງິນເດື - | - | | |
| ຄຸນຄ່າທີ່ສຳຄັນມີຫຍັງແດ່ສຳລັບພື້ນທີ່ທີ່ກຳນົດເປັນເຂດປົກປັກຮັກສາ | ຊັບພະຍາກອນປ່າໄມ້, ສັດປ່າ ແລະ ນ້ຳ | ແຫຼ່ງນ້ຳ, ຊັບພະຍາກອນ ປ່າໄມ້ ແລະ ສັດປ່າ | |
| ລາຍການຂອງເປົ້າໝາຍຕົ້ນຕໍຂອງການຄຸ້ມຄອງເຂດປົກປັກຮັກສາມີດັ່ງລຸ່ມນີ້: | | | |
| ເປົ້າໝາຍຄຸ້ມຄອງ 1 | ການອະນຸລັກລະບົບນິເວດ ແລະ ແຫຼ່ງນ້ຳ | | |
| ເປົ້າໝາຍຄຸ້ມຄອງ 2 | ການອານຸລັກ ຊີວະນາໆພັນ | | |
| No. of people involved in completing assessment | 27 | | |

| | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|
| ລວມທັງ: (ກະລຸນາເລືອກ 1-8) | | | | | 1-8 ພາກສ່ວນ | | 2 | | 8 | | | 1: ຜູ້ຈັດການ ປ່າສະຫງວນ PA<br>2: ພະນັກງານ PA<br>3: ພະນັກງານຕົວແທນ PA ອື່ນໆ<br>4: ຜູ້ໃຫ້ທຶນ<br>5: ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ<br>6: ຊ່ຽວຊານຈາກພາຍນອກ<br>7: ຊຸມຊົນທ້ອງຖິ່ນ<br>8: ອື່ນໆ |

| | | | |
|---|---|---|---|
| **ຂໍ້ມູນກ່ຽວກັບການກຳນົດທີ່ຕັ້ງຂອງສາກົນ** | ກະລຸນາຕື່ມຄຳຕອບຂອງທ່ານໃສ່ບ່ອນນີ້ | | |
| | | | |
| **UNESCO ສະຖານທີ່ມໍລະດົກໂລກ (ເບິ່ງ: http://whc.unesco.org/en/list)** | ບໍ່ມີ | | |
| ວັນທີ | | | |
| ສະຖານທີ | | | |
| ພື້ນທີ | | | |
| ແຜນທີອ້າງອີງ | | | |
| ເງື່ອນໄຂການກຳນົດທີ່ຕັ້ງ | | | (ຕົວຢ່າງ: ເງື່ອນໄຂ i ຫາ x) |
| ການຊີ້ແຈງກ່ຽວກັບຄຸນຄ່າທີ່ອຸດົມສົມບູນ | | | |
| | | | |
| **ສະຖາທີ່ Ramsar (ເບິ່ງ: http://ramsar.wetlands.org)** | ບໍ່ມີ | | |
| ວັນທີ | | | |
| ສະຖານທີ | | | |
| ພື້ນທີ | | | |
| ຕົວເລກອ້າງອີງ | | | |
| ເຫດຜົນການກຳນົດທີ່ຕັ້ງ (ເບິ່ງ Ramsar ເອກະສານຂໍ້ມູນ) | | | |
| | | | |
| UNESCO Man and Biosphere Reserves (see: http://www.unesco.org/new/en/natural- | ບໍ່ມີ | | |
| ວັນທີ | | | |

| | | | |
|---|---|---|---|
| ສະຖານທີ | | | |
| ແຜນທີອ້າງອີງ | | | ພື້ນທີ່ທັງໝົດ, ແກນກາງ, ຮອບນອກ, ແລະ ການຫັນປ່ຽນ |
| ເງື່ອນໄຂການກຳນົດທີ່ຕັ້ງ | | | |
| ການບັນລຸຕາມສາມໜ້າທີ່ການຂອງ MAB | | | ການອະນຸລັກ,ການພັດທະນາ ແລະ ການສະໜັບສະໜູນດ້ານການຂົນສົ່ງ |
| | | | |
| **ກະລຸນາລະບຸປະເພດທີ່ຕັ້ງອື່ນໆ (ເຊັ່ນ. ມໍລະດົກຂອງ ASEAN , Natura 2000) ແລະ ຂໍ້ອ້າງອີງຕ່າງໆລຸ່ມນີ້** | ບໍ່ມີ | | |
| | | | ຊື່ |
| | | | ລາຍລະອຽດ |
| | | | |
| | | | ຊື່ |
| | | | ລາຍລະອຽດ |
| | | | |
| | | | ຊື່ |
| | | | ລາຍລະອຽດ |

**ຟອມຂໍ້ມູນ 2: ໄພຄຸກຄາມຕໍ່ກັບ ປ່າສະຫງວນ (ກະລຸນາຕື່ມຂໍ້ມູນໃສ່ແບບຟອມຂໍ້ມູນກ່ຽວກັບໄພຄຸກຄາມ ແລະ ການປະເມີນສຳລັບແຕ່ລະ ປ່າສະຫງວນ ຂອງໂຄງການ).**

ກະລຸນາເລືອກໄພຄຸກຄາມທັງໝົດທີ່ກ່ຽວຂ້ອງທີ່ມີຢູ່ໃນປະຈຸບັນວ່າຢູ່ໃນລະດັບສູງ, ລະດັບກາງ ຫຼື ລະດັບຕໍ່າ. ຈັດລຽງອັນດັບໄພຄຸກຄາມຢູ່ໃນລະດັບສູງກໍລະນີມີການເຊື່ອມຄຸນຄ່າທີ່ຮ້າຍແຮງ; ອັນດັບກາງກໍລະນີມີບາງຜົນກະທົບທາງລົບ ແລະ ຈັດຢູ່ໃນອັນດັບຕໍ່າກໍລະນີມີໄພຄຸກຄາມໃນປະຈຸບັນແຕ່ບໍ່ມີຜົນກະທົບຮ້າຍແຮງ ຫຼື ບໍ່ມີໄພຄຸກຄາມ ຫຼື ບໍ່ພົບເຫັນຢູ່ໃນພື້ນທີ່ຂອງໂຄງການ.

**1. ການພັດທະນາເພື່ອການຄ້າ ແລະ ທີ່ຢູ່ອາໃສ ໃນ ປ່າສະຫງວນ**

ໄພຄຸກຄາມຈາກການຕັ້ງຖິ່ນຖານຂອງມະນຸດ ຫຼື ການນຳໃຊ້ດິນກະສິກຳໂດຍການກຳນົດມາດຖານການວັດແທກທີ່ມີຄວາມຍືນຍົງ

